ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

LAO PEOPLE'S DEMOCRATIC REPUBLIC

ກະຊວງ ອຸດສາຫະກຳ ແລະ ການຄ້າ

ກົມຊັບສິນທາງປັນຍາ

MINISTRY OF INDUSTRY AND COMMERCE
DEPARTMENT OF INTELLECTUAL PROPERTY

# ຈົດໝາຍເຫດທາງລັດຖະການ

# ກ່ຽວກັບ ຊັບສິນທາງປັນຍາ

# ຢູ່ ສປປ ລາວ

# OFFICIAL GAZETTE ON INTELLECTUAL PROPERTY IN LAO PDR

ສະບັບທີ (Vol.) 234

# ພາກທີ I
# (Part I)
# ສິດທິບັດ ແລະ ອະນຸສິດທິບັດ
# (Patent and Petty Patent)

## 1. ຄໍາຮ້ອງ
## (Applications)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(21) ເລກທີ ຄໍາຮ້ອງ (Filing Number)

(22) ວັນທີ ຍື່ນຄໍາຮ້ອງ (Filing Date)

(30) ວັນທີ ບຸລິມະສິດ (Priority Date)

(43) ວັນທີເຜີຍແຜ່ (Publication Date)

(51) ໝວດ (International Patent Classification)

(54) ຊື່ຂອງການປະດິດ (Title)

(57) ບົດຄັດຫຍໍ້ (Abstract)

(71) ຊື່ ແລະ ທີ່ຢູ່ ເຈົ້າຂອງສິດທິບັດ ແລະ ອະນຸສິດທິບັດ (Owner Name and Address)

(72) ຊື່ຜູ້ປະດິດ (Inventor Name)

(74) ຊື່ຕົວແທນ (Representative Name)

(55) ຮູບພາບ (Pictures)

# ພາກທີ I
# (Part I)
# ສິດທິບັດ ແລະ ອະນຸສິດທິບັດ
# (Patent and Petty Patent)

## 2. ຜົນການອອກສິດທິບັດ ແລະ ອະນຸສິດທິບັດ
## (Grant of Patents and Petty Patents)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(11) ເລກທີ (Grant Number)

(21) ເລກທີ ຄໍາຮ້ອງ (Filing Number)

(22) ວັນທີຍື່ນຄໍາຮ້ອງ (Filing Date)

(30) ວັນທີ ບຸລິມະສິດ (Priority Date)

(43) ວັນທີເຜີຍແຜ່ (Publication Date)

(51) ໝວດ (International Patent Classification)

(54) ຫົວຂໍ້ການປະດິດ (Title)

(57) ບົດຄັດຫຍໍ້ (Abstract)

(71) ຊື່ ແລະ ທີ່ຢູ່ ເຈົ້າຂອງສິດທິບັດ ແລະ ອະນຸສິດທິບັດ (Owner Name and Address)

(72) ຊື່ຜູ້ປະດິດ (Inventor Name)

(74) ຊື່ຕົວແທນ (Representative Name)

(55) ຮູບພາບ (Pictures)

# ພາກທີ I
# (Part I)
# ສິດທິບັດ ແລະ ອະນຸສິດທິບັດ
# (Patent and Petty Patent)

## 3. ການປ່ຽນແປງ
## (Changes)

# ພາກທີ I
# (Part I)
# ສິດທິບັດ ແລະ ອະນຸສິດທິບັດ
# (Patent and Petty Patent)

## 4. ການດັດແກ້
## (Amendments)

# ພາກທີ II
# (Part II)
# ແບບອຸດສາຫະກຳ
# (Industrial Design)

## 1. ຄຳຮ້ອງ
## (Applications)

**ຄຳອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(21) ເລກທີ ຄຳຮ້ອງ (Filing Number)

(22) ວັນທີ ຄຳຮ້ອງ (Filing Date)

(30) ວັນທີ ບຸລິມາສິດ (Priority Date)

(51) ໝວດ (Locarno Classification)

(54) ຊື່ຂອງແບບອຸດສາຫະກຳ (Title)

(71) ຊື່ ແລະ ທີ່ຢູ່ ຂອງເຈົ້າຂອງ (Owner Name and Address)

(72) ຊື່ຜູ້ອອກແບບ (Designer Name)

(74) ຊື່ຕົວແທນ (Representative Name)

(55) ຮູບພາບ (Pictures)

# ພາກທີ II
# (Part II)
# ແບບອຸດສາຫະກຳ
# (Industrial Design)

## 2. ຜົນການຈົດທະບຽນ
## (Registration)

**ຄຳອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(11) ເລກທີ ຈົດທະບຽນ (Registration Number)

(15) ວັນທີ ຈົດທະບຽນ (Registration Date)

(21) ເລກທີ ຍື່ນຄຳຮ້ອງ (Filing Number)

(22) ວັນທີ ຍື່ນຄຳຮ້ອງ (Filing Date)

(30) ວັນທີ ບຸລິມາສິດ (Priority Date)

(17) ວັນທີ ໝົດອາຍຸ (Expiration Date)

(51) ໝວດ (Locarno Classification)

(54) ຊື່ຂອງແບບອຸດສາຫະກຳ (Title)

(71) ຊື່ ແລະ ທີ່ຢູ່ ຂອງເຈົ້າຂອງ (Owner Name and Address)

(72) ຊື່ຜູ້ອອກແບບ (Designer Name)

(74) ຊື່ຕົວແທນ (Representative Name)

(55) ຮູບພາບ (Pictures)

# ພາກທີ II
# (Part II)
# ແບບອຸດສາຫະກຳ
# (Industrial Design)

## 3. ການປ່ຽນແປງ
## (Changes)

# ພາກທີ II
# (Part II)

# ແບບອຸດສາຫະກຳ
# (Industrial Design)

## 4. ການດັດແກ້
## (Amendments)

# ພາກທີ III
# (Part III)
# ເຄື່ອງໝາຍການຄ້າ
# Trademarks

## 1. ຄຳຮ້ອງ
## (Applications)

**ຄຳອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄຳຮ້ອງ (Number of the application)

(220) ວັນທີ ຄຳຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄຳຮ້ອງ (Name and Address of applicant)

# ພາກທີ III
# (Part III)
# ເຄື່ອງໝາຍການຄ້າ
# Trademarks

## 2. ຜົນການຈົດທະບຽນ
## (Registration)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄໍາຮ້ອງ (Number of the application)

(220) ວັນທີ ຄໍາຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ (Name and Address of applicant)

(111) ເລກທີ ການຈົດທະບຽນເຄື່ອງໝາຍການຄ້າ (Number of the registration)

(180) ວັນໝົດອາຍຸຂອງການຈົດທະບຽນ (Expiration date of the registration)

# ພາກທີ III
# (Part III)
# ເຄື່ອງໝາຍການຄ້າ
# Trademarks

## 3. ການຕໍ່ອາຍຸ
## (Renewal)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**

**(Introduction of Codes)**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄໍາຮ້ອງ (Number of the application)

(220) ວັນທີ ຄໍາຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ (Name and Address of applicant)

(111) ເລກທີການຈົດທະບຽນເຄື່ອງໝາຍການຄ້າ (Number of the registration)

(180) ການຕໍ່ອາຍຸການຈົດທະບຽນ (Expiration date of the renewal)

# ພາກທີ III
# (Part III)

# ເຄື່ອງໝາຍການຄ້າ
# Trademarks

## 4. ການປ່ຽນແປງ
## (Changes)

# ພາກທີ III
# (Part III)
# ເຄື່ອງໝາຍການຄ້າ
# Trademarks

## 5. ການດັດແກ້
## (Amendments)

# ພາກທີ IV
# (Part IV)
# ເຄື່ອງໝາຍການຄ້າຜ່ານລະບົບມາດຣິດ
# Trademarks via Madrid Protocol

## 1. ຄຳຮ້ອງ
## (Applications)

**<u>ຄຳອະທິບາຍກ່ຽວກັບລະຫັດຫຍໍ້</u>**
**<u>(Introduction of Codes)</u>**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄຳຮ້ອງ (Number of the application)

(220) ວັນທີ ຄຳຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄຳຮ້ອງ (Name and Address of applicant)

( 540 )

**FRUITESSE**

(511) 32 and 33

(210) No. M/0905411

(220) 18/08/2023

(732) IPack B.V.
Cruquiusweg 98 W NL-1019 AJ Amsterdam,
Netherlands

( 540 )

**BONDS**

(511) 34

(210) No. M/1655824

(220) 19/10/2023

(732) Philip Morris Products S.A.
Quai Jeanrenaud 3 CH-2000 Neuchâtel,
Switzerland

( 540 )

Partyfly

(511) 05, 32 and 33

(210) No. M/1727586

(220) 31/10/2023

(732) Philipp Heift; Christine Heift and Corinna Heift
Goldenbergstr. 46 50374 Erftstadt, Germany; Goldenbergstr. 46 50374 Erftstadt, Germany and Goldenbergstr. 46 50374 Erftstadt, Germany

( 540 )

**APPLE VISION PRO**

(511) 18

(210) No. M/1760861

(220) 28/07/2023

(732) Apple Inc.
One Apple Park Way Cupertino CA 95014, United States of America

( 540 )

ObAroi

(511) 30

(210) No. M/1760868

(220) 04/07/2023

(732) Obaroi Seafood Co., Ltd.
299/1-2 Moo 18, Pak Chong Subdistrict
30130 Pak Chong District, Nakhon
Ratchasima, Thailand

( 540 )

CerviCARE AI

(511) 09 and 44

(210) No. M/1760895

(220) 05/10/2023

(732) NTL HEALTHCARE Co., Ltd
710-713, 42 Changeop-ro, Sujeong-gu
Seongnam-si, Gyeonggi-do,
Republic of Korea

( 540 )

STAL

(511) 07 and 11
(210) No. M/1760953
(220) 10/07/2023
(732) ZHEJIANG SANTIAN OIL FILTER CO., LTD.
HARDWARE AUTO SCIENCE AND TECHNOLOGY PARK, LONGQUAN CITY 325000 ZHEJIANG, CHINA

( 540 )

Driscoll's

(511) 31
(210) No. M/1761003
(220) 05/10/2023
(732) DRISCOLL'S, INC.
345 WESTRIDGE DRIVE WATSONVILLE CA 95076, United States of America

( 540 )

JOYOUS

(511) 03, 04, 08, 10, 21, 25 and 26

(210) No. M/1761049

(220) 13/10/2023

(732) STAR RICH ENTERPRISE CO., LTD.
450/8 RAMA 3 ROAD, BANG KHLO SUB-DISTRICT 10120 BANG KHO LAEM DISTRICT, BANGKOK, THAILAND

( 540 )

VINSA

(511) 09, 24, 25, 27, 28 and 35

(210) No. M/1761173

(220) 05/04/2023

(732) NGUYEN HO THU
No. 12 Trinh Hoai Duc, Cat Linh ward, Dong Da district Hanoi city, Vietnam

( 540 )

**JADEVER**

(511) 07, 09, 12, 17, 20 and 21

(210) No. M/1761256

(220) 24/04/2023

(732) CHONGQING AMITY MACHINERY CO., LTD.
28-5# No. 200 Zhongshan 2 Road, Yuzhong District 400014 Chongqing, China

( 540 )

JOYOUS

(511) 08

(210) No. M/1761314

(220) 26/09/2023

(732) STAR RICH ENTERPRISE CO., LTD.
450/8 RAMA 3 ROAD, BANG KHLO SUB-DISTRICT 10120 BANG KHO LAEM DISTRICT, BANGKOK, THAILAND

( 540 )

Eurotech

(511) 06

(210) No. M/1761398

(220) 30/08/2023

(732) CONG TY CO PHAN TAP DOAN EUROTECH
Km so 3+500, duong Nguyen Van Linh, to 1, Phuong Thach Ban, Quan Long Bien Thanh pho, Ha Noi, Vietnam

( 540 )

Prairie Berry

(511) 03, 08, 10, 18, 21, 25 and 26

(210) No. M/1761410

(220) 13/10/2023

(732) Wingate Corporation Co., Ltd.
450/10 Rama 3 Road, Bang Khlo Sub-district 10120 Bang Kho Laem District, Bangkok, Thailand

( 540 )

(511) 09

(210) No. M/1761485

(220) 11/08/2023

(732) SHENZHEN BLUEO INNOVATION TECHNOLOGY CO., LTD.
ROOM 0605, BUILDING 1, VANKE HONG SQUARE BUILDING, LUOGANG COMMUNITY, BUJI SUB-DISTRICT, LONGGANG DISTRICT SHENZHEN, CHINA

( 540 )

(511) 09

(210) No. M/1761606

(220) 26/09/2023

(732) Apple Inc.
One Apple Park Way Cupertino CA 95014, United States of America

( 540 )

Pragon Blend

(511) 34

(210) No. M/1761732

(220) 18/10/2023

(732) VENUS MANAGEMENT PTE. LTD.
111 NORTH BRIDGE ROAD, #21-03
PENINSULA PLAZA 179098, SINGAPORE

( 540 )



(511) 30

(210) No. M/1761839

(220) 17/08/2023

(732) FERRERO S.P.A.
PIAZZALE PIETRO FERRERO 1 I-12051
ALBA, CUNEO, ITALY

( 540 )

**BARENIA**

(511) 03

(210) No. M/1761869

(220) 04/10/2023

(732) COMPTOIR NOUVEAU DE LA PARFUMERIE
23 rue Boissy d'Anglas F-75008 PARIS, France

# ພາກທີ IV
# (Part IV)
# ເຄື່ອງໝາຍການຄ້າຜ່ານລະບົບມາດຣິດ
# Trademarks via Madrid Protocol

## 2. ຜົນການຈົດທະບຽນ
## (Registration)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**
**(Introduction of Codes)**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄໍາຮ້ອງ (Number of the application)

(220) ວັນທີ ຍື່ນຄໍາຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ (Name and Address of applicant)

(111) ເລກທີການຈົດທະບຽນເຄື່ອງໝາຍການຄ້າ (Number of the registration)

(180) ວັນໝົດອາຍຸຂອງການຈົດທະບຽນ (Expiration date of the registration)

# ພາກທີ IV
# (Part IV)
# ເຄື່ອງໝາຍການຄ້າຜ່ານລະບົບມາດຣິດ
# Trademarks via Madrid Protocol

## 3. ຜົນການຕໍ່ອາຍຸ
## (Renewal)

**ຄໍາອະທິບາຍກ່ຽວກັບລະຫັດຫຍໍ້**
**(Introduction of Codes)**

(540) ເຄື່ອງໝາຍການຄ້າ (Trademark)

(511) ໝວດ (Nice Classification)

(210) ເລກທີ ຄໍາຮ້ອງ (Number of the application)

(220) ວັນທີ ຍື່ນຄໍາຮ້ອງ (Date of filing of the application)

(732) ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ (Name and Address of applicant)

(111) ເລກທີການຈົດທະບຽນເຄື່ອງໝາຍການຄ້າ (Number of the registration)

(180) ການຕໍ່ອາຍຸຂອງການຈົດທະບຽນ (Expiration date of the renewal)

# ພາກທີ IV
# (Part IV)
# ເຄື່ອງໝາຍການຄ້າຜ່ານລະບົບມາດຣິດ
# Trademarks via Madrid Protocol

## 4. ການປ່ຽນແປງ
## (Changes)

# ພາກທີ IV
# (Part IV)
# ເຄື່ອງໝາຍການຄ້າຜ່ານລະບົບມາດຣິດ
# Trademarks via Madrid Protocol

## 5. ການດັດແກ້
## (Amendments)

# ພາກທີ V
# (Part V)
# ຖິ່ນກຳເນີດ
# Geographical Indications

## 1. ຄຳຮ້ອງ
## (Applications)

# ພາກທີ V
# (Part V)
# ຖິ່ນກຳເນີດ
# Geographical Indications

## 2. ຜົນການຈົດທະບຽນ
## (Registration)

## ການເຜີຍແຜ່ຜົນການຈົດທະບຽນຖິ່ນກຳເນີດ

- ອີງໃສ່ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 39/ສພຊ ລົງວັນທີ 15 ພະຈິກ 2017;
- ອີງໃສ່ມາດຕາ 13 ຂອງຂໍ້ຕົກລົງ ວ່າດ້ວຍຖິ່ນກຳເນີດ ສະບັບເລກທີ 0440/ອຄ, ລົງວັນທີ 30 ມີນາ 2023.

## ຂໍ້ມູນ ກ່ຽວກັບ ການຈົດທະບຽນຖິ່ນກຳເນີດ

| | | |
|---|---|---|
| 1 | ຊື່ຖິ່ນກຳເນີດ: | ໂກຍັກ Cognac |
| 2 | ປະເທດຕົ້ນກຳເນີດ: | ຝຣັ່ງ |
| 3 | ປະເພດສິນຄ້າ: | ເຫຼົ້າແວງ (Wine spirit) |
| 4 | ໃບທະບຽນເລກທີ: | LA/GI/009 |
| 5 | ຜູ້ຍື່ນຄຳຮ້ອງ: | Bureau National Interprofessionnel du Cognac |
| 6 | ທີ່ຢູ່ຜູ້ຮ້ອງຂໍ: | 23 Allées Bernard Guionnet, BP 90018 - 16101 Cognac Cedex - France |
| 7 | ວັນທີຈົດທະບຽນ: | 16 ຕຸລາ 2023 |
| 8 | ວັນທີຍື່ນຄຳຮ້ອງ: | 29 ສິງຫາ 2022 |
| 9 | ຄຳຮ້ອງເລກທີ: | 09 |

**ໝາຍເຫດ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເບິ່ງຂໍ້ມູນ ເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ ເຂົ້າໄກ່ນ້ອຍ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ.

# ການເຜີຍແຜ່ຜົນການຈົດທະບຽນຖິ່ນກຳເນີດ

- ອີງໃສ່ ມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 39/ສພຊ ລົງວັນທີ 15 ພະຈິກ 2017;
- ອີງໃສ່ມາດຕາ 13 ຂອງຂໍ້ຕົກລົງ ວ່າດ້ວຍຖິ່ນກຳເນີດ ສະບັບເລກທີ 0440/ອຄ, ລົງວັນທີ 30 ມີນາ 2023.

## ຂໍ້ມູນ ກ່ຽວກັບ ການຈົດທະບຽນຖິ່ນກຳເນີດ

| | | |
|---|---|---|
| 1 | ຊື່ຖິ່ນກຳເນີດ: | ເຂົ້າໄກ່ນ້ອຍຫົວພັນ ຫຼື "Khao Kai Noi Houaphan" |
| 2 | ປະເທດຕົ້ນກຳເນີດ: | ສປປ ລາວ |
| 3 | ປະເພດສິນຄ້າ: | ເຂົ້າ |
| 4 | ໃບທະບຽນເລກທີ: | LA/GI/010 |
| 5 | ຜູ້ຍື່ນຄຳຮ້ອງ: | ສະມາຄົມສົ່ງເສີມເຂົ້າໄກ່ນ້ອຍ ແຂວງຫົວພັນ |
| 6 | ທີ່ຢູ່ຜູ້ຮ້ອງຂໍ: | ເຮືອນເລກທີ 245, ໜ່ວຍ 11 ບ້ານພັນໄຊ, ເມືອງຊຳເໜືອ, ແຂວງ ຫົວພັນ , ສປປ ລາວ |
| 7 | ວັນທີຈົດທະບຽນ: | 16 ຕຸລາ 2023 |
| 8 | ວັນທີຍື່ນຄຳຮ້ອງ: | 14 ມິຖຸນາ 2023 |
| 9 | ຄຳຮ້ອງເລກທີ: | 11 |

**ໝາຍເຫດ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເບິ່ງຂໍ້ມູນ ເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ ເຂົ້າໄກ່ນ້ອຍ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ.

# ເອກະສານຄຸນລັກສະນະສະເພາະ ຖິ່ນກຳເນີດ ທີ່ໄດ້ຮັບການປົກປ້ອງ ຂອງເຂົ້າໄກ່ນ້ອຍຫົວພັນ

## 1. ຊື່ທີ່ໄດ້ຮັບການປົກປ້ອງເປັນຖິ່ນກຳເນີດ ເຊິ່ງເປັນຊື່ທີ່ນາໃຊ້ໃນທາງການຄ້າ ຫຼື ຊື່ເອີ້ນຜະລິດຕະພັນ.

- ຊື່ເປັນພາສາລາວ: ເຂົ້າໄກ່ນ້ອຍຫົວພັນ
- ຊື່ເປັນພາສາລາຕິນ: Khao Kai Noi Houaphan
- ຊື່ເປັນພາສາອັງກິດ: Houaphan Small Chicken Rice
- ຊື່ເປັນພາສາຝຼັ່ງເສດ: riz petit poussin de Houaphan

ເຂົ້າໄກ່ນ້ອຍ ແມ່ນຊື່ພັນເຂົ້າ ທີ່ຜູ້ຜະລິດ ແລະ ຜູ້ບໍລິໂພກຄົນລາວໄດ້ນຳໃຊ້ມາຫຼາຍເຊັ່ນຄົນແລ້ວ. ຊື່ "ເຂົ້າໄກ່ນ້ອຍຫົວພັນ" ຫຼື Houaphan Small Chicken Rice ເມື່ອແປມາເປັນພາສາອັງກິດ ເປັນຊື່ທີ່ຕິດພັນກັບຄຸນນະພາບທີ່ມີລັກສະນະສະເພາະ ແລະ ມີຊື່ສຽງ ຍ້ອນແຫຼ່ງທີ່ມາທາງພູມມີສາດເປັນສ່ວນສຳຄັນ. ຊື່ ດັ່ງກ່າວ ກຳນົດໃຊ້ສະເພາະກັບ ເຂົ້າໄກ່ນ້ອຍ ທີ່ມາຈາກ 02 ເມືອງຄື: ເມືອງຊຳເໜືອ ແລະ ເມືອງວຽງໄຊ ຂອງແຂວງຫົວພັນ ຕັ້ງຢູ່ເຂດພາກເໜືອຂອງ ສປປ ລາວ ເປັນເຂດທີ່ມີລັກສະນະພູມສັນຖານພູສູງ ແລະ ມີອາກາດເຢັນ.

## 2. ລັກສະນະຂອງຜະລິດຕະພັນ: ລັກສະນະທາງກາຍະພາບ, ເຄມີ, ຈຸລິນຊີວະວິທະຍາ ແລະ ກິ່ນ-ລົດຊາດ.

ເຂົ້າໄກ່ນ້ອຍ ເປັນປະເພດເຂົ້າໜຽວ ທີ່ມີຄຸນນະພາບທາງໂພສະນາການດີເລີດ. ເປັນແນວພັນເຂົ້າອາຍຸຍາວ ແລະ ຕ້ອງການນ້ຳໜ້ອຍ ແຕ່ຕ້ອງການແສງແດດຫຼາຍ.

ການສຶກສາທາງດ້ານສາຍພັນ ໄດ້ສະແດງໃຫ້ເຫັນວ່າ ມີຄວາມຫຼາກຫຼາຍຂອງເຂົ້າໄກ່ນ້ອຍ ເຊິ່ງສາມາດຈັດອອກເປັນຫຼາຍກຸ່ມ. ເຂົ້າໄກ່ນ້ອຍ ທີ່ຮັບຮອງໃນພື້ນທີ່ຖິ່ນກຳເນີດ ຖືກຈັດແບ່ງອອກເປັນ 4 ກຸ່ມ ໂດຍຜູ້ມີສ່ວນຮ່ວມໃນຕ່ອງໂສ້ມູນຄ່າໄດ້ ດັ່ງນີ້:

- ເຂົ້າໄກ່ນ້ອຍດຳ
- ເຂົ້າໄກ່ນ້ອຍແດງ
- ເຂົ້າໄກ່ນ້ອຍລາຍ
- ເຂົ້າໄກ່ນ້ອຍເຫຼືອງ ປະກອບມີສອງສາຍພັນຍ່ອຍຄື ເຂົ້າໄກ່ນ້ອຍເຫຼືອງເມັດນ້ອຍ ແລະ ເຂົ້າໄກ່ນ້ອຍເຫຼືອງເມັດໃຫຍ່ ເຊິ່ງມີບາງທ້ອງຖິ່ນເອີ້ນວ່າເຂົ້າໄກ່ນ້ອຍຂາວ.

## 2.1 ລັກສະນະທາງກາຍະພາບຂອງເມັດເຂົ້າເປືອກ:

- ເຂົ້າໄກ່ນ້ອຍດຳ:
    - ເປັນສີນ້ຳຕານ ແລະ ມີລາຍລ່ອງເປັນສີເຫຼືອງອ່ອນ.
    - ນ້ຳໜັກ: 1,000 ເມັດ = 29.82 ຫາ 36.44 ກຼາມ
    - ຄວາມຍາວ = 6.58 ຫາ 8.04 ມມ
    - ຄວາມກວ້າງ = 3.19 ຫາ 3.89 ມມ
    - ຄວາມໜາ = 2.03 ຫາ 2.49 ມມ




- ເຂົ້າໄກ່ນ້ອຍແດງ:
    - ເມັດສີນ້ຳຕານອອກແດງເລັກນ້ອຍ
    - ນ້ຳໜັກ: 1,000 ເມັດ = 27.5 ຫາ 33.61 ກຼາມ
    - ຄວາມຍາວ = 6.27 ຫາ 7.67 ມມ
    - ຄວາມກວ້າງ = 3.38 ຫາ 4.14 ມມ
    - ຄວາມໜາ = 2.21 ຫາ 2.71 ມມ




- ເຂົ້າໄກ່ນ້ອຍລາຍ:
    - ສີເຫຼືອງອ່ອນ, ປົນລາຍລ່ອງດຳຈາງໆ ແລະ ປາຍເມັດເປັນສີດຳ
    - ນ້ຳໜັກ: 1,000 ເມັດ = 28.82 ຫາ 35.22 ກຼາມ
    - ຄວາມຍາວ = 6.25 ຫາ 7.63 ມມ
    - ຄວາມກວ້າງ = 3.36 ຫາ 4.1 ມມ
    - ຄວາມໜາ = 2.12 ຫາ 2.6 ມມ



- ເຂົ້າໄກ່ນ້ອຍເຫຼືອງ, ມີ 2 ສາຍພັນທີ່ແຍກຕາມເມັດເຂົ້າເປືອກ:
    - ເຂົ້າໄກ່ນ້ອຍເຫຼືອງເມັດນ້ອຍ
        - ເມັດເຫຼືອງ
        - ນໍ້າໜັກ: 1,000 ເມັດ = 25.43 ຫາ 31.08 ກຼາມ
        - ຄວາມຍາວ = 6.10 ຫາ 7.46 ມມ
        - ຄວາມກວ້າງ = 3.32 ຫາ 3.94 ມມ
        - ຄວາມໜາ = 1.98 ຫາ 2.42 ມມ




    - ເຂົ້າໄກ່ນ້ອຍເຫຼືອງເມັດໃຫຍ່
        - ເມັດເຫຼືອງ
        - ນໍ້າໜັກ: 1,000 ເມັດ = 29.28 ຫາ 35.78 ກຼາມ
        - ຄວາມຍາວ = 7.0 ຫາ 8.56 ມມ
        - ຄວາມກວ້າງ = 3.39 ຫາ 4.15 ມມ
        - ຄວາມໜາ = 2.26 ຫາ 2.76 ມມ




90% ຂອງເມັດເຂົ້າເປືອກຈະຕ້ອງມີການວັດແທກ ເພື່ອໃຫ້ສອດຄ່ອງກັບຄ່າຕົວເລກຂ້າງເທິງ.

## 2.2 ກິ່ນ-ລົດຊາດ ແລະ ລັກສະນະທາງກາຍະພາບຂອງເມັດເຂົ້າສານ:

ເຂົ້າກ້ອງໄກ່ນ້ອຍ (ສີນໍ້າຕານ) ໄດ້ຈາກການສີເປືອກເມັດເຂົ້າສ່ວນໃດໜຶ່ງອອກ ແຕ່ຍັງມີເຈ້ຍເມັດເຂົ້າເຫຼືອຢູ່. ເຂົ້າກ້ອງໄກ່ນ້ອຍ ມີສີນໍ້າຕານອ່ອນ (Light-beige). ເຂົ້າສານໄກ່ນ້ອຍທີ່ຜ່ານການສີ ຈະເປັນເມັດນ້ອຍປ້ອມມີ ສີຂາວຫາສີເຫຼືອງອ່ອນ (ຕາມຮູບປະກອບ) ໂດຍມີຄວາມແຕກຕ່າງກັນເລັກນ້ອຍ ຂຶ້ນກັບຊະນິດພັນນັ້ນ. ລັກສະນະຂອງເຂົ້າສານໄກ່ນ້ອຍຫົວ ພັນ ທັງສີ່ຊະນິດຕົ້ນຕໍ ທີ່ຜ່ານການສີແລ້ວມີດັ່ງນີ້:


*ເຂົ້າກ້ອງໄກ່ນ້ອຍ*


*ເຂົ້າສານໄກ່ນ້ອຍ*

- ເຂົ້າໄກ່ນ້ອຍດໍາ ທີ່ສີແລ້ວ ຈະມີສີຂາວ, ກິ່ນຫອມອ່ອນ. ເມື່ອໜຶ້ງສຸກ ຈະຫອມຫຼາຍ.
    - ນໍ້າໜັກ: 1,000 ເມັດ = 19.22 ຫາ 23.42 ກຼາມ
    - ຄວາມຍາວ = 4.51 ຫາ 5.51 ມມ

- ຄວາມກວ້າງ = 2.67 ຫາ 3.27 ມມ
- ຄວາມໜາ = 1.70 ຫາ 2.08 ມມ

- ເຂົ້າໄກ່ນ້ອຍແດງ ທີ່ສີແລ້ວ ຈະມີສີຂາວ, ມີກິ່ນຫອມເລັກນ້ອຍ. ເມື່ອໜຶ້ງສຸກ ກໍ່ຈະມີກິ່ນຫອມເລັກນ້ອຍ.
  - ນໍ້າໜັກ: 1,000 ເມັດ = 18.68 ຫາ 22.83 ກຼາມ
  - ຄວາມຍາວ = 4.16 ຫາ 5.08 ມມ
  - ຄວາມກວ້າງ = 2.8 ຫາ 3.42 ມມ
  - ຄວາມໜາ = 1.81 ຫາ 2.21 ມມ
- ເຂົ້າໄກ່ນ້ອຍລາຍ ທີ່ສີແລ້ວ ຈະມີສີເຫຼືອງຂຸ່ນ, ມີກິ່ນຫອມຫຼາຍ. ເມື່ອໜຶ້ງສຸກ ຈະມີກິ່ນຫອມຫຼາຍ ແລະ ຫວານເລັກນ້ອຍ.
  - ນໍ້າໜັກ: 1,000 ເມັດ = 18.93 ຫາ 23.13 ກຼາມ
  - ຄວາມຍາວ = 4.77 ຫາ 5.83 ມມ
  - ຄວາມກວ້າງ = 2.75 ຫາ 3.36 ມມ
  - ຄວາມໜາ = 1.84 ຫາ 2.24 ມມ
- ເຂົ້າໄກ່ນ້ອຍເຫຼືອງ ທີ່ສີແລ້ວ ຈະມີສີຂາວ. ເມື່ອໜຶ້ງສຸກແລ້ວ ຈະມີກິ່ນຫອມສົມຄວນ.
  - ເຂົ້າສານໄກ່ນ້ອຍເຫຼືອງເມັດນ້ອຍ:
    - ນໍ້າໜັກ: 1,000 ເມັດ = 17.8 ຫາ 21.16 ກຼາມ
    - ຄວາມຍາວ = 4.90 ມມ
    - ຄວາມກວ້າງ = 2.62 ຫາ 3.2 ມມ
    - ຄວາມໜາ = 1.67 ຫາ 2.05 ມມ
  - ເຂົ້າສານໄກ່ນ້ອຍເຫຼືອງເມັດໃຫຍ່:
    - ນໍ້າໜັກ: 1,000 ເມັດ = 18.93 ຫາ 23.13 ກຼາມ
    - ຄວາມຍາວ = 4.47 ຫາ 5.47 ມມ
    - ຄວາມກວ້າງ = 2.58 ຫາ 3.16 ມມ
    - ຄວາມໜາ = 1.82 ຫາ 2.22 ມມ

ເມື່ອເຂົ້າໄກ່ນ້ອຍຫົວພັນ ໜຶ້ງສຸກ ຈະມີຄວາມນຸ້ມໃນເວລາຫຍໍ້າ, ປັ້ນຕິດກັນ ແຕ່ບໍ່ໜຽວຕິດມື, ມີກິ່ນຫອມ ແລະ ຫວານເລັກນ້ອຍ. ກິ່ນຫອມຂອງເຂົ້າໜຶ້ງສຸກ ແມ່ນຄ້າຍຄືກັນກັບຕົ້ນພືດທີ່ເກີດຕາມຫ້ວຍນໍ້າ ບ່ອນທີ່ມີອາກາດເຢັນ ຂອງແຂວງຫົວພັນ ໂດຍຄົນທ້ອງຖິ່ນເອີ້ນຕົ້ນພືດນັ້ນວ່າ " ຕົ້ນອື້ມ" (ຊື່ທາງວິທະຍາສາດ: *Strobilanthes nivea bremek*, ເບິ່ງຮູບດ້ານຂ້າງ).



*ຕົ້ນອື້ມ*

## 2.3 ຂໍ້ກຳນົດສຳລັບເຂົ້າທີ່ສີແລ້ວ:

- ຄວາມຊຸ່ມບໍ່ເກີນ 14%.
- ປະລິມານ (ໄລ່ເປັນນໍ້າໜັກ) ຂອງເມັດຫັກຄວນໜ້ອຍກວ່າ 7.5% ຂອງງວດຜະລິດຕະພັນ (Batch) ໃດໜຶ່ງ. ເມັດເຂົ້າຫັກ ໝາຍເຖິງ ຂະໜາດເມັດເຂົ້າ ທີ່ພາຍຫຼັງສີແລ້ວຂະໜາດຍັງເຫຼືອນ້ອຍກວ່າ 80% ຂອງຂະໜາດເມັດເຂົ້າປົກກະຕິ.
- ບໍ່ອະນຸຍາດໃຫ້ເອົາເຂົ້າໄກ່ນ້ອຍຫົວພັນ ຊະນິດພັນຕ່າງກັນ ປົນກັນໄດ້.
- ເຂົ້າໄກ່ນ້ອຍ ສາມາດປົນກັບເຂົ້າໜຽວຊະນິດອື່ນໄດ້ບໍ່ໃຫ້ເກີນ 2%.
- ບໍ່ໃຫ້ປົນກັບເຂົ້າຊະນິດອື່ນໆທີ່ບໍ່ແມ່ນເຂົ້າໜຽວ.
- ໃນ 1 ກິໂລເຂົ້າສານ ໃຫ້ມີເມັດເຂົ້າເປືອກປົນບໍ່ເກີນ 1 ເມັດ

## 3. ການກຳນົດທາງດ້ານພູມມິສາດ

- "ເຂົ້າໄກ່ນ້ອຍຫົວພັນ" ປູກຢູ່ 02 ເມືອງຄື ເມືອງຊຳເໜືອ ແລະ ເມືອງວຽງໄຊ ສະເພາະພື້ນທີ່ ທີ່ມີລະດັບຄວາມສູງເໜືອລະດັບໜ້ານໍ້າທະເລແຕ່ 650 ຫາ 1,250 ແມັດ.

ແຜນທີ່ເຂດຜະລິດເຂົ້າໄກ່ນ້ອຍ ຢູ່ແຂວງຫົວພັນ




## 4. ສິ່ງທີ່ພິສູດວ່າ ຜະລິດຕະພັນມີແຫຼ່ງທີ່ມາຈາກພື້ນທີ່ທາງພູມມິສາດທີ່ກໍານົດ: ການກວດກາຢ້ອນກັບ.

- ການບັນທຶກໂດຍນັກກວດກາ:
  - ຈໍານວນຄອບຄົວ ທີ່ປູກເຂົ້າໄກ່ນ້ອຍຫົວພັນ
  - ເນື້ອທີ່ການຜະລິດເຂົ້າໄກ່ນ້ອຍຫົວພັນ ຂອງແຕ່ລະຄອບຄົວ
  - ລາຍຊື່ຊາວນາຜູ້ທີ່ຜະລິດເຂົ້າໄກ່ນ້ອຍຫົວພັນ
  - ປະລິມານຜົນຜະລິດ ຂອງຄອບຄົວ, ຜົນໄດ້ຮັບ (ໂຕນ/ເຮັກຕາ), ວັນທີ ແລະ ສະຖານທີ່ເກັບກ່ຽວ (ຈຸດພິກັດຈີພີເອັດສ໌ ຫຼື ຢ່າງໜ້ອຍໃຫ້ມີ ຊື່ຕອນດິນ ຫຼື ລະຫັດຕອນດິນນາ).
  - ປະລິມານເຂົ້າເປືອກໄກ່ນ້ອຍແຕ່ລະຊະນິດ (ເຂົ້າໄກ່ນ້ອຍແດງ, ດໍາ, ລາຍ ແລະ ເຫຼືອງ) ຂອງແຕ່ລະຄອບຄົວ ທີ່ໄດ້ຂາຍໃຫ້ຜູ້ເກັບຊື້ ຫຼື ໂຮງສີ: ທີ່ມີການບັນທຶກ ຊື່ຊາວນາ, ຈໍານວນທີ່ຂາຍ, ເລກລະຫັດງວດທີ່ຂາຍ, ຊື່ ແລະ ເບີໂທຕິດຕໍ່ຂອງຜູ້ຊື້ (ຊື່ ແລະ ເບີໂທ) ແລະ ວັນທີດໍາເນີນທຸລະກໍາ ຊື້ຂາຍ.
- ບັນທຶກໂດຍຜູ້ປະກອບການ (ຜູ້ເກັບຊື້, ພໍ່ຄ້າຄົນກາງ, ໂຮງສີ, ຜູ້ຫຸ້ມຫໍ່, ຜູ້ຂາຍຍົກ ແລະ ຜູ້ຂາຍຍ່ອຍ):
  - ປະລິມານເຂົ້າເປືອກໄກ່ນ້ອຍຫົວພັນ ແຕ່ລະຊະນິດທີ່ໄດ້ຊື້ (ບັນຈຸລົງໃນຖົງພ້ອມຕິດກາໝາຍຖິ່ນກໍາເນີດ) ຕ້ອງມີເລກລະຫັດງວດ, ຊື່ ແລະ ເບີໂທຜູ້ຂາຍ, ວັນທີດໍາເນີນທຸລະກໍາ ຊື້ຂາຍ.
  - ປະລິມານເຂົ້າສານໄກ່ນ້ອຍຫົວພັນ ທີ່ໄດ້ຊື້ ແລະ ຂາຍ (ບັນຈຸລົງໃນຖົງພ້ອມຕິດກາໝາຍຖິ່ນກໍາເນີດ) ຕ້ອງມີເລກລະຫັດງວດ, ຊື່ ແລະ ເບີໂທຜູ້ຊື້, ວັນທີດໍາເນີນທຸລະກໍາ ຊື້ຂາຍ.

## 5. ລາຍລະອຽດ ກ່ຽວກັບ ຂັ້ນຕອນການຜະລິດ

ຂັ້ນຕອນການຜະລິດ ໃນພື້ນທີ່ທາງພູມສາດທີ່ກໍານົດ ແມ່ນມີດັ່ງລຸ່ມນີ້:

- **ການຄັດເລືອກເມັດພັນເຂົ້າ:**

  - ຄັດເລືອກເມັດພັນເຂົ້າໂດຍຜູ້ຜະລິດຢູ່ທ້ອງຖິ່ນ ຈາກແປງນາຂອງຕົນເອງ. ຂະບວນການຄັດເລືອກເມັດພັນເຂົ້າ ແມ່ນອີງໃສ່ການປະເມີນຕອນນາທັງໝົດ ແລ້ວເລືອກເອົາຮວງເຂົ້າທີ່ສົມບູນດີ. ຈາກນັ້ນ ນຳເອົາຮວງເມັດພັນໄປຕາກແດດ ເປັນເວລາ 2-4 ວັນ ແລະ ນຳໄປຟາດດ້ວຍມື ຫຼື ດ້ວຍຈັກ. ນຳເອົາເມັດພັນບັນຈຸ ໃສ່ໃນ ກະສອບ ທີ່ສະອາດ, ເກັບມ້ຽນໄວ້ໃນເຮືອນ ຫຼື ໃນເລົ້າເຂົ້າທີ່ມີຄວາມສູງຈາກພື້ນ ຢ່າງໜ້ອຍ 10 ຊມ.
  - ອະນຸຍາດໃຫ້ນຳໃຊ້ເມັດພັນທີ່ຜະລິດພາຍໃນພື້ນທີ່ ທີ່ກຳນົດເປັນຖິ່ນກຳເນີດ ແລະ ປະຕິບັດຕາມຂັ້ນຕອນຂ້າງເທິງນີ້ ເທົ່ານັ້ນ.

- **ການປູກ**

ມີເຕັກນິກທີ່ຫຼາກຫຼາຍ ສຳລັບການປູກເຂົ້າໄກ່ນ້ອຍຫົວພັນ:

- ການກະກຽມກ້າ:
  - ໄລຍະຕົກກ້າ: ແມ່ນເຮັດໃນລະຫ່ວາງຕົ້ນເດືອນເມສາ ຫາ ທ້າຍເດືອນພຶດສະພາ;
  - ການກຽມດິນ: ກໍລະນີເຮັດຕາກ້າ, ໄຖບົ່ມຕາກ້າປະໄວ້ 1 ຫາ 2 ອາທິດ ແລ້ວຈຶ່ງໄຖ ແລະ ຄາດ, ແລ້ວເຮັດເປັນໜານກ້າ.
  - ການກຽມດິນ: ກໍລະນີຫວ່ານໃສ່ໜອງ(ໜອງປາ), ຕ້ອງຂ່າງນ້ຳອອກໜອງໃຫ້ແຫ້ງ ຕາກດິນໜອງໄວ້ 1-5 ວັນ ຈຶ່ງຫວ່ານເມັດພັນເຂົ້າກ້າ;
- ການກະກຽມເມັດພັນ:
  - ປະລິມານເມັດພັນທີ່ໃຊ້ຕົກກ້າ:
    - ສຳລັບການປັກດຳທີ່ຈະນຳໃຊ້ກ້າກິບດຽວ: ໃຊ້ 10 ຫາ 15 ກລ ຕໍ່ເຮັກຕາ ຂອງເນື້ອທີ່ນາ.
    - ສຳລັບການປັກດຳທີ່ຈະນຳໃຊ້ຕົ້ນກ້າ 2-4 ຕົ້ນຕໍ່ສຸມ: ໃຊ້ 40 ຫາ 60 ກລ ຕໍ່ເຮັກຕາຂອງເນື້ອທີ່ນາ.
    - ໄດ້ໝ່າເມັດພັນ 2-3 ມື້ ແລະ ສະເດັດນ້ຳໄວ້ 2-3 ມື້.
  - ອະນຸຍາດໃຫ້ນຳໃຊ້ປຸຍເຄມີໄດ້ ໃນໄລຍະການກະກຽມຕົກກ້າ ຈົນເຖິງ ວັນທີ 31 ເດືອນທັນວາ 2027. ພາຍຫຼັງສິ້ນສຸດໄລຍະເວລາດັ່ງກ່າວນີ້ແລ້ວ ຫ້າມນຳໃຊ້ປຸຍເຄມີຢ່າງເດັດຂາດ.
- ການກະກຽມດິນເພື່ອປັກດຳ
  - ປ່ອຍນ້ຳເຂົ້ານາໃຫ້ຖ້ວມໜ້າດິນພໍປະມານ ແລ້ວຈຶ່ງໄຖ.
  - ໃສ່ຝຸ່ນຊີວະພາບ (ຝຸ່ນຄອກ, ຝຸ່ນຂຽວ, ຝຸ່ນບົ່ມ, ນ້ຳໝັກຊີວະພາບ), ບໍ່ໃຊ້ປຸຍເຄມີ.
- ການປັກດຳ
  - ຕົ້ນກ້າສຳລັບປັກດຳ ຕ້ອງມີອາຍຸຢ່າງໜ້ອຍ 25 ວັນ ແລະ ຫຼາຍສຸດບໍ່ໃຫ້ກາຍ 40 ວັນ.
  - ປັກດຳດ້ວຍມື.
  - ໃສ່ກ້າ 1-4 ກິບຕໍ່ຊຸມ, ໄລຍະຫ່າງລະຫວ່າງສຸມ 20 ຫາ 30 ຊມ.

- ການດູແລຮັກສາແປງນາ
  - ຮັກສາລະດັບນໍ້າໃຫ້ພຽງພໍໃນນາເຂົ້າຈົນຮອດລະດູການເກັບກ່ຽວ.
  - ເສຍຫຍ້າດ້ວຍມື ແລະ/ຫຼື ເຄື່ອງຈັກ .
  - ບໍ່ນໍາໃຊ້ປຸ໋ຍເຄມີ ໃນນາເຂົ້າ.
  - ບໍ່ນໍາໃຊ້ຢາຂ້າແມງໄມ້ ຫຼື ຢາຂ້າຫຍ້າ.
- ການເກັບກ່ຽວ
  - ປ່ອຍນໍ້າອອກຈາກແປງນາໃຫ້ແຫ້ງ 1-2 ອາທິດ ກ່ອນກ່ຽວເຂົ້າ.
  - ກ່ຽວເຂົ້າດ້ວຍມື ຫຼື ເຄື່ອງຈັກ.
  - ອາຍຸຕົ້ນເຂົ້າຢ່າງໜ້ອຍແມ່ນ 120 ຫາ 180 ວັນ ນັບຈາກມື້ຕົກກ້າ ຈຶ່ງສາມາດເກັບກ່ຽວໄດ້.
  - ເຂົ້າທີ່ກ່ຽວແລ້ວຕ້ອງຕາກແດດ 3-5 ວັນ ຈຶ່ງກູ້ໄປໄວ້ບ່ອນທີ່ກະກຽມໄວ້.
  - ຟາດເຂົ້າດ້ວຍມື ຫຼື ເຄື່ອງຈັກຟາດເຂົ້າ.

- **ການເກັບມ້ຽນ:**
  - ເກັບມ້ຽນເຂົ້າເປືອກໄກ່ນ້ອຍຫົວພັນ ໄວ້ໃນເລົ້າທີ່ສະອາດ ຫຼື ບັນຈຸໃສ່ໃນເປົາແລ້ວເກັບໄວ້ບ່ອນທີ່ສະອາດ ປ້ອງກັນບໍ່ຫ້ຖືກຝົນ ແລະ ລົມພັດແຮງ, ເກັບໄວ້ບ່ອນທີ່ບໍ່ມີຄວາມສ່ຽງຈາກສັດຕູພືດ ຫຼື ການປົນເປື້ອນ ອື່ນໆ.
  - ເຂົ້າເປືອກໄກ່ນ້ອຍຫົວພັນ ຖິ່ນກຳເນີດ ຕ້ອງເກັບມ້ຽນແຍກຈາກເຂົ້າຊະນິດອື່ນ ລວມທັງເຂົ້າໄກ່ນ້ອຍທີ່ບໍ່ໄດ້ຜະລິດຕາມຂະບວນການຖິ່ນກຳເນີດ, ເພື່ອຫຼີກລ້ຽງການປົນກັນລະຫວ່າງເຂົ້າໄກ່ນ້ອຍຫົວພັນ ຖິ່ນກຳເນີດ ແລະ ເຂົ້າຊະນິດອື່ນໆ.
  - ໄລຍະການເກັບມ້ຽນສູງສຸດບໍ່ໃຫ້ເກີນ 12 ເດືອນ ນັບແຕ່ມື້ເກັບກ່ຽວ.
  - ກະສອບທີ່ໃຊ້ບັນຈຸ: ຫ້າມນຳໃຊ້ກະສອບປຸ໋ຍ ຫຼື ຖົງທີ່ໄດ້ນຳໃຊ້ບັນຈຸແນວອື່ນມາແລ້ວ (ເຊັ່ນ ກະສອບຫົວອາຫານສັດ).
  - ບັນຈຸໃສ່ໃນກະສອບທີ່ສະອາດ ແລະ ບໍ່ໃຫ້ມີໂຕໜັງສືທີ່ຂຽນໃສ່ກະສອບວ່ານຳໃຊ້ສຳລັບສິ່ງອື່ນ (ເຊັ່ນ ກະສອບຫົວອາຫານສັດ) ແລະ ຢູ່ໃນສະພາບດີ (ກະສອບບໍ່ໃຫ້ມີຮູ ຫຼື ຂາດ) ເພື່ອຫຼີກລ້ຽງຄວາມສ່ຽງໃດໜຶ່ງທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍ ແລະ ປົນເປື້ອນກັບຢາງພູາດຕິກ ແລະ ສິ່ງຕົກຄ້າງອື່ນໆ.
  - ກະສອບທີ່ບັນຈຸເຂົ້າໄກ່ນ້ອຍຫົວພັນ ຕ້ອງຂຽນເລກລະຫັດສະເພາະໃສ່ໃຫ້ຈະແຈ້ງ (ເລກງວດ).

ຂະບວນການຕ່າງໆ ພາຍຫຼັງການເກັບກ່ຽວ ສາມາດດຳເນີນພາຍໃນ ແລະ ນອກເຂດພື້ນທີ່ຖິ່ນກຳເນີດ, ແຕ່ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດຕ່າງໆ ດັ່ງນີ້:

- **ການຂົນສົ່ງເຂົ້າເປືອກ ແລະ ການເກັບມ້ຽນໄວ້ຢູ່ຈຸດໂຮງສີ**:
  - ການຂົນສົ່ງເຂົ້າເປືອກໄປຫາຈຸດໂຮງສີ: ຕ້ອງປ້ອງກັນບໍ່ໃຫ້ເປົາເຂົ້າເປືອກໄກ່ນ້ອຍຫົວພັນ ຖືກຂີ້ຝຸ່ນ ແລະ ຄວາມຊຸ່ມ.

- ເປົາເຂົ້າໄກ່ນ້ອຍຫົວພັນ ຕ້ອງເກັບມ້ຽນຕ່າງຫາກ ແຍກຈາກເຂົ້າຊະນິດອື່ນ ລວມທັງເຂົ້າໄກ່ນ້ອຍທົ່ວໄປທີ່ບໍ່ໄດ້ຜະລິດຕາມຂະບວນການຖິ່ນກຳເນີດ, ບ່ອນເກັບມ້ຽນ ຕ້ອງຂຽນປ້າຍຕິດໃຫ້ຈະແຈ້ງ.
- ເກັບມ້ຽນເປົາເຂົ້າເປືອກໄວ້ເທິງຫ້າງ.

- **ການແປຮູບເປັນເຂົ້າສານ.**

  ການແປຮູບເຂົ້າສານ ສາມາດເຮັດໄດ້ດ້ວຍ 02 ວິທີລຸ່ມນີ້:

  1) ຕຳດ້ວຍຄົກມອງ (ມອງນໍ້າ ຫຼື ມອງຕຳດ້ວຍແຮງງານຄົນ)
  2) ການສີເຂົ້າ:
     - ສີເຂົ້າດ້ວຍໂຮງສີ.
     - ການບຳລຸງ ແລະ ອານາໄມໂຮງສີ: ກວດກາ ແລະ ອານາໄມໂຮງສີໃນແຕ່ລະປີ ກ່ອນການສີເຂົ້າລະດູການໃໝ່ຈະມາເຖິງ; ໃຫ້ມີການບັນທຶກຂໍ້ມູນການບຳລຸງຮັກສາໂຮງສີ ຢ່າງເປັນປົກກະຕິ.
     - ກ່ອນຈະມີການສີເຂົ້າໄກ່ນ້ອຍຫົວພັນແຕ່ລະຄັ້ງ ຕ້ອງມີການລ້າງໂຮງສີ ພາຍຫຼັງໄດ້ສີເຂົ້າຊະນິດອື່ນກ່ອນໜ້າ.
     - ບໍ່ອະນຸຍາດໃຫ້ເອົາເຂົ້າໄກ່ນ້ອຍຫົວພັນຊະນິດຕ່າງ (ແດງ, ດຳ, ເຫຼືອງ ແລະ ລາຍ) ປົນກັນ.
     - ອັດຕາສ່ວນເຂົ້າສານທີ່ຈະໄດ້ຮັບແມ່ນຢູ່ລະຫວ່າງ 65% ຫາ 80% ຂອງນໍ້າໜັກເຂົ້າເປືອກ (ລວມທັງເຂົ້າແຕກຫັກ).

- **ການເກັບມ້ຽນເຂົ້າສານຢູ່ຈຸດໂຮງສີ:**
  - ເກັບມ້ຽນເຂົ້າສານໄກ່ນ້ອຍຫົວພັນ ໄວ້ໃນເປົາທີ່ສະອາດ ທີ່ມີໝາຍເລກລະຫັດສະເພາະ (ຕິດເລກລະຫັດງວດຜະລິດໃສ່ເປົາ). ເປົາທີ່ໃຊ້ບັນຈຸ ຕ້ອງບໍ່ເຄີຍນຳໃຊ້ບັນຈຸຜະລິດຕະພັນອື່ນມາກ່ອນ; ຫຼື ເກັບມ້ຽນໄວ້ຊາມທີ່ສະອາດ ຫຼື ພາຊະນະບັນຈຸທີ່ສະອາດ.
  - ເປົາ ແລະ ພາຊະນະທີ່ໃຊ້ບັນຈຸເຂົ້າໄກ່ນ້ອຍຫົວພັນ ຕ້ອງເກັບມ້ຽນວາງໄວ້ເທິງຫ້າງ ໂດຍມີຄວາມສູງຫ່າງຈາກພື້ນ 10 ຊມ ຂຶ້ນໄປ.
  - ເປົາ ແລະ ພາຊະນະທີ່ໃຊ້ບັນຈຸເຂົ້າໄກ່ນ້ອຍຫົວພັນ ຕ້ອງເກັບມ້ຽນແຍກສະເພາະຕ່າງຫາກ ພ້ອມມີປ້າຍຕິດໃຫ້ຈະແຈ້ງຢູ່ຈຸດໂຮງສີ. ບ່ອນເກັບມ້ຽນດັ່ງກ່າວ ຕ້ອງແຍກຈາກບ່ອນເກັບມ້ຽນເຂົ້າຊະນິດອື່ນໆ.

## 6. ລາຍລະອຽດກ່ຽວກັບຄວາມເຊື່ອມໂຍງ ລະຫວ່າງ ຄຸນນະພາບ, ສື່ສຽງ ແລະ ຄຸນລັກສະນະອື່ນໆຂອງຜະລິດຕະພັນ ກັບແຫຼ່ງທີ່ມາທາງພູມມີສາດ.

- **ປັດໃຈດ້ານສະພາບແວດລ້ອມ.**

ເງື່ອນໄຂດ້ານຄວາມສູງຈາກລະດັບໜ້ານໍ້າທະເລ, ລັກສະນະສະເພາະຂອງດິນ, ອາກາດ ແລະ ການນຳໃຊ້ແນວພັນເຂົ້າທ້ອງຖິ່ນ ເປັນປັດໃຈສຳຄັນທີ່ມີຜົນຕໍ່ການຜະລິດ ແລະ ລັກສະນະສະເພາະຂອງເຂົ້າໄກ່ນ້ອຍຫົວພັນ ໃນຂອບເຂດພື້ນທີ່ຖິ່ນກຳເນີດດັ່ງກ່າວ.

ລັກສະນະພື້ນທີ່ທາງພູມມີສາດຂອງແຂວງຫົວພັນ ແມ່ນເຂດທີ່ຢູ່ໃນຄວາມສູງລະຫວ່າງ 650 ຫາ 1,250 ແມັດເໜືອລະດັບໜ້ານໍ້າທະເລ, ແລະ ມີລະດັບດິນຮາບພຽງ ຫຼື ລະດັບຄ້ອຍຊັນພຽງເລັກນ້ອຍ (ຕໍ່າກວ່າ 10%), ເຂດດິນຕໍ່າທີ່ອຸດົມສົມບູນ ອ້ອມຮອບດ້ວຍສາຍພູ ທີ່ພາໃຫ້ເປັນບ່ອນກັກເກັບນໍ້າໄດ້. ເຂດດັ່ງກ່າວແມ່ນເໝາະສົມສໍາລັບການປູກເຂົ້າ (ທີ່ນໍາໃຊ້ທັງນໍ້າຈາກຝົນ ຫຼື ຊົນລະປະທານ), ການທີ່ມີໝອກຕົກ ແມ່ນສາມາດຊ່ວຍເຮັດໃຫ້ຫຼຸດຜ່ອນການຄວາມກົດດັນດ້ານຄວາມຊຸ່ມຂອງສະພາບອາກາດອາກາດໄດ້.

ພື້ນທີ່ດັ່ງກ່າວມີປະລິມານນໍ້າຝົນສູງ ແລະ ຝົນຕົກສະໝໍ່າສະເໝີຕະຫຼອດລະດູຝົນ (ເດືອນພຶດສະພາ ຫາ ເດືອນກັນຍາ) ໂດຍປະລິມານນໍ້າຝົນແມ່ນສູງກວ່າ 1,600 ມມ ຕໍ່ປີ. _ອັດຕາຄວາມຊຸ່ມແມ່ນສູງກວ່າ 70% ໃນໄລຍະລະດູການປູກເຂົ້າ ແລະ ປະລິມານຝົນຈະຫຼຸດລົງພາຍຫຼັງອາທິດທີ 36 (ເດືອນກັນຍາ) ໃນຊ່ວງໄລຍະທ້າຍຂອງເຂົ້າສຸກ. ອຸນຫະພູມແມ່ນບໍ່ສູງຫຼາຍ ໂດຍສະເລ່ຍໃນແຕ່ລະປີແມ່ນຢູ່ລະຫວ່າງ 20°C ຫາ 22°C, ຍ້ອນເປັນເຂດພູມສັນຖານທີ່ມີລະດັບຄວາມສູງ ບວກກັບອຸນຫະພູມຂ້ອນຂ້າງຕໍ່າໃນໄລຍະເຂົ້າອອກມານ.

ພ້ອມກັນນັ້ນ ດິນໃນເຂດດັ່ງກ່າວເປັນດິນທີ່ບໍ່ແມ່ນດິນດາກ. ສ່ວນໃຫຍ່ແມ່ນເປັນດິນທີ່ສາມາດເກັບກັກນໍ້າໄດ້ດີ ຊຶ່ງເໝາະສົມສໍາລັບການຜະລິດເຂົ້າຢູ່ ເມືອງຊໍາເໜືອ ແລະ ເມືອງວຽງໄຊ, ແຂວງຫົວພັນ.

- **ປັດໃຈທາງປະຫວັດສາດ ແລະ ມະນຸດ.**

ການບໍລິໂພກເຂົ້າໜຽວ ແມ່ນເປັນສ່ວນໜຶ່ງຂອງເອກະລັກທາງວັດທະນະທໍາຂອງ ສປປ ລາວ. ເປັນເວລາຫຼາຍສັດຕະວັດມາແລ້ວ ທີ່ມີການຄັດເລືອກແນວພັນເຂົ້າທ້ອງຖິ່ນ ຕາມລັກສະນະດ້ານຄວາມຫອມ ໂດຍປະຊາຊົນ 49 ຊົນເຜົ່າ ທີ່ປະກອບເປັນພົນລະເມືອງຂອງປະເທດລາວ. ຢູ່ໃນທະນາຄານສາຍພັນເຂົ້າລາວ ທີ່ເກັບກໍາໂດຍອີງການຈັດຕັ້ງພາຍໃນ ແລະ ສາກົນ ໃນລະຫວ່າງປີ 1995 ຫາ 2000, ອັດຕາສ່ວນແນວພັນເຂົ້າມີກິ່ນຫອມແມ່ນມີສູງ ໃນຈໍານວນຕົວຢ່າງທີ່ເກັບຈາກພື້ນທີ່ພຽງທີ່ໃຊ້ນໍ້າຝົນ (66%) ເປັນຕົ້ນແມ່ນ ຈາກພື້ນທີ່ ທີ່ມີລັກສະນະບົ່ງບອກທາງພູມມີສາດ.

ການປູກເຂົ້າໄກ່ນ້ອຍໄດ້ເລີ່ມທໍາອິດຢູ່ແຂວງຫົວພັນ ເປັນເວລາເກືອບ 100 ປີ ມາແລ້ວ ແລະ ໄດ້ຂະຫຍາຍລົງມາເຂດເມືອງພວນ (ຊື່ເກົ່າຂອງແຂວງຊຽງຂວາງ ໃນປະຈຸບັນ). ຕາມການເລົ່າຂານ, ໃນສະໄໝກ່ອນນັ້ນ ມີພຽງແຕ່ຄອບຄົວຂຸນນາງທີ່ສາມາດປູກ ແລະ ກິນເຂົ້າໄກ່ນ້ອຍ. ຊື່ເຂົ້າໄກ່ນ້ອຍຫົວພັນ ໝາຍເຖິງຮູບຮ່າງຂອງເມັດເຂົ້າທີ່ນ້ອຍ ແລະ ມົນ. ມີຄວາມເຊື່ອໜຶ່ງວ່າ ການໃສ່ຊື່ແບບນັ້ນ ເພາະວ່າເມັດນ້ອຍຄືເຂົ້າທີ່ໃຊ້ເກືອໄກ່. ນອກຈາກນີ້ , ຍັງສອດຄ່ອງກັບຄໍາເວົ້າທີ່ວ່າ ເມັດເຂົ້າທີ່ແຕກຫັກໃນເວລາສີ ແມ່ນມີຂະໜາດນ້ອຍຫຼາຍ ຈຶ່ງເອົາໄປເກືອໄກ່ໄດ້. ມີອີກເລື່ອງເລົ່າໜຶ່ງກ່ຽວກັບຕົ້ນກໍາເນີດຂອງຊື່ເຂົ້ານີ້ ໄດ້ມີແມ່ຍິງຄົນໜຶ່ງຢູ່ແຂວງເຊີນລາ ປະເທດຫວຽດນາມ ໄດ້ເຫັນເມັດເຂົ້າຕິດຢູ່ຈະຫຼອກຄໍຂອງໄກ່, ດ້ວຍເມັດເຂົ້າທີ່ມີລັກສະນະນ້ອຍ ແລະ ມົນ ທີ່ແຕກຕ່າງຈາກຊະນິດພັນເຂົ້າທີ່ມີ, ຈຶ່ງເຮັດໃຫ້ລາວສົນໃຈ ແລະ ລາວ ໄດ້ນໍາເຂົ້າແນວພັນນີ້ໄປປູກ. ພາຍຫຼັງປູກແລ້ວ, ກໍໄດ້ຮັບຜົນດີ, ສີເປັນເຂົ້າສານກໍໄດ້ຮັບຜົນສູງ ແລະ ເປັນເຂົ້າທີ່ມີຄຸນຄ່າທາງໂພສະນາການ.

ເຂົ້າໄກ່ນ້ອຍ ແມ່ນປູກໂດຍສະມາຊິກຂອງຕະກຸນຄົນທີ່ໃຊ້ພາສາໄຕ-ລາວ ທີ່ລວມເອົາຊຸມຊົນທີ່ມີປະເພນີການປູກເຂົ້າ ແລະ ຕໍ່າແພໄໝ ທີ່ມີຄວາມສະໜິດແໜ້ນກັບການດໍາລົງຊີວິດ. ຄົນທ້ອງຖິ່ນໃນພື້ນທີ່ທາງພູພຽງສາດນີ້ ແມ່ນຊາວນາທີ່ປູກເຂົ້າລະດູຝົນຕາມທົ່ງຮາບ ແລະ ຮ່ອມພູ ໄດ້ຮັບການຖ່າຍທອດຄວາມຮູ້ດ້ານການຜະລິດ ແລະ ການບໍລິໂພກເຂົ້າ ຈາກບັນພະບູລຸດຂອງຕົນ, ໂດຍສະເພາະແມ່ນ ຄວາມຮູ້ອັນສໍາຄັນ ທາງດ້ານການຜະລິດ, ການຄັດເລືອກແນວພັນເຂົ້າ ແລະ ນໍາໃຊ້ແຕ່ຝຸ່ນຄອກ, ຖືເປັນວິທີການທີ່ສໍາຄັນ ເພື່ອຮັບປະກັນຄຸນນະພາບຂອງເຂົ້າ. ອາຫານຫຼັກຂອງເຂົາເຈົ້າ ແມ່ນເຂົ້າໜຽວທີ່ກວມເອົາປະມານ 80% ຂອງອາຫານທີ່ເຂົາເຈົ້າບໍລິໂພກ.

- **ລັກສະນະສະເພາະຂອງຜະລິດຕະພັນ.**

ເຂົ້າໄກ່ນ້ອຍ ແມ່ນເຂົ້າໜຽວທີ່ມີຊື່ສຽງ ເປັນທີ່ຮູ້ຈັກ ຍ້ອນລັກສະນະພິເສດທາງດ້ານຮູບຮ່າງຂອງເມັດ, ມີຂະໜາດນ້ອຍ ແລະ ປ້ອມ, ມີຄວາມຫອມທີ່ເປັນເອກະລັກ ແລະ ອ່ອນນຸ້ມໃນເວລາກິນ. ຄວາມຫອມຂອງເຂົ້າໄກ່ນ້ອຍຫົວພັນ ແມ່ນຄ້າຍຄືກັນກັບຕົ້ນອົ້ມ (*Strobilanthes nivea bremek*) ທີ່ເກີດຢູ່ຕາມຫ້ວຍນໍ້າ ຢູ່ແຂວງຫົວພັນ, ແລະ ຄອມຫອມແມ່ນມີລັກສະນະແຕກຕ່າງຈາກ ເຂົ້າແນວພັນອື່ນ.

ການມີສື່ສຽງຂອງເຂົ້າໄກ່ນ້ອຍຫົວພັນ ສະແດງອອກໃຫ້ເຫັນຜ່ານລາຄາຊື້ຂາຍທີ່ແພງກວ່າເຂົ້າອື່ນໆໃນລາວ. ຢູ່ປະເທດຫວຽດນາມ, ເຂົ້າໄກ່ນ້ອຍຫົວພັນ ແມ່ນເປັນທີ່ຕ້ອງການສູງເພື່ອເອົາໄປເຮັດອາຫານໃນບຸນປະເພນີ ເຊັ່ນ: ເຂົ້າຕົ້ມເຕ໋ດ (Banh Chung square rice cake) ທີ່ໃຊ້ສໍາລັບງານບຸນປີໃໝ່. ຢູ່ທີ່ນະຄອນຫຼວງວຽງຈັນ ແລະ ເຂດອື່ນຂອງປະເທດລາວ, ຊື່ສຽງຂອງເຂົ້າໄກ່ນ້ອຍຫົວພັນ ແມ່ນມີເພີ່ມຂຶ້ນໃນໄລຍະຫຼັງມານີ້ ເຖິງວ່າ ຜູ້ບໍລິໂພກເຄີຍໄດ້ຍິນ ກ່ຽວກັບ ຊື່ສຽງ ແລະ ຄຸນນະພາບຂອງເຂົ້າຊະນິດນີ້ມາໄດ້ຫຼາຍປີແລ້ວ. ເຂົ້າໄກ່ນ້ອຍໄດ້ຖືກສົ່ງອອກຂາຍໄປຕະຫຼາດເອີລົບ ເລີ່ມແຕ່ປີ 2006 ແລະ ມີຈໍານວນໜຶ່ງໄດ້ສົ່ງອອກຂາຍໄປບັນດາປະເທດເພື່ອນບ້ານ (ເຊັ່ນ: ຫວຽດນາມ, ໄທ).

- **ການກ່ຽວພັນດ້ວຍເຫດຜົນ:**

ເຖິງແມ່ນປັນຂອງແນວພັນເຂົ້າມີຄວາມສໍາຄັນຫຼາຍຕໍ່ກັບຄວາມຫອມຂອງເຂົ້າ, ປັດໃຈອື່ນໆຫຼາຍຢ່າງກໍ່ມີຄວາມສໍາຄັນຕໍ່ຄວາມຫອມຂອງເຂົ້າແນວພັນນີ້ເຊັ່ນກັນ ເຊັ່ນ: ອຸນຫະພູມຂອງອາກາດໃນໄລຍະເຂົ້າອອກມານ ແລະ ຖອກຮວງ, ປະເພດດິນ ແລະ ຝຸ່ນທໍາມະຊາດ ແລະ ການເກັບມ້ຽນ. ພື້ນທີ່ທາງພູພຽງມີສາດເປັນດິນຮາບພຽງຮັບນໍ້າຝົນ ທີ່ຕັ້ງຢູ່ເທິງຄວາມສູງຈາກລະດັບທະເລ ແມ່ນເໝາະສົມຫຼາຍສໍາລັບການປູກເຂົ້າພັນທ້ອງຖິ່ນປະເພດເຂົ້າໜຽວຫອມເຊັ່ນ ເຂົ້າໄກ່ນ້ອຍຫົວພັນ. ເຖິງວ່າ ຈະມີການປູກເຂົ້າໄກ່ນ້ອຍຢູ່ເຂດອື່ນຂອງລາວ, ແຕ່ບັນດາຜູ້ມີສ່ວນກ່ຽວຂ້ອງ (ຜູ້ບໍລິໂພກ, ພໍ່ຄ້າ ແລະ ນັກວິຊາການ) ຮັບຮູ້ໄດ້ວ່າ ເຂົ້າໄກ່ນ້ອຍຈາກແຂວງຫົວພັນ ແລະ ແຂວງຊຽງຂວາງ ມີຄຸນນະພາບດ້ານກິ່ນຫອມ ແລະ ລົດຊາດທີ່ດີກວ່າ.

ຍ້ອນວ່າ ບັນດາເມືອງທີ່ນອນໃນເຂດພື້ນທີ່ທາງພູພຽງສາດຂອງແຂວງຫົວພັນ ແມ່ນເຂດມີຄວາມສູງຈາກລະດັບໜ້ານໍ້າທະເລ ແລະ ເປັນເຂດທີ່ມີອຸນຫະພູມຂ້ອນຂ້າງຕໍ່າ ໂດຍສະເພາະໃນໄລຍະເຂົ້າອອກມານນັ້ນ ເປັນປັດໃຈທີ່

ພາໃຫ້ເມັດເຂົ້າເກີດມີຄວາມຫອມ. ໜຶ່ງໃນຫຼາຍເຫດຜົນທີ່ວ່າ ເປັນຫຍັງພາກຕາເວັນອອກສຽງເໜືອຂອງປະເທດໄທ ມີຄວາມເໝາະສົມທີ່ສຸດໃນການປູກເຂົ້າຫອມມະລິທີ່ມີສີ່ສຽງ ກໍ່ຍ້ອນວ່າ ອຸນຫະພູມທີ່ເຢັນໃນໄລຍະຫຼັງເຂົ້າເກີດດອກ ແລະ ອອກມານ. ຢູ່ປະເທດອິນເດຍ, ການກັກເກັບຄວາມຫອມຂອງເຂົ້າບາສມາຕິ (Basmati rice) ຈະໄດ້ດີທີ່ສຸດແມ່ນຍ້ອນພູມອາກາດ ຂ້ອນຂ້າງເຢັນລະຫວ່າງ 20-25°C ໄລຍະເຂົ້າສຸກເຫຼືອງ.

ເຂດພື້ນທີ່ດັ່ງກ່າວ ມີປະລິມານຝົນຕົກຂ້ອນຂ້າງຕ່ຳ ແລະ ຫຼຸດລົງຫຼາຍໃນເດືອນກັນຍາ ໃນໄລຍະເຂົ້າສຸກເປັນການເອື້ອອຳນວຍແກ່ການສ້າງຄວາມຫອມຂອງເຂົ້າ. ການນຳໃຊ້ຝຸ່ນຄອກ ແລະ ບໍ່ໃຊ້ສານເຄມີໃນທົ່ງນາປະກອບກັບດິນຜຸຜຸ່ຍ (light soil) ໃນເຂດດັ່ງກ່າວ ພາໃຫ້ເກີດຄວາມຫອມຂອງເຂົ້າໄກ່ນ້ອຍ. ບັນດາເງື່ອນໄຂເຫຼົ່ານັ້ນ ແມ່ນເອື້ອອຳນວຍຫຼາຍໃນການຜະລິດເຂົ້າໄກ່ນ້ອຍທີ່ເປັນຊະນິດເຂົ້າອາຍຸຍາວ ແລະ ປະຊາຊົນສ່ວນໃຫຍ່ຢູ່ໃນພື້ນທີ່ທາງພູມມີສາດທີ່ກຳນົດນັ້ນ ແມ່ນປູກເຂົ້າໄກ່ນ້ອຍ.

ທີ່ຈິງ, ເຂົ້າໄກ່ນ້ອຍຫົວພັນ ທີ່ປູກໃນພື້ນທີ່ພູມມີສາດແມ່ນເພື່ອການບໍລິໂພກເອງເປັນຕົ້ນຕໍ ແລະ ສ່ວນທີ່ເຫຼືອຈະນຳໄປຂາຍໃນທ້ອງຕະຫຼາດຢູ່ນະຄອນຫຼວງວຽງຈັນ ແລະ ໃນຕົວເມືອງອື່ນໆຂອງປະເທດລາວ ແລະ ຍັງໄດ້ຂາຍໄປປະເທດຫວຽດນາມ ບ່ອນທີ່ເຂົ້າໄກ່ນ້ອຍມີສີ່ສຽງ. ຄວາມຈິງແລ້ວ ການທີ່ແຂວງຫົວພັນມີຊາຍແດນຕິດກັບຫວຽດນາມ ຍິ່ງເປັນດການສ້າງຊື່ສຽງໃຫ້ເຂົ້າໄກ່ນ້ອຍຫົວພັນ ເນື່ອງຈາກຖືກນຳໄປເຮັດເຂົ້າຕົ້ມເຕ໋ດ ສຳລັບງານບຸນປີໃໝ່ຫວຽດນາມ ທີ່ເອີ້ນວ່າ ເຕ໋ດຫວຽດ.

## 7. ການນຳໃຊ້ເຄື່ອງໝາຍ.

ຂໍ້ມູນຕ່າງໆ ທີ່ຕ້ອງໄດ້ມີໃນສະຫຼາກຫຸ້ມຫໍ່ ມີດັ່ງນີ້:

- "ເຂົ້າໄກ່ນ້ອຍຫົວພັນ" ເປັນພາສາລາວ ຫຼື "Khao Kai Noi Houaphan" ເປັນພາສາລາຕິນ ແລະ ຄຳແປເປັນພາສາທາງການຂອງອານາເຂດ ທີ່ນຳເຂົ້າໄກ່ນ້ອຍຫົວພັນໄປຂາຍ ໂດຍໃຊ້ຂະໜາດຕົວໜັງສືຢ່າງໜ້ອຍໃຫ້ໃຫຍ່ເທົ່າກັບຕົວໜັງສືອື່ນ ທີ່ໃຫຍ່ທີ່ສຸດຢູ່ໃນສະຫຼາກຫຸ້ມຫໍ່.
- ຊື່ຜູ້ແປຮູບ ຫຼື ຜູ້ຫຸ້ມຫໍ່ (ຊື່ບໍລິສັດ ຫຼື ຊື່ພາກສ່ວນທີ່ນຳເຂົ້າໄກ່ນ້ອຍຫົວພັນບັນຈຸລົງໃນຖົງຫຸ້ມຫໍ່), ລວມທັງທີ່ຢູ່ ແລະ ເບີໂທຕິດຕໍ່.
- ວັນທີ່ສີເຂົ້າ.
- ວັນທີໝົດອາຍຸ, ຫຼື ວັນທີ "ຄວນບໍລິໂພກກ່ອນ" ທີ່ສະແດງໃຫ້ເຫັນໄລຍະມື້ເກັບກ່ຽວ ແລະ ອາຍຸການຂອງຜະລິດຕະພັນ.
- ເລກລະຫັດງວດຜະລິດ.
- ກາໝາຍຖິ່ນກຳເນີດແຫ່ງຊາດລາວ.
- ກາໝາຍລວມໝູ່ ສະມາຄົມເຂົ້າໄກ່ນ້ອຍຫົວພັນ

# ແຜນຄວບຄຸມ

# *ຖິ່ນກຳເນີດ (GI) ເຂົ້າໄກ່ນ້ອຍ**ຫົວພັນ***




**ເລກທີຈົດທະບຽນ ໂດຍກົມຊັບສິນທາງປັນຍາທີ່ເປັນທາງການ LA/GI/10**

| ວັນທີຍັ້ງຢືນ | ວັນທີມີຜົນສັກສິດ |
|---|---|

# <u>ສາລະບານ</u>

ຄໍານໍາ .......... 3
1 - ລະບົບກໍານົດເວລາ ຂອງ ຜະລິດຕະພັນ .......... 4
1.1. - ລະບົບກໍານົດເວລາທີ່ຄົບຖ້ວນ .......... 4
1.2. - ລາຍລະອຽດຂອງໄລຍະຕ່າງໆ ຂອງ ການຜະລິດເຂົ້າ .......... 5
2 - ການປະເມີນ ອົງການຈັດຕັ້ງລວມໝູ່ ເພື່ອຮັບຮອງເອົາ ແລະ ອອກໃບຢັ້ງຢືນ ຜູ້ດໍາເນີນງານ .......... 6
3 - ຂັ້ນຕອນການປະເມີນຜູ້ດໍາເນີນງານ ແລະ ອົງການຈັດຕັ້ງລວມໝູ່ .......... 6
3.1.1 - ການຄວບຄຸມຕົນເອງ .......... 9
3.1.2 - ການຄວບຄຸມພາຍໃນ .......... 9
3.1.3 – ການຄວບຄຸມພາຍນອກ .......... 10
3.3.1 - ຊາວກະສິກອນປູກເຂົ້າ (ຊາວນາ) .......... 13
3.3.2 – ຫົວໜ່ວຍສາງເກັບມ້ຽນ .......... 16
3.3.3 - ໂຮງສີ .......... 16
3.3.4 - ຜູ້ຫຸ້ມຫໍ່ .......... 17
3.3.5 ຜູ້ຄ້າ (ເປັນກິດຈະກໍາທີ່ເຄັ່ງຄັດ) .......... 19
3.3.6 - ອົງການຈັດຕັ້ງລວມໝູ່ (ສະມາຄົມ). .......... 20
4.2.1 - ການຈັດການກັບການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາພາຍໃນ. .......... 23
4.2.2 - ການແກ້ໄຂການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາຈາກພາຍນອກ. .......... 24
4.3.1 - ການປະເມີນກ່ຽວກັບການລະເມີດຂໍ້ກໍານົດ ໃນລະດັບຜູ້ດໍາເນີນງານ. .......... 26
4.3.4 - ການປະເມີນການລະເມີດ ທີ່ພົບເຫັນໃນລະດັບອົງການຈັດຕັ້ງລວມໝູ່ (ສະມາຄົມ). .......... 33

# ຄຳນຳ

**ຈຸດປະສົງຂອງແຜນຄວບຄຸມ:**

ແຜນຄວບຄຸມນີ້ ແມ່ນຕິດພັນກັບເອກະສານຄຸນລັກສະນະສະເພາະຖິ່ນກຳເນີດຂອງເຂົ້າໄກ່ນ້ອຍຫົວພັນ ເຊິ່ງແມ່ນອົງການຈັດຕັ້ງລວມໝູ່ ດັ່ງນີ້:

**ສະມາຄົມສົ່ງເສີມເຂົ້າໄກ່ນ້ອຍແຂວງຫົວພັນ**

- ທີ່ຢູ່: ບ້ານພັນໄຊ, ເມືອງຊຳເໜືອ, ແຂວງຫົວພັນ
- ເບີໂທລະສັບ:.................................
- ອີເມວລ໌: khpa245@gmail.com
- ແວັບໄຊທ໌: www.khpalao.org

ແຜນຄວບຄຸມນີ້ ແມ່ນອາດມີການປ່ຽນແປງ. ການດັດປັບໃດໆຂອງແຜນຄວບຄຸມນີ້ ຕ້ອງໄດ້ຮັບການອະນຸມັດ ໂດຍກົມຊັບສິນທາງປັນຍາ (ກຊປ), ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນຈະນຳອອກມານຳໃຊ້. ເມື່ອແຜນຄວບຄຸມນີ້ ໄດ້ຮັບການອະນຸມັດແລ້ວ ໂດຍ ກຊປ ໃຫ້ສົ່ງຕໍ່ໄປຍັງອົງການຈັດຕັ້ງລວມໝູ່ (ສະມາຄົມ ສົ່ງເສີມເຂົ້າໄກ່ນ້ອຍຫົວພັນ).

ເນື້ອໃນເອກະສານນີ້:

- ອະທິບາຍ ໄລຍະ/ຂັ້ນຕອນຕ່າງໆ ຂອງການຜະລິດ ແລະ ຈຸດທີ່ຕ້ອງໄດ້ຮັບການກວດກາຄວບຄຸມ
- ກຳນົດປະເພດຜູ້ດຳເນີນງານທີ່ກ່ຽວຂ້ອງ
- ລະບຸບົດບາດສະເພາະຂອງ ສມຄ ສົ່ງເສີມເຂົ້າໄກ່ນ້ອຍຫົວພັນ ໃນການຢັ້ງຢືນ
- ແບບແຜນຂອງການປະເມີນຂອງ ສມຄ ໂດຍອົງການກວດກາຄວບຄຸມ
- ອະທິບາຍວິທີການອອກໃບຢັ້ງຢືນ ຂອງອົງການກວດກາຄວບຄຸມ ໃຫ້ແກ່ຜູ້ດຳເນີນງານ
- ອະທິບາຍວິທີການເພື່ອກວດກາຄວບຄຸມຂະບວນການຜະລິດ ແລະ ແປຮູບເປັນຜະລິດຕະພັນ
- ແຈ້ງເຕືອນໃຫ້ມີການກວດກາຄວບຄຸມຕົນເອງ ແລະ ການກວດກາຄວບຄຸມພາຍໃນຂອງຜູ້ດຳເນີນງານ ທີ່ດຳເນີນໂດຍ ສມຄ
- ລະບຸການກວດກາຄວບຄຸມ ທີ່ດຳເນີນໂດຍອົງການກວດກາຄວບຄຸມ
- ລະບຸສະເພາະເຈາະຈົງການປະເມີນ ແລະ ການຕິດຕາມເບິ່ງ ການລະເມີດຂໍ້ກຳນົດຕ່າງໆ ໂດຍ ສມຄ

**ປະເພດຂອງຜູ້ດຳເນີນງານ ທີ່ກ່ຽວຂ້ອງ:**

- ຊາວກະສິກອນປູກເຂົ້າ (ຊາວນາ)
- ຫົວໜ່ວຍສາງເກັບມ້ຽນ
- ໂຮງສີ

- ຜູ້ຫຸ້ມຫໍ່
- ຜູ້ຄ້າ (ຄົນກາງ)

**1 - ລະບົບກຳນົດເວລາຂອງຜະລິດຕະພັນ.**

**1.1. - ລະບົບກຳນົດເວລາທີ່ຄົບຖ້ວນ.**

| **ພືດ (ທີ່ຢູ່ພາຍໃນພື້ນທີ່ ຖິ່ນກຳເນີດ)** | **ຊາວກະສິກອນປູກເຂົ້າ (ຊາວນາ)** |
|---|---|
| ການຫວ່ານກ້າ (ແນວພັນ)<br>ການປູກ/ປັກດຳ<br>ການເກັບກ່ຽວ (ເຂົ້າ)<br>ການຕາກ | |

⇩

| **ການເກັບທ້ອນໂຮມ ແລະ ເກັບມ້ຽນໃນສາງ** | **ຫົວໜ່ວຍສາງເກັບມ້ຽນ** |
|---|---|
| ຮັບເອົາເຂົ້າມາ (ຕາກເຂົ້າ)<br>ເກັບມ້ຽນໃນສາງ | |

⇩

| **ການປຸງແຕ່ງເພື່ອໃຫ້ໄດ້ມາເຊິ່ງຜະລິດຕະພັນສຸດທ້າຍ** | **ໂຮງສີ** |
|---|---|
| ການເຮັດຄວາມສະອາດ<br>ການຄັດແຍກ<br>ການສີ | |

⇩

| **ການຫຸ້ມຫໍ່** | **ຜູ້ຫຸ້ມຫໍ່** |
|---|---|
| ເຂົ້າໃນປະລິມານລວມ<br>ຫຸ້ມຫໍ່ໃສ່ບັນຈຸພັນຂະໜາດຍ່ອຍ<br>ໃສ່ກາໝາຍ<br>ເຂົ້າທີ່ຫຸ້ມຫໍ່ແລ້ວ<br>ວາງຂາຍໃນຕະຫຼາດ | |

⇩

| ວາງຂາຍໃນຕະຫຼາດ | ຜູ້ຄ້າ |
|---|---|

1.2. - ລາຍລະອຽດຂອງໄລຍະຕ່າງໆຂອງການຜະລິດເຂົ້າ.



**2 - ການປະເມີນອົງການຈັດຕັ້ງລວມໝູ່ ເພື່ອຮັບຮອງເອົາ ແລະ ອອກໃບຢັ້ງຢືນຜູ້ດຳເນີນງານ.**

ກິດຈະກຳການປະເມີນ ລວມມີ:

- **ການປະເມີນ** ອົງການຈັດຕັ້ງລວມໝູ່ **ເພື່ອສ້າງຄວາມເຂັ້ມແຂງ**
- **ການອອກໃບຢັ້ງຢືນ** ຜູ້ດຳເນີນງານ, ສະມາຊິກຂອງອົງການຈັດຕັ້ງລວມໝູ່

ອົງການຈັດຕັ້ງລວມໝູ່ ແລະ ຜູ້ດຳເນີນງານຕ່າງໆ ຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງຕາມລຳດັບ ແລະ ໄດ້ຮັບການຢັ້ງຢືນ ໂດຍອົງການກວດກາຄວບຄຸມ ເພື່ອເຂົ້າມາຊ່ວຍເຫຼືອໃນຂະບວນການຜະລິດຕາມຫຼັກການຖິ່ນກຳເນີດ.

> **ການສ້າງຄວາມເຂັ້ມແຂງ** ໃຫ້ແກ່ອົງການຈັດຕັ້ງລວມໝູ່ ເພື່ອການຮັບຮອງ ກໍເພື່ອຢັ້ງຢືນເຖິງຄວາມສາມາດຂອງອົງການຈັດຕັ້ງດັ່ງກ່າວ ວ່າສາມາດປະຕິບັດ ແລະ ຮັກສາຂໍ້ກຳນົດຕ່າງໆ ທີ່ເປັນພື້ນຖານບ່ອນອີງຂອງການອອກໃບຢັ້ງຢືນ.

ການປະເມີນແມ່ນດຳເນີນໄປ ໂດຍນຳໃຊ້ການສະໜັບສະໜູນການກວດສອບສະເພາະ ທີ່ໄດ້ຮັບອະນຸຍາດໃຫ້ມີການກວດກາຈຸດຄວບຄຸມທັງໝົດ, ທີ່ຄວນຈະສະແດງໃຫ້ເຫັນຈາກອົງການຕັ້ງລວມໝູ່ ເຊັ່ນ :

- ໄດ້ສ້າງຕັ້ງຂຶ້ນ ແລະ ຮັບປະກັນວ່າມີການພັດທະນາເປັນອົງການຈັດຕັ້ງຕາມຂໍ້ຮຽກຮ້ອງ ເພື່ອຄວບຄຸມຄຸນນະພາບຂອງ ຜະລິດຕະພັນ ແລະ ອົງການນີ້ມີຊັບພະຍາກອນທີ່ຈຳເປັນໃນການດຳເນີນການກວດກາຄວບຄຸມພາຍໃນ ທີ່ລະບຸໃນແຜນການກວດກາຄວບຄຸມ.
- ສາມາດຕິດຕາມຄຳໝັ້ນສັນຍາ ຂອງຜູ້ດຳເນີນງານທຸກຄົນ ວ່າໄດ້ນຳໃຊ້ ແລະ ປະຕິບັດໃຫ້ສອດຄ່ອງຕາມຂໍ້ກຳນົດຂອງການຢັ້ງຢືນ ທີ່ອອກໃຫ້ໂດຍອົງການກວດກາຄວບຄຸມ.

> ວັດຖຸປະສົງຂອງການ **ຢັ້ງຢືນ ຂອງຜູ້ດຳເນີນງານແຕ່ລະຄົນ,** ທີ່ອົງການກວດກາຄວບຄຸມດຳເນີນ ແມ່ນເພື່ອການຢັ້ງຢືນ:

- **ຄວາມສາມາດຂອງຜູ້ດຳເນີນງານ ວ່າໄດ້ປະຕິບັດຕາມຂໍ້ກຳນົດຂອງ ເອກະສານຄຸນລັກສະນະສະເພາະເຂົ້າໄກ່ນ້ອຍຫົວພັນ**
- **ຄວາມຍຶດໝັ້ນຂອງເຂົາເຈົ້າ ໃນການນຳໃຊ້ລາຍລະອຽດຄຸນລັກສະນະສະເພາະ ແລະ ແຜນຄວບຄຸມທີ່ກ່ຽວຂ້ອງ**

ທັນທີ, ທີ່ອົງການກວດກາຄວບຄຸມໄດ້ຮັບການຂໍການຢັ້ງຢືນ ຈາກຜູ້ດຳເນີນງານ ສົ່ງຜ່ານ ສມຄ, ອົງການກວດກາຄວບຄຸມ ຈະລິເລີ່ມຂັ້ນຕອນການຢັ້ງຢືນ.

ການກວດສອບເຫຼົ່ານີ້ ເຊິ່ງດຳເນີນໄປ ໂດຍນຳໃຊ້ **ການສະໜັບສະໜູນການກວດສອບສະເພາະ** ສຳລັບຜະລິດຕະພັນ. ດັ່ງນັ້ນ ຈຶ່ງຈະເຮັດໃຫ້ສາມາດສ້າງ**ບົດອະທິບາຍລາຍລະອຽດສະບັບຄົບຖ້ວນ** ກ່ຽວກັບ ພື້ນທີ່ຕົວຈິງ ຂອງຜູ້ດຳເນີນງານທີ່ກ່ຽວຂ້ອງໃນລະບົບຖິ່ນກຳເນີດ.

ເມື່ອການກວດສອບເບື້ອງຕົ້ນ ໄດ້ດຳເນີນໄປແລ້ວ ກໍ່ຈະອອກການຢັ້ງຢືນໃຫ້ທັນທີ ຖ້າທຸກໆການລະເມີດຂໍ້ກຳນົດ ໄດ້ຮັບການແກ້ໄຂ.

ການຕັດສິນໃຈກ່ຽວກັບການອອກໃບຢັ້ງຢືນ ແມ່ນສິ່ງໂດຍອົງການກວດກາຄວບຄຸມ ໃຫ້ແກ່ຜູ້ດຳເນີນງານ ພາຍໃນກຳນົດເວລາ 15 ມື້ ຈາກມື້ທີ່ໄດ້ ຮັບຄຳຊີ້ແຈງ ກ່ຽວກັບການລະເມີດໃດໆທີ່ມີ. ອົງການກວດກາຄວບຄຸມ ຈະສື່ສານຂໍ້ມູນນີ້ ອອກມາພ້ອມໆກັນ ໄປຍັງ ສມຄ.

ຂັ້ນຕອນການອອກໃບຢັ້ງຢືນໃໝ່ ຕ້ອງລິເລີ່ມຂຶ້ນໃນກໍລະນີທີ່ມີການດັດປັບເຄື່ອງມືການຜະລິດໃໝ່ຫຼາຍ ຫຼື ມີການຂະຫຍາຍຂອບເຂດພື້ນທີ່ການແຊກແຊງຊ່ວຍເຫຼືອຂອງຜູ້ດຳເນີນງານ, ລວມທັງການນຳໃຊ້ພື້ນທີ່ໃໝ່.

## 3 - ຂັ້ນຕອນການປະເມີນ ຜູ້ດຳເນີນງານ ແລະ ສະມາຄົມ.

### 3.1 - ປັດໃຈທົ່ວໄປ.

ອົງການຈັດຕັ້ງທົ່ວໄປ ສ້າງຕັ້ງຂຶ້ນມາເພື່ອຮັບປະກັນວ່າ ການອອກໃບຢັ້ງຢືນ ແມ່ນອີງໃສ່ 3 ປະເພດການກວດກາຄວບຄຸມ ດັ່ງທີ່ກຳນົດໄວ້ລຸ່ມນີ້.

#### 3.1.1 - ການຄວບຄຸມຕົນເອງ.

ການກວດກາຄວບຄຸມຕົນເອງ ແມ່ນການກວດກາຄວບຄຸມ ທີ່ຈັດຕັ້ງຂຶ້ນໂດຍ ຜູ້ດຳເນີນງານ ຕໍ່ກັບກິດຈະກຳຂອງຕົນເອງ. ຜ່ານການກວດກາຄວບຄຸມ ແລະ ການບັນທຶກການດຳເນີນຕົນເອງນີ້, ຜູ້ດຳເນີນງານຕ້ອງກວດກາການປະຕິບັດຂອງຕົນໃຫ້ຄົບຖ້ວນ ທຽບໃສ່ເອກະສານຄຸນລັກສະນະຕາມຖິ່ນກຳເນີດ.

#### 3.1.2 - ການຄວບຄຸມພາຍໃນ.

ການກວດກາຄວບຄຸມພາຍໃນ ຊ່ວຍໃຫ້ສະມາຄົມຮັບປະກັນວ່າມີການຕອບສະໜອງໄດ້ຕາມຂໍ້ກຳນົດໃນການອອກໃບຢັ້ງຢືນຜະລິດຕະພັນ, ເຊິ່ງຖືກຈັດຕັ້ງປະຕິບັດ ແລະ ດຳເນີນໄປ ພາຍໃຕ້ຄວາມຮັບຜິດຊອບຂອງ ສມຄ..

ເພື່ອຮັບປະກັນ ຄວາມຍຶດໝັ້ນຂອງສະມາຄົມ:

- ມີຊັບພະຍາກອນມະນຸດ ແລະ ຊັບພະຍາກອນທາງດ້ານວິຊາການ ເພື່ອດຳເນີນການກວດກາຄວບຄຸມພາຍໃນ
- ອະທິບາຍສາຍພົວພັນຂອງຕົນ ກັບພະນັກງານຄວບຄຸມພາຍໃນ ຕາມທີ່ວາງອອກລຸ່ມນີ້
- ກຳນົດເອກະສານທີ່ຜູ້ດຳເນີນງານຕ້ອງໄດ້ສ້າງຂຶ້ນ ເພື່ອສະແດງໃຫ້ເຫັນ ການກວດກາຄວບຄຸມຕົນເອງຂອງຜູ້ດຳເນີນງານ ໄດ້ດຳເນີນໄປແລ້ວ
- ຮັບຮູ້ເຖິງ ຈຳນວນຜູ້ດຳເນີນງານ ແລະ ບໍລິມາດຜະລິດຕະພັນ ທີ່ມີໃນຂະແໜງການ
- ພັນລະນາແບບແຜນ, ວິທີການດຳເນີນການກວດກາຄວບຄຸມພາຍໃນ ແລະ ມາດຕະການແກ້ໄຂຕ່າງໆ

- ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມາດຕະການແກ້ໄຂ ແລະ ແຈ້ງໃຫ້ອົງການກວດກາຄວບຄຸມຮູ້ ໃນກໍລະນີ ມີການລະເມີດ ທີ່ສຳຄັນ ຫຼື ທີ່ໃຫຍ່ຫຼວງເກີດຂຶ້ນ.

ການກວດກາຄວບຄຸມພາຍໃນ ແມ່ນບັນທຶກໄວ້ ເພື່ອສະໜອງຫຼັກຖານອ້າງອີງ ກ່ຽວກັບການຈັດຕັ້ງປະຕິບັດທີ່ມີປະສິດທິຜົນຂອງເຂົາເຈົ້າ. ການບັນທຶກເຫຼົ່ານີ້ ລວມເອົາທຸກຈຸດທີ່ຕ້ອງກວດກາ ໂດຍຜູ້ດຳເນີນງານ.

ແບບຟອມການກວດກາສະເພາະ ແມ່ນໄດ້ສ້າງຂຶ້ນ ແລະ ໄດ້ກວດເອົາບັນດາຈຸດທີ່ຈະກວດກາ ໃນແຕ່ລະຂັ້ນຕອນຂອງຜູ້ດຳເນີນງານ.

ຂໍ້ກຳນົດມາດຖານຕ່ຳສຸດ ໃນດ້ານ **ຄວາມສາມາດ** ແລະ **ພາລະບົດບາດ** ຂອງອົງການກວດກາຄວບຄຸມພາຍໃນ ແມ່ນກຳນົດ ແລະ ຢັ້ງຢືນ ພາຍໃນຂອບເຂດ ຂອງການກວດກາຄວບຄຸມພາຍນອກ.

| ຜູ້ດຳເນີນງານການກວດກາຄວບຄຸມ | ຄຸນນະວຸດທິນັກກວດກາຄວບຄຸມພາຍໃນ | ຄວາມຮູ້ທີ່ຮຽກຮ້ອງໃຫ້ມີ |
|---|---|---|
| ຊາວກະສິກອນປູກເຂົ້າ (ຊາວນາ) | ໄດ້ຮັບການຝຶກອົບຮົມ/ການສິດສອນ<br>ມີຄຸນນະວຸດທິການສຶກສາ<br>ມີຄວາມຊຳນິຊຳນານ | ການປູກເຂົ້າ<br>ຮູ້ໄດ້ເງື່ອນໄຂການປູກເຂົ້າໄກ່ນ້ອຍແຕ່ລະຊະນິດ |
| ຜູ້ເກັບມ້ຽນ, ຜູ້ປູກເຂົ້າ, ຜູ້ແປຮູບ, ຜູ້ຄ້າ (ຄົນກາງ) | | ມີໜ້າທີ່ສ່ວນກ່ຽວຂ້ອງກັບ:<br>ອົງການຈັດຕັ້ງທີ່ເປັນສາງເກັບມ້ຽນ,<br>ການປູກເຂົ້າ,<br>ຜູ້ຫຸ້ມຫໍ່ ແລະ ຜູ້ຄ້າ (ຄົນກາງ)<br>ຄວາມຮູ້ກ່ຽວກັບການແປຮູບຜະລິດຕະພັນ |

ການກວດກາຄວບຄຸມພາຍໃນ ຕ້ອງດຳເນີນໄປ ໂດຍອົງການເອກະລາດ ຈາກຜູ້ດຳເນີນງານທີ່ໄດ້ຮັບການກວດກາຄວບຄຸມ ແລະ ຕ້ອງໄດ້ຮັບການ ແຕ່ງຕັ້ງມອບໝາຍພາລະບົດບາດຢ່າງເປັນທາງການ ໂດຍ ສມຄ ເພື່ອໃຫ້ດຳເນີນກິດຈະກຳນີ້.

ລາຍຊື່ຂອງນັກກວດກາຄວບຄຸມພາຍໃນ ແມ່ນຕ້ອງໄດ້ປັບປຸງໃໝ່ເລື້ອຍໆໃຫ້ທັນກັບສະພາບ ໂດຍກຳນົດແຕ່ລະຂົງເຂດຄວາມຊຳນານຂອງເຂົາເຈົ້າ ໃນລາຍລະອຽດ ເຊັ່ນດຽວກັນກັບ ການກວດກາຄວບຄຸມທີ່ໄດ້ມອບໝາຍໃຫ້ເຂົາເຈົ້າປະຕິບັດ.

### 3.1.3 – **ການຄວບຄຸມພາຍນອກ**.

ການຄວບຄຸມພາຍນອກ ແມ່ນຈັດຕັ້ງປະຕິບັດໂດຍ ອົງການກວດກາຄວບຄຸມ, ເຊິ່ງຊ່ວຍໃຫ້ຮັບປະກັນການປະຕິບັດຕາມຂໍ້ກຳນົດ ທີ່ເຊື່ອມໂຍງ ກັບການອອກໃບຢັ້ງຢືນຖິ່ນກຳເນີດ.

ອີງການຄວບຄຸມ ຈັດຕັ້ງການວາງແຜນຄວບຄຸມ ອີງຕາມຄວາມຖີ່ຂອງການກວດກາຄວບຄຸມສະເພາະ. ການຄວບຄຸມ ແມ່ນບໍ່ໄດ້ດຳເນີນຂຶ້ນ ແບບບໍ່ໄດ້ຄາດຄິດລ່ວງໜ້າ. ການກວດກາຄວບຄຸມແມ່ນດຳເນີນຂຶ້ນ ຜ່ານການສຳພາດ, ການສຶກສາເອກະສານ ແລະ ການກວດກາຕົວຈິງໃນພາກສະໜາມ. ຜູ້ກວດສອບ ຢັ້ງຢືນຢ່າງເປັນລະບົບ ໃນລະຫວ່າງການລົງກວດກາເບິ່ງການດຳເນີນການແກ້ໄຂຕ່າງໆ ທີ່ໄດ້ເຮັດ ຫຼັງຈາກກຳນົດໄດ້ວ່າມີການລະເມີດໃດໜຶ່ງ ໃນລະຫວ່າງທີ່ໄດ້ມີການກວດກາຄວບຄຸມພາຍໃນ ແລະ/ຫຼື ການກວດກາຄວບຄຸມພາຍນອກ ໄດ້ດຳເນີນຂຶ້ນ ແລະ ມີຜົນສັກສິດ.

ໄດ້ມີການຈັດຕັ້ງການສະໜັບສະໜູນການຄວບຄຸມສະເພາະຂຶ້ນ ກວມເອົາທຸກໆຈຸດທີ່ຕ້ອງໄດ້ຮັບການກວດກາໃນລະຫວ່າງການລົງຢ້ຽມຢາມຜູ້ດຳເນີນງານແຕ່ລະຄັ້ງ.

### 3.2 - ບົດອະທິບາຍ/ເອກະສານທີ່ສົ່ງ ລະຫວ່າງ ການຄວບຄຸມພາຍໃນ ແລະ ການຄວບຄຸມພາຍນອກ.

ຕາຕະລາງສັງລວມລຸ່ມນີ້ ສະແດງໃຫ້ເຫັນ ສຳລັບຜູ້ດຳເນີນງານແຕ່ລະຄົນ ແລະ ສຳລັບແຕ່ລະໄລຍະທີ່ສຳຄັນ ຂອງລະບົບກຳນົດເວລາຂອງຜະລິດຕະພັນ ເຖິງບົດອະທິບາຍລະຫວ່າງ ການຄວບຄຸມພາຍນອກ ທີ່ດຳເນີນໂດຍ ອົງການຄວບຄຸມ ແລະ ການກວດກາຄວບຄຸມພາຍໃນ ທີ່ດຳເນີນໂດຍສະມາຄົມ ເອກະສານເຫຼົ່ານີ້ລະບຸເຖິງຄວາມຖີ່ຕ່ຳສຸດ ສຳລັບການກວດກາຄວບຄຸມແຕ່ລະປະເພດ.

| *ຜູ້ດຳເນີນງານ* | ຄວາມຖີ່ຕ່ຳສຸດໃນການຄວບຄຸມ | |
|---|---|---|
| | **ການຄວບຄຸມພາຍໃນ** | **ການຄວບຄຸມພາຍນອກ** |
| **ສະມາຄົມ** | / | 1 ຫາ 2 ຄັ້ງ / ປີ |
| **ຊາວກະສິກອນ** | XX % / ປີ | XX % / ປີ |
| **ຫົວໜ່ວຍສາງເກັບມ້ຽນ** | XX % / ປີ | XX % / ປີ |
| **ໂຮງສີ** | XX % / ປີ | XX % / ປີ |
| **ຜູ້ຫຸ້ມຫໍ່** | XX % / ປີ | XX % / ປີ |
| **ຜູ້ຄ້າ (ຄົນກາງ)** | XX % / ປີ | XX % / ປີ |
| **ການວິເຄາະຜະລິດຕະພັນ ທາງດ້ານເຄມີ ແລະ ກາຍະພາບ** | X ເລກລະຫັດງວດ / ປີ | X ເລກລະຫັດງວດ / ປີ |

3.3 - ຕາຕະລາງແຜນຄວບຄຸມລະອຽດ.

# ຊ່ວຍໃນການອ່ານແຜນຄວບຄຸມ

ມາດຖານທີ່ກຳນົດ ເຂົ້າໄກ່ນ້ອຍຖິ່ນກຳເນີດ ຕາມເອກະສານຄຸນລັກສະນະສະເພາະ

ອົງປະກອບແຜນຄວບຄຸມ ພາຍໃນ/ພາຍນອກ

**ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ**

ບ່ອນອີງ, ຂັ້ນຕອນ, ຄຳແນະນຳ…

ເອກະສານຈົດທະບຽນ

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ຄ່າສະເລ່ຍທີ່ຄາດໝາຍໄວ້ | ການຄວບຄຸມຕົນເອງ / Self-Control (SC)<br>ການຄວບຄຸມພາຍໃນ / Internal Control (IC)<br>ການຄວບຄຸມພາຍນອກ / External Control<br>(EC) External Control (EC) | ວິທີການ | ການດຳເນີນການແກ້ໄຂ / Correction Action (CA)<br>ການດຳເນີນການປັບປຸງ / Remedial Action (RA) | ປັດໃຈອ້າງອີງ ແລະ ອົງປະກອບທີ່ເປັນຫຼັກຖານຢັ້ງຢືນ |
|---|---|---|---|---|---|---|
| PM6<br>MPC | | | |  | | |

**PM =** ຈຸດທີ່ຕ້ອງໄດ້ກວດກາ

**MPC =** ຈຸດຫຼັກທີ່ຕ້ອງໄດ້ຄວບຄຸມ

**ການດຳເນີນການແກ້ໄຂ (Correction Action – CA) =** ການດຳເນີນການທີ່ເປັນໄປໄດ້ທັນທີ ເພື່ອຈັດການກັບຜະລິດຕະພັນທີ່ບໍ່ປະຕິບັດຕາມມາດຖານ

**ການດຳເນີນການປັບປຸງ (Remedial Action – RA) =** ການດຳເນີນການທີ່ເປັນໄປໄດ້ ທີ່ເລັ່ງໃສ່ ລຶບລ້າງສິ່ງຜິດພາດເຫຼົ່ານັ້ນ ແລະ ປ້ອງກັນການເກີດຂຶ້ນໃໝ່ ໂດຍຜ່ານການວິເຄາະສາເຫດຂອງການລະເມີດແລ້ວ

 ສິ່ງປະຈັກຕາ (ໃນພາກສະໜາມ)

 ວັດແທກ (ໃນພາກສະໜາມ)

 ບັນທຶກເປັນລາຍລັກອັກສອນ

 ວິເຄາະຢູ່ຫ້ອງທົດລອງ

### 3.3.1 - ຊາວກະສິກອນປູກເຂົ້າ (ຊາວນາ).

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | ການຄວບຄຸມຕົນເອງ / Self-Control (SC)<br>ການຄວບຄຸມພາຍໃນ / Internal Control (IC) / ການຄວບຄຸມພາຍນອກ / External Control (EC) | | ວິທີການ | ການດຳເນີນການແກ້ໄຂ - Correction Action (CA)<br>ການດຳເນີນການປັບປຸງ / Remedial Action (RA) | ບ່ອນອີງ ແລະ ອີງປະກອບທີ່ເປັນຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM0 | ການເປັນສະມາຊິກຂອງຊາວກະສິກອນປູກເຂົ້າ ແລະ ເອກະສານທີ່ເຂົາເຈົ້າມີໃນປະຈຸບັນ | - ຊາວກະສິກອນເປັນສະມາຊິກຂອງອົງການຈັດຕັ້ງຊາວກະສິກອນ.<br>- ຊາວກະສິກອນ ສາມາດຮູ້ໄດ້ຂະບວນການຜະລິດຕາມຂໍ້ກຳນົດຕ່າງໆ ຂອງເອກະສານຄຸນລັກສະນະ ແລະ ແຜນຄວບຄຸມເປັນຂໍ້ບັງຄັບໃຊ້ (ຫຼື ມີເອກະສານສະບັບຄັດຈ້ອນ). | SC | - ຜູ້ປູກເຂົ້າ/ຊາວກະສິກອນທີ່ເປັນສະມາຊິກ ຂອງສະມາຄົມ<br>- ຂໍ້ກຳນົດຂອງເອກະສານຖິ່ນກຳເນີດ (ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ) ທີ່ມີຜົນນຳໃຊ້. | | CA: ຂະບວນການຮັບເອົາເຂົ້າເປັນສະມາ ຊິກທີ່ເປັນທາງການ ຫຼື ການປົດອອກ ຈາກກຸ່ມ.<br>CA: ຄົ້ນຄືນເອກະສານປະຈຸບັນ. | - ເອກະສານບັນທຶກການປະຕິບັດຕາມ ແລະ ຄຳປະຕິຍານຂອງຊາວກະສິກອນປູກເຂົ້າ (ຊາວນາ).<br>-ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມທີ່ມີຜົນບັງຄັບໃຊ້. |
| | | | IC<br>EC | **ການຢັ້ງຢືນວ່າມີເອກະສານໃນປະຈຸບັນ (ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ) ໃຫ້ຊາວກະສິກອນປູກເຂົ້າ (ຊາວນາ)** | | | |
| PM1<br>MPC | ການຄັດເລືອກແນວພັນທີ່ນຳມາໃຊ້ | ການປະຕິບັດຕາມແນວພັນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ | SC | - ມີລາຍຊື່ແນວພັນເຂົ້າທີ່ອະນຸຍາດໃຫ້ນຳໃຊ້<br>- ການນຳໃຊ້ແນວພັນເຂົ້າ ຈາກລາຍງານທີ່ອະນຸຍາດໃຫ້ໃຊ້ | | CA: ປົດອອກຈາກກຸ່ມ | - ລາຍຊື່ ແລະ ການນຳໃຊ້ແນວພັນ ທີ່ອະນຸຍາດໃຫ້ໃຊ້. |
| | | | IC<br>EC | **ມີລາຍຊື່ແນວພັນເຂົ້າ ທີ່ອະນຸຍາດໃຫ້ໃຊ້ ແລະ ໄດ້ມີການປະຕິບັດຕາມຂໍ້ກຳນົດໃຫ້ນຳໃຊ້ແນວພັນ** | | | |
| PM2<br>MPC | ຈຸດທີ່ຕັ້ງຂອງ ຜືນນາ | ຜືນນາ ຕັ້ງຢູ່ເຂດພູມມີສາດຂອງຖິ່ນກຳເນີດ | SC | ການກຳນົດຜືນນາ ແມ່ນທັນກັບສະພາບ ໃນແຜນທີ່ຈົດທະບຽນທີ່ດິນ | | CA: ການຖອດຖອນຜືນນາ ທີ່ຢູ່ນອກເຂດອອກ | - ແຜນທີ່ຈົດທະບຽນທີ່ດິນ<br>- ແບບຟອມການເປັນສະມາຊິກ ແລະ ແບບຟອມມອບໝາຍ ຜືນນາ ? |
| | | | IC<br>EC | **ການຢັ້ງຢືນ ການປະຕິບັດຕາມພື້ນທີ່ທາງພູມມີສາດຂອງຖິ່ນກຳເນີດ** | | | |
| PM3<br>MPC | ລະດັບຄວາມສູງຂອງຜືນນາຈາກລະດັບໜ້ານ້ຳທະເລ | ຜືນນາ ຕັ້ງຢູ່ໃນລະດັບຄວາມສູງເໜືອລະດັບນ້ຳທະເລ ຕ່ຳສຸດ 650-1250 ແມັດ | SC | ການແຈ້ງລະດັບຄວາມສູງຂອງຜືນນາ ແມ່ນເປັນຂໍ້ມູນໃໝ່ທັນກັບສະພາບປັດຈຸບັນທີ່ລະບຸໃນແຜນທີ່ຈົດທະບຽນທີ່ດິນ | | CA: ການຖອດຖອນຜືນນາ ທີ່ມີຄວາມສູງຕ່ຳກວ່າລະດັບຄວາມສູງຕ່ຳສຸດທີ່ກຳນົດໃຫ້ | - ແຜນທີ່ຈົດທະບຽນທີ່ດິນ<br>- ແມັດວັດແທກລະດັບຄວາມສູງ<br>- ແບບຟອມການເປັນສະມາຊິກ ຫຼື ແບບຟອມມອບໝາຍ ຜືນນາ? |
| | | | IC<br>EC | **ການຢັ້ງຢືນ ການປະຕິບັດຕາມລະດັບຄວາມສູງຕ່ຳສຸດ (≤650ມ)** | | | |

| | | | | | | | |
|---|---|---|---|---|---|---|---|
| PM4 | ການຄັດເລືອກ ແນວພັນ | ບໍ່ໃຊ້ແນວພັນທີ່ຊື້-ຂາຍກັນທົ່ວໄປ | SC | ການຄັດເລືອກແນວພັນ ໂດຍຊາວກະສິກອນປູກເຂົ້າ (ຊາວນາ) ທີ່ຄັດເລືອກມາຈາກຮວງເຂົ້າທີ່ແຂງແຮງ | | CA: ການຖອດຖອນ ຊຸດແນວພັນອອກ<br>RA: ສະຫຼຸບສັງຮວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ຕາຕະລາງສະໜອງແນວພັນ |
| | | | IC<br>EC | **ການຢັ້ງຢືນຂະບວນການຄັດເລືອກແນວພັນ** | | | |
| PM5 | ໄລຍະການກະກຽມການຕົກກ້າ | ໄດ້ກະກຽມຕົກກ້າ ລະຫວ່າງເດືອນເມສາ ຫາ ເດືອນພຶດສະພາ | SC | ປະຕິບັດຕາມໄລຍະເວລາການກະກຽມໜານກ້າ | | CA: ການຖອດຖອນ ຜືນນາ ທີ່ບໍ່ໄປຕາມກຳນົດເວລາ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC<br>EC | **ການຢັ້ງຢືນໄລຍະເວລາກະກຽມການຕົກກ້າ** | | | |
| PM6 | ການກະກຽມແນວພັນ | ການໜ່າແນວພັນ 2 ຫາ 3 ມື້ ແລະ ສະເດັດນ້ຳໄວ້ 2 ຫາ 3 ມື້ | SC | ປະຕິບັດຕາມຂະບວນການໜ່າແນວພັນ ແລະ ການສະເດັດນ້ຳ | | CA: ການຖອດຖອນ ໜານກ້າທີ່ບໍ່ໄດ້ຕາມກຳນົດ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ. | - ບັນທຶກກ່ຽວກັບພືດ |
| | | | IC<br>EC | **ການຢັ້ງຢືນການປະຕິບັດຕາມ ຂະບວນການໜ່າແນວພັນ ແລະ ການສະເດັດນ້ຳ** | | | |
| PM7 | ການກະກຽມຕາກ້າ | ການໄຖຕາກ້າ ແລ້ວປະໄວ້ 1 ຫາ 2 ອາທິດ ກ່ອນຕົກກ້າ ຫຼື ຕົກກ້າໃສ່ໜອງ ຕາກດິນໜອງ 1-5 ວັນກ່ອນຕົກກ້າ | SC | ປະຕິບັດຕາມການກຽມດິນດ້ວຍການໄຖ ການປະດິນທີ່ໄຖແລ້ວໄວ້ | | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC<br>EC | **ການຢັ້ງຢືນ ການປະດິນທີ່ໄຖແລ້ວໄວ້ຕາມໄລຍະທີ່ແນະນຳ** | | | |
| PM8 | ການກະກຽມດິນ | ການໄຖຕາກ້າ ນຳໃຊ້ຄວາຍ ຫຼື ລົດໄຖນາເດີນຕາມ | SC | ປະຕິບັດຕາມຄຳແນະນຳໃຫ້ນຳໃຊ້ເຄື່ອງມືການໄຖ | | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ<br>- KKN good practices document |
| | | | IC<br>EC | **ຢັ້ງຢືນການປະຕິບັດຕາມ ຕາມຄຳແນະນຳໃຫ້ນຳໃຊ້ເຄື່ອງມືການໄຖ** | | | |
| PM9 | ການຫວ່ານກ້າ | ການຫວ່ານກ້າ ດ້ວຍຄວາມຖີ່ 10 ຫາ 15 ກິໂລກຼາມ ສຳລັບການປັກດຳທີ່ຈະນຳໃຊ້ກ້າກົບດຽວ ແລະ 40 ຫາ 60 ກິໂລກຼາມ ຕໍ່ເຮັກຕາ ສຳລັບການປັກດຳທີ່ຈະນຳໃຊ້ຕົ້ນກ້າ 2-4 ຕົ້ນຕໍ່ສຸມ ຂອງເນື້ອທີ່ແປງນາ | SC | ປະຕິບັດຕາມຄຳແນະນຳດ້ານຄວາມຖີ່ຂອງການຫວ່ານແນວພັນ | | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC<br>EC | **ຢັ້ງຢືນການ ປະຕິບັດຕາມຄຳແນະນຳດ້ານຄວາມຖີ່ຂອງການຫວ່ານແນວພັນ** | | | |
| PM10 | ການໃສ່ຝຸ່ນບຳລຸງ ດິນ | ການໃສ່ຝຸ່ນບຳລຸງດິນ ດ້ວຍຝຸ່ນຊີວະພາບ (ຝຸ່ນຄອກ, ຝຸ່ນຂຽວ, ຝຸ່ນບົ່ມ, ນ້ຳໝັກຊີວະພາບ). ຫ້າມໃຊ້ປຸ໋ຍເຄມີ ພາຍຫຼັງໄລຍະຕົກກ້າ. | SC | ຂະບວນການໃສ່ຝຸ່ນ ຕາມການແນະນຳ ໃນເອກະສານຈົດທະບຽນພືດ | | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບເຂົ້າໄກ່ນ້ອຍ |
| | | | IC<br>EC | **ການຢັ້ງຢືນການປະຕິບັດຕາມວິທີການໃສ່ຝຸ່ນບຳລຸງດິນທີ່ແນະນຳໃຫ້ໃຊ້** | | | |

| | | | | | | | |
|---|---|---|---|---|---|---|---|
| PM11 | ການກະກຽມດິນ | ການໄຖຮຸດນາ ປະໄວ້ 1 ຫາ 3 ອາທິດ ແລະ ໄຖໂຄ້ນຄັ້ງທີສອງ ກ່ອນດຳນາ | SC | ປະຕິບັດຕາມການກຽມດິນດ້ວຍການໄຖ ການປະຄິນທີ່ໄຖແລ້ວໄວ້ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| PM12 | ອາຍຸຂອງກ້າ ສຳລັບການປັກດຳ | ຕົ້ນກ້າມີອາຍຸ 25 ຫາ 40 ມື້ ສຳລັບການປັກດຳ | SC | ປະຕິບັດຕາມອາຍຸກ້າ ກ່ອນປັກດຳ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບເຂົ້າໄກ່ນ້ອຍ |
| | | | IC EC | **ການຢັ້ງຢືນ ການປະຕິບັດຕາມກຳນົດອາຍຸກ້າ ກ່ອນປັກດຳ** | | | |
| PM13 | ຂະບວນການປັກດຳ | ສຳເລັດການປັກດຳນາດ້ວຍມື ໂດຍໃສ່ 1 ຫາ 4 ຕົ້ນ ຕໍ່ສຸມ ທີ່ມີໄລຍະຫ່າງກັນ 20 ຫາ 30 ຊມ | SC | ປະຕິບັດຕາມຂະບວນການປັກດຳກ້າ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ ຫຼືກສຸມກ້າທີ່ບໍ່ຖືກຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງຮວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບເຂົ້າໄກ່ນ້ອຍ |
  - ເປົາ ແລະ ພາຊະນະທີ່ໃຊ້ບັນຈຸເຂົ້າໄກ່ນ້ອຍຊຽງຂວາງ ຕ້ອງເກັບມ້ຽນວາງໄວ້ເທິງຫ້າງ ໂດຍມີຄວາມສູງ

ຫ່າງຈາກພື້ນ 10 ຊມ ຂຶ້ນໄປ.

– ເປົາ ແລະ ພາຊະນະທີ່ໃຊ້ບັນຈຸເຂົ້າໄກ່ນ້ອຍຊຽງຂວາງ ຕ້ອງເກັບມ້ຽນແຍກສະເພາະຕ່າງຫາກ ພ້ອມມີປ້າຍຕິດໃຫ້ຈະແຈ້ງຢູ່ຈຸດໂຮງສີ. ບ່ອນເກັບມ້ຽນດັ່ງກ່າວ ຕ້ອງແຍກຈາກບ່ອນເກັບມ້ຽນເຂົ້າຊະນິດອື່ນໆ.

**6. ລາຍລະອຽດກ່ຽວກັບຄວາມເຊື່ອມໂຍງ ລະຫວ່າງ ຄຸນນະພາບ, ສື່ສຽງ ແລະ ຄຸນລັກສະນະອື່ນໆຂອງຜະລິດຕະພັນ ກັບແຫຼ່ງທີ່ມາທາງພູມມິສາດ.**

- **ປັດໃຈດ້ານສະພາບແວດລ້ອມ.**

ເງື່ອນໄຂດ້ານຄວາມສູງຈາກລະດັບໜ້ານໍ້າທະເລ, ລັກສະນະສະເພາະຂອງດິນ, ອາກາດ ແລະ ການນໍາໃຊ້ແນວພັນເຂົ້າທ້ອງຖິ່ນ ເປັນປັດໃຈສໍາຄັນທີ່ມີຜົນຕໍ່ການຜະລິດ ແລະ ລັກສະນະສະເພາະຂອງເຂົ້າໄກ່ນ້ອຍຊຽງຂວາງ ໃນຂອບເຂດພື້ນທີ່ຖິ່ນກໍາເນີດດັ່ງກ່າວ.
ລັກສະນະພື້ນທີ່ທາງພູມມິສາດຂອງແຂວງຊຽງຂວາງ ແມ່ນເຂດທີ່ຢູ່ໃນຄວາມສູງ 600 ຫາ 1.200 ແມັດ ເໜືອລະດັບໜ້ານໍ້າທະເລ ແລະ ມີລະດັບດິນຮາບພຽງ ຫຼື ລະດັບຄ້ອຍຊັນພຽງເລັກນ້ອຍ (ຕໍ່າກວ່າ 10%), ເຂດດິນຕໍ່າທີ່ອຸດົມສົມບູນ ອ້ອມຮອບດ້ວຍສາຍພູ ທີ່ພາໃຫ້ເປັນບ່ອນກັກເກັບນໍ້າໄດ້. ເຂດດັ່ງກ່າວແມ່ນເໝາະສົມສໍາລັບການປູກເຂົ້າ (ທີ່ນໍາໃຊ້ທັງນໍ້າຈາກຝົນ ຫຼື ຊົນລະປະທານ), ການທີ່ມີໝອກຕົກ ແມ່ນສາມາດຊ່ວຍເຮັດໃຫ້ຫຼຸດຜ່ອນການຄວາມກົດດັນດ້ານຄວາມຊຸ່ມຂອງສະພາບອາກາດອາກາດໄດ້.

ພື້ນທີ່ດັ່ງກ່າວມີປະລິມານນໍ້າຝົນສູງ ແລະ ຝົນຕົກສະໝໍ່າສະເໝີຕະຫຼອດລະດູຝົນ (ເດືອນພຶດສະພາ ຫາ ເດືອນກັນຍາ) ໂດຍປະລິມານນໍ້າຝົນແມ່ນສູງກວ່າ 1,400 ມມ ຕໍ່ປີ. _ອັດຕາຄວາມຊຸ່ມແມ່ນສູງກວ່າ 70% ໃນໄລຍະລະດູການປູກເຂົ້າ ແລະ ປະລິມານຝົນຈະຫຼຸດລົງພາຍຫຼັງອາທິດທີ 36 (ເດືອນກັນຍາ) ໃນຊ່ວງໄລຍະທ້າຍຂອງ ເຂົ້າສຸກ. ອຸນຫະພູມແມ່ນບໍ່ສູງຫຼາຍ ໂດຍສະເລ່ຍໃນແຕ່ລະປີແມ່ນຢູ່ລະຫວ່າງ 20°C ຫາ 22°C, ຍ້ອນເປັນເຂດພູມສັນຖານທີ່ມີລະດັບຄວາມສູງ ບວກກັບອຸນຫະພູມຂ້ອນຂ້າງຕໍ່າໃນໄລຍະເຂົ້າອອກມານ.

ພ້ອມກັນນັ້ນ ດິນໃນເຂດດັ່ງກ່າວເປັນດິນທີ່ບໍ່ແມ່ນດິນດາກ. ສ່ວນໃຫຍ່ແມ່ນເປັນດິນທີ່ສາມາດເກັບກັກນໍ້າໄດ້ດີ ຊຶ່ງເໝາະສົມສໍາລັບການຜະລິດເຂົ້າຢູ່ເມືອງແປກ, ເມືອງຜາໄຊ, ເມືອງຄູນ, ເມືອງພູກູດ ແລະ ເມືອງຄໍາ ແຂວງຊຽງຂວາງ.

- **ປັດໃຈທາງປະຫວັດສາດ ແລະ ມະນຸດ.**

ການບໍລິໂພກເຂົ້າໜຽວ ແມ່ນເປັນສ່ວນໜຶ່ງຂອງເອກະລັກທາງວັດທະນະທໍາຂອງ ສປປ ລາວ. ເປັນເວລາຫຼາຍສັດຕະວັດມາແລ້ວ ທີ່ມີການຄັດເລືອກແນວພັນເຂົ້າທ້ອງຖິ່ນ ຕາມລັກສະນະດ້ານຄວາມຫອມ ໂດຍປະຊາຊົນ 49 ຊົນເຜົ່າ ທີ່ປະກອບເປັນພົນລະເມືອງຂອງປະເທດລາວ. ຢູ່ໃນທະນາຄານສາຍພັນເຂົ້າລາວ ທີ່ເກັບກໍາໂດຍອີງການຈັດຕັ້ງພາຍໃນ ແລະ ສາກົນ ໃນລະຫວ່າງປີ 1995 ຫາ 2000, ອັດຕາສ່ວນແນວພັນເຂົ້າມີກິ່ນຫອມແມ່ນມີສູງ ໃນຈໍານວນຕົວຢ່າງທີ່ເກັບຈາກພື້ນທີ່ພຽງທີ່ໃຊ້ນໍ້າຝົນ (66%) ເປັນຕົ້ນແມ່ນ ຈາກພື້ນທີ່ ທີ່ມີລັກສະ

ນະບັ່ງບອກທາງພູມມີສາດ.

ການປູກເຂົ້າໄກ່ນ້ອຍໄດ້ເລີ້ມທຳອິດຢູ່ແຂວງຊຽງຂວາງ ເປັນເວລາເກືອບ 100 ປີ ມາແລ້ວ ແລະ ໄດ້ຂະຫຍາຍລົງມາເຂດເມືອງພວນ (ຊື່ເກົ່າຂອງແຂວງຊຽງຂວາງ ໃນປະຈຸບັນ). ຕາມການເລົ່າຂານ, ໃນສະໄໝກ່ອນນັ້ນ ມີພຽງແຕ່ຄອບຄົວຂຸນນາງທີ່ສາມາດປູກ ແລະ ກິນເຂົ້າໄກ່ນ້ອຍ. ຊື່ເຂົ້າໄກ່ນ້ອຍຊຽງຂວາງ ໝາຍເຖິງຮູບຮ່າງຂອງເມັດເຂົ້າທີ່ນ້ອຍ ແລະ ມົນ. ມີຄວາມເຊື່ອໜຶ່ງວ່າ ການໃສ່ຊື່ແບບນັ້ນ ເພາະວ່າເມັດນ້ອຍຄືເຂົ້າທີ່ໃຊ້ເກືອໄກ່. ນອກຈາກນີ້, ຍັງສອດຄ່ອງກັບຄຳເວົ້າທີ່ວ່າ ເມັດເຂົ້າທີ່ແຕກຫັກໃນເວລາສີ ແມ່ນມີຂະໜາດນ້ອຍຫຼາຍ ຈຶ່ງເອົາໄປເກືອໄກ່ໄດ້. ມີອີກເລື່ອງເລົ່າໜຶ່ງກ່ຽວກັບຕົ້ນກຳເນີດຂອງຊື່ເຂົ້ານີ້ ໄດ້ມີແມ່ຍິງຄົນໜຶ່ງຢູ່ແຂວງເຊີນລາ ປະເທດຫວຽດນາມ ໄດ້ເຫັນເມັດເຂົ້າຕິດຢູ່ຈະຫຼອກຄໍຂອງໄກ່, ດ້ວຍເມັດເຂົ້າທີ່ມີລັກສະນະນ້ອຍ ແລະ ມົນ ທີ່ແຕກຕ່າງຈາກຊະນິດພັນເຂົ້າທີ່ມີ, ຈຶ່ງເຮັດໃຫ້ລາວສົນໃຈ ແລະ ລາວ ໄດ້ນຳເຂົ້າແນວພັນນີ້ໄປປູກ. ພາຍຫຼັງປູກແລ້ວ, ກໍໄດ້ຮັບຜົນດີ, ສີເປັນເຂົ້າສານກໍໄດ້ຮັບຜົນສູງ ແລະ ເປັນເຂົ້າທີ່ມີຄຸນຄ່າທາງໂພສະນາການ.

ເຂົ້າໄກ່ນ້ອຍ ແມ່ນປູກໂດຍສະມາຊິກຂອງຕະກຸນຄົນທີ່ໃຊ້ພາສາໄຕ-ລາວ ທີ່ລວມເອົາຊຸມຊົນທີ່ມີປະເພນີການປູກເຂົ້າ ແລະ ຕໍ່າແພໄໝ ທີ່ມີຄວາມສະໜິດແໜ້ນກັບການດຳລົງຊີວິດ. ຄົນທ້ອງຖິ່ນໃນພື້ນທີ່ທາງພູມສາດນີ້ແມ່ນຊາວນາທີ່ປູກເຂົ້າລະດູຝົນຕາມທົ່ງຮາບ ແລະ ຮ່ອມພູ ໄດ້ຮັບການຖ່າຍທອດຄວາມຮູ້ດ້ານການຜະລິດ ແລະ ການບໍລິໂພກເຂົ້າ ຈາກບັນພະບູລຸດຂອງຕົນ, ໂດຍສະເພາະແມ່ນ ຄວາມຮູ້ອັນສຳຄັນ ທາງດ້ານການຜະລິດ, ການຄັດເລືອກແນວພັນເຂົ້າ ແລະ ນຳໃຊ້ແຕ່ຝຸ່ນຄອກ, ຖືເປັນວິທີການທີ່ສຳຄັນ ເພື່ອຮັບປະກັນຄຸນນະພາບຂອງເຂົ້າ. ອາຫານຫຼັກຂອງເຂົາເຈົ້າ ແມ່ນເຂົ້າໜຽວທີ່ກວມເອົາປະມານ 80% ຂອງອາຫານທີ່ເຂົາເຈົ້າບໍລິໂພກ.

- **ລັກສະນະສະເພາະຂອງຜະລິດຕະພັນ.**

ເຂົ້າໄກ່ນ້ອຍ ແມ່ນເຂົ້າໜຽວທີ່ມີຊື່ສຽງ ເປັນທີ່ຮູ້ຈັກ ຍ້ອນລັກສະນະພິເສດທາງດ້ານຮູບຮ່າງຂອງເມັດ, ມີຂະໜາດນ້ອຍ ແລະ ປ້ອມ, ມີຄວາມຫອມທີ່ເປັນເອກະລັກ ແລະ ອ່ອນນຸ້ມໃນເວລາກິນ. ຄວາມຫອມຂອງເຂົ້າໄກ່ນ້ອຍຊຽງຂວາງ ແມ່ນຄ້າຍຄືກັນກັບຕົ້ນອົ້ມ (*Strobilanthes nivea bremek*) ທີ່ເກີດຢູ່ຕາມຫ້ວຍນ້ຳ ຢູ່ແຂວງຊຽງຂວາງ, ແລະ ຄອມຫອມແມ່ນມີລັກສະນະແຕກຕ່າງຈາກ ເຂົ້າແນວພັນອື່ນ.

ການມີສື່ສຽງຂອງເຂົ້າໄກ່ນ້ອຍຊຽງຂວາງ ສະແດງອອກໃຫ້ເຫັນຜ່ານລາຄາຊື້ຂາຍທີ່ແພງກວ່າເຂົ້າອື່ນໆໃນລາວ. ຢູ່ປະເທດຫວຽດນາມ, ເຂົ້າໄກ່ນ້ອຍຊຽງຂວາງ ແມ່ນເປັນທີ່ຕ້ອງການສູງເພື່ອເອົາໄປເຮັດອາຫານໃນບຸນປະເພນີ ເຊັ່ນ: ເຂົ້າຕົ້ມເຕ໋ດ (Banh Chung square rice cake) ທີ່ໃຊ້ສຳລັບງານບຸນປີໃໝ່. ຢູ່ທີ່ນະຄອນຫຼວງວຽງຈັນ ແລະ ເຂດອື່ນຂອງປະເທດລາວ, ຊື່ສຽງຂອງເຂົ້າໄກ່ນ້ອຍຊຽງຂວາງ ແມ່ນມີເພີ່ມຂື້ນໃນໄລຍະຫຼັງມານີ້ ເຖິງວ່າ ຜູ້ບໍລິໂພກເຄີຍໄດ້ຍິນ ກ່ຽວກັບ ຊື່ສຽງ ແລະ ຄຸນນະພາບຂອງເຂົ້າຊະນິດນີ້ມາໄດ້ຫຼາຍປີແລ້ວ. ເຂົ້າໄກ່ນ້ອຍໄດ້ຖືກສົ່ງອອກຂາຍໄປຕະຫຼາດເອີລົບ ເລີ່ມແຕ່ປີ 2006 ແລະ ມີຈຳນວນໜຶ່ງໄດ້ສົ່ງອອກຂາຍໄປບັນດາປະເທດເພື່ອນບ້ານ (ເຊັ່ນ: ຫຽດນາມ, ໄທ).

- **ການກ່ຽວພັນດ້ວຍເຫດຜົນ:**

ເຖິງແມ່ນຢີນຂອງແນວພັນເຂົ້າມີຄວາມສຳຄັນຫຼາຍຕໍ່ກັບຄວາມຫອມຂອງເຂົ້າ, ປັດໃຈອື່ນໆຫຼາຍຢ່າງກໍ່ມີຄວາມສຳຄັນຕໍ່ຄວາມຫອມຂອງເຂົ້າແນວພັນນີ້ເຊັ່ນກັນ ເຊັ່ນ: ອຸນຫະພູມຂອງອາກາດໃນໄລຍະເຂົ້າອອກມານ ແລະ ຖອກຮວງ, ປະເພດດິນ ແລະ ຝຸ່ນທຳມະຊາດ ແລະ ການເກັບມ້ຽນ. ພື້ນທີ່ທາງພູມມີສາດເປັນດິນຮາບພຽງຮັບນ້ຳຝົນ ທີ່ຕັ້ງຢູ່ເທິງຄວາມສູງຈາກລະດັບທະເລ ແມ່ນເໝາະສົມຫຼາຍສຳລັບການປູກເຂົ້າພັນທ້ອງຖິ່ນປະເພດເຂົ້າໜຽວຫອມເຊັ່ນ ເຂົ້າໄກ່ນ້ອຍຊຽງຂວາງ. ເຖິງວ່າ ຈະມີການປູກເຂົ້າໄກ່ນ້ອຍຢູ່ເຂດອື່ນຂອງລາວ, ແຕ່ບັນດາຜູ້ມີສ່ວນກ່ຽວຂ້ອງ (ຜູ້ບໍລິໂພກ, ພໍ່ຄ້າ ແລະ ນັກວິຊາການ) ຮັບຮູ້ໄດ້ວ່າ ເຂົ້າໄກ່ນ້ອຍຈາກແຂວງຊຽງຂວາງ ແລະ ແຂວງຊຽງຂວາງ ມີຄຸນນະພາບດ້ານກິ່ນຫອມ ແລະ ລົດຊາດທີ່ດີກວ່າ.

ຍ້ອນວ່າ ບັນດາເມືອງທີ່ນອນໃນເຂດພື້ນທີ່ທາງພູມສາດຂອງແຂວງຊຽງຂວາງ ແມ່ນເຂດມີຄວາມສູງຈາກລະດັບໜ້ານ້ຳທະເລ ແລະ ເປັນເຂດທີ່ມີອຸນຫະພູມຂ້ອນຂ້າງຕ່ຳ ໂດຍສະເພາະໃນໄລຍະເຂົ້າອອກມານນັ້ນ ເປັນປັດໃຈທີ່ພາໃຫ້ເມັດເຂົ້າເກີດມີຄວາມຫອມ. ໜຶ່ງໃນຫຼາຍເຫດຜົນທີ່ວ່າ ເປັນຫຍັງພາກຕາເວັນອອກສຽງເໜືອຂອງປະເທດໄທ ມີຄວາມເໝາະສົມທີ່ສຸດໃນການປູກເຂົ້າຫອມມະລິທີ່ມີຊື່ສຽງ ກໍ່ຍ້ອນວ່າ ອຸນຫະພູມທີ່ເຢັນໃນໄລຍະຫຼັງເຂົ້າເກີດດອກ ແລະ ອອກມານ. ຢູ່ປະເທດອິນເດຍ, ການກັກເກັບຄວາມຫອມຂອງເຂົ້າບາສມາຕິ (Basmati rice) ຈະໄດ້ດີທີ່ສຸດແມ່ນຍ້ອນພູມອາກາດ ຂ້ອນຂ້າງເຢັນລະຫວ່າງ 20-25°C ໄລຍະເຂົ້າສຸກເຫຼືອງ.

ເຂດພື້ນທີ່ດັ່ງກ່າວ ມີປະລິມານຝົນຕົກຂ້ອນຂ້າງຕ່ຳ ແລະ ຫູດລົງຫຼາຍໃນເດືອນກັນຍາ ໃນໄລຍະເຂົ້າສຸກເປັນການເອື້ອອຳນວຍແກ່ການສ້າງຄວາມຫອມຂອງເຂົ້າ. ການນຳໃຊ້ຝຸ່ນຄອກ ແລະ ບໍ່ໃຊ້ສານເຄມີໃນທົ່ງນາປະກອບກັບດິນຜຸຜຸ່ຍ (light soil) ໃນເຂດດັ່ງກ່າວ ພາໃຫ້ເກີດຄວາມຫອມຂອງເຂົ້າໄກ່ນ້ອຍ. ບັນດາເງື່ອນໄຂເຫຼົ່ານັ້ນ ແມ່ນເອື້ອອຳນວຍຫຼາຍໃນການຜະລິດເຂົ້າໄກ່ນ້ອຍທີ່ເປັນຊະນິດເຂົ້າອາຍຸຍາວ ແລະ ປະຊາຊົນສ່ວນໃຫຍ່ຢູ່ໃນພື້ນທີ່ທາງພູມມີສາດທີ່ກຳນົດນັ້ນ ແມ່ນປູກເຂົ້າໄກ່ນ້ອຍ.

ທີ່ຈິງ, ເຂົ້າໄກ່ນ້ອຍຊຽງຂວາງ ທີ່ປູກໃນພື້ນທີ່ພູມມີສາດແມ່ນເພື່ອການບໍລິໂພກເອງເປັນຕົ້ນຕໍ ແລະ ສ່ວນທີ່ເຫຼືອຈະນຳໄປຂາຍໃນທ້ອງຕະຫຼາດຢູ່ນະຄອນຫຼວງວຽງຈັນ ແລະ ໃນຕົວເມືອງອື່ນໆຂອງປະເທດລາວ ແລະ ຍັງໄດ້ຂາຍໄປປະເທດຫວຽດນາມ ບ່ອນທີ່ເຂົ້າໄກ່ນ້ອຍມີຊື່ສຽງ. ຄວາມຈິງແລ້ວ ການທີ່ແຂວງຊຽງຂວາງມີຊາຍແດນຕິດກັບຫວຽດນາມ ຍິ່ງເປັນການສ້າງຊື່ສຽງໃຫ້ເຂົ້າໄກ່ນ້ອຍຊຽງຂວາງ ເນື່ອງຈາກຖືກນຳໄປເຮັດເຂົ້າຕົ້ມເຕ໋ດສຳລັບງານບຸນປີໃໝ່ຫວຽດນາມ ທີ່ເອີ້ນວ່າ ເຕ໋ດຫວຽດ.

## 7. ການນຳໃຊ້ເຄື່ອງໝາຍ.

ຂໍ້ມູນຕ່າງໆ ທີ່ຕ້ອງໄດ້ມີໃນສະຫຼາກຫຸ້ມຫໍ່ ມີດັ່ງນີ້:

- "ເຂົ້າໄກ່ນ້ອຍຊຽງຂວາງ" ເປັນພາສາລາວ ຫຼື "Khao Kai Noi Xiengkhouang" ເປັນພາສາລາຕິນ ແລະ ຄຳແປເປັນພາສາທາງການຂອງອານາເຂດ ທີ່ນຳເຂົ້າໄກ່ນ້ອຍຊຽງຂວາງໄປຂາຍ ໂດຍໃຊ້ຂະໜາດຕົວໜັງສືຢ່າງໜ້ອຍໃຫ້ໃຫຍ່ເທົ່າກັບຕົວໜັງສືອື່ນ ທີ່ໃຫຍ່ທີ່ສຸດຢູ່ໃນສະຫຼາກຫຸ້ມຫໍ່.

- ຊື່ຜູ້ແປຮູບ ຫຼື ຜູ້ຫຸ້ມຫໍ່ (ຊື່ບໍລິສັດ ຫຼື ພາກສ່ວນທີ່ນໍາເຂົ້າໄກ່ນ້ອຍຊຽງຂວາງບັນຈຸລົງໃນຖົງຫຸ້ມຫໍ່), ລວມທັງທີ່ຢູ່ ແລະ ເບີໂທຕິດຕໍ່.
- ວັນທີ່ສີເຂົ້າ.
- ວັນທີໝົດອາຍຸ, ຫຼື ວັນທີ "ຄວນບໍລິໂພກກ່ອນ" ທີ່ສະແດງໃຫ້ເຫັນໄລຍະມື້ເກັບກ່ຽວ ແລະ ອາຍຸການຂອງຜະລິດຕະພັນ.
- ເລກລະຫັດງວດຜະລິດ.
- ກາໝາຍຖິ່ນກໍາເນີດແຫ່ງຊາດລາວ.
- ກາໝາຍລວມໝູ່ ສະມາຄົມເຂົ້າໄກ່ນ້ອຍຊຽງຂວາງ

# ແຜນຄວບຄຸມ

# *ຖິ່ນກຳເນີດ (GI) ເຂົ້າໄກ່ນ້ອຍຊຽງຂວາງ*




**ເລກທີຈົດທະບຽນ ໂດຍກົມຊັບສິນທາງປັນຍາທີ່ເປັນທາງການ :LA/GI/011**

| ວັນທີຍື້ງຍືນ | ວັນທີມີຜົນສັກສິດ |
|---|---|
| 16/10/2023 | 16/10/2023 |

# <u>ສາລະບານ</u>

ຄຳນຳ ........................................ 3
1 - ລະບົບກຳນົດເວລາ ຂອງ ຜະລິດຕະພັນ ........................................ 4
1.1. - ລະບົບກຳນົດເວລາທີ່ຄົບຖ້ວນ ........................................ 4
1.2. - ລາຍລະອຽດຂອງໄລຍະຕ່າງໆ ຂອງ ການຜະລິດເຂົ້າ ........................................ 5
2 - ການປະເມີນ ອົງການຈັດຕັ້ງລວມໝູ່ ເພື່ອຮັບຮອງເອົາ ແລະ ອອກໃບຢັ້ງຢືນ ຜູ້ດຳເນີນງານ ........................................ 6
3 - ຂັ້ນຕອນການປະເມີນຜູ້ດຳເນີນງານ ແລະ ອົງການຈັດຕັ້ງລວມໝູ່ ........................................ 6
3.1.1 - ການຄວບຄຸມຕົນເອງ ........................................ 7
3.1.2 - ການຄວບຄຸມພາຍໃນ ........................................ 7
3.1.3 – ການຄວບຄຸມພາຍນອກ ........................................ 8
3.3.1 - ຊາວກະສິກອນປູກເຂົ້າ (ຊາວນາ) ........................................ 11
3.3.2 – ຫົວໜ່ວຍສາງເກັບມ້ຽນ ........................................ 14
3.3.3 - ໂຮງສີ ........................................ 14
3.3.4 - ຜູ້ຫຸ້ມຫໍ່ ........................................ 15
3.3.5 ຜູ້ຄ້າ (ເປັນກິດຈະກຳທີ່ເຄັ່ງຄັດ) ........................................ 17
3.3.6 - ອົງການຈັດຕັ້ງລວມໝູ່ (ສະມາຄົມ). ........................................ 18
4.2.1 - ການຈັດການກັບການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາພາຍໃນ. ........................................ 21
4.2.2 - ການແກ້ໄຂການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາຈາກພາຍນອກ. ........................................ 22
4.3.1 - ການປະເມີນກ່ຽວກັບການລະເມີດຂໍ້ກຳນົດ ໃນລະດັບຜູ້ດຳເນີນງານ. ........................................ 24
4.3.4 - ການປະເມີນການລະເມີດ ທີ່ພົບເຫັນໃນລະດັບອົງການຈັດຕັ້ງລວມໝູ່ (ສະມາຄົມ). ........................................ 30

## ຄຳນຳ

**ຈຸດປະສົງຂອງແຜນຄວບຄຸມ:**

ແຜນຄວບຄຸມນີ້ ແມ່ນຕິດພັນກັບເອກະສານຄຸນລັກສະນະສະເພາະຖິ່ນກຳເນີດຂອງເຂົ້າໄກ່ນ້ອຍຊຽງຂວາງ ເຊິ່ງ ແມ່ນອົງການຈັດຕັ້ງລວມໝູ່ ດັ່ງນີ້:

**ສະມາຄົມຄຸ້ມຄອງຖິ່ນກຳເນີດເຂົ້າໄກ່ນ້ອຍແຂວງຊຽງຂວາງ**

- ທີ່ຢູ່: ບ້ານໂພນສະຫວ່າງ, ເມືອງແປກ, ແຂວງຊຽງຂວາງ
- ເບີໂທລະສັບ:..................................
- ອີເມວລ໌: kngimaxkg@gmail.com
- ແວັບໄຊທ໌: www.

ແຜນຄວບຄຸມນີ້ ແມ່ນອາດມີການປ່ຽນແປງ. ການດັດປັບໃດໆຂອງແຜນຄວບຄຸມນີ້ ຕ້ອງໄດ້ຮັບການອະນຸມັດ ໂດຍກົມຊັບສິນທາງປັນຍາ (ກຊປ), ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນຈະນຳອອກມານຳໃຊ້. ເມື່ອແຜນຄວບຄຸມນີ້ ໄດ້ຮັບການອະນຸມັດແລ້ວ ໂດຍ ກຊປ ໃຫ້ສົ່ງຕໍ່ໄປຍັງອົງການຈັດຕັ້ງລວມໝູ່ (ສະມາຄົມ ສົ່ງເສີມເຂົ້າໄກ່ນ້ອຍຊຽງຂວາງ).

ເນື້ອໃນເອກະສານນີ້:

- ອະທິບາຍ ໄລຍະ/ຂັ້ນຕອນຕ່າງໆ ຂອງການຜະລິດ ແລະ ຈຸດທີ່ຕ້ອງໄດ້ຮັບການກວດກາຄວບຄຸມ
- ກຳນົດປະເພດຜູ້ດຳເນີນງານທີ່ກ່ຽວຂ້ອງ
- ລະບຸບົດບາດສະເພາະຂອງ ສມຄ ສົ່ງເສີມເຂົ້າໄກ່ນ້ອຍຊຽງຂວາງ ໃນການຢັ້ງຢືນ
- ແບບແຜນຂອງການປະເມີນຂອງ ສມຄ ໂດຍອົງການກວດກາຄວບຄຸມ
- ອະທິບາຍວິທີການອອກໃບຢັ້ງຢືນ ຂອງອົງການກວດກາຄວບຄຸມ ໃຫ້ແກ່ຜູ້ດຳເນີນງານ
- ອະທິບາຍວິທີການເພື່ອກວດກາຄວບຄຸມຂະບວນການຜະລິດ ແລະ ແປຮູບເປັນຜະລິດຕະພັນ
- ແຈ້ງເຕືອນໃຫ້ມີການກວດກາຄວບຄຸມຕົນເອງ ແລະ ການກວດກາຄວບຄຸມພາຍໃນຂອງຜູ້ດຳເນີນງານ ທີ່ດຳເນີນໂດຍ ສມຄ
- ລະບຸການກວດກາຄວບຄຸມ ທີ່ດຳເນີນໂດຍອົງການກວດກາຄວບຄຸມ
- ລະບຸສະເພາະເຈາະຈົງການປະເມີນ ແລະ ການຕິດຕາມເບິ່ງ ການລະເມີດຂໍ້ກຳນົດຕ່າງໆ ໂດຍ ສມຄ

**ປະເພດຂອງຜູ້ດຳເນີນງານ ທີ່ກ່ຽວຂ້ອງ:**

- ຊາວກະສິກອນປູກເຂົ້າ (ຊາວນາ)
- ຫົວໜ່ວຍສາງເກັບມ້ຽນ
- ໂຮງສີ
- ຜູ້ຫຸ້ມຫໍ່
- ຜູ້ຄ້າ (ຄົນກາງ)

**1 - ລະບົບກຳນົດເວລາຂອງຜະລິດຕະພັນ.**

**1.1. - ລະບົບກຳນົດເວລາທີ່ຄົບຖ້ວນ.**

| **ພິດ (ທີ່ຢູ່ພາຍໃນພື້ນທີ່ ຖິ່ນກຳເນີດ)** | |
|---|---|
| ການຫວ່ານກ້າ (ແນວພັນ)<br>ການປູກ/ປັກດຳ<br>ການເກັບກ່ຽວ (ເຂົ້າ)<br>ການຕາກ | **ຊາວກະສິກອນປູກເຂົ້າ (ຊາວນາ)** |

⇩

| **ການເກັບທ້ອນໂຮມ ແລະ ເກັບມ້ຽນໃນສາງ** | |
|---|---|
| ຮັບເອົາເຂົ້າມາ (ຕາກເຂົ້າ)<br>ເກັບມ້ຽນໃນສາງ | **ຫົວໜ່ວຍສາງເກັບມ້ຽນ** |

⇩

| **ການປຸງແຕ່ງເພື່ອໃຫ້ໄດ້ມາເຊິ່ງຜະລິດຕະພັນສຸດທ້າຍ** | |
|---|---|
| ການເຮັດຄວາມສະອາດ<br>ການຄັດແຍກ<br>ການສີ | **ໂຮງສີ** |

⇩

| **ການຫຸ້ມຫໍ່** | |
|---|---|
| ເຂົ້າໃນປະລິມານລວມ<br>ຫຸ້ມຫໍ່ໃສ່ບັນຈຸພັນຂະໜາດຍ່ອຍ<br>ໃສ່ກາໝາຍ<br>ເຂົ້າທີ່ຫຸ້ມຫໍ່ແລ້ວ<br>ວາງຂາຍໃນຕະຫຼາດ | **ຜູ້ຫຸ້ມຫໍ່** |

⇩

| | |
|---|---|
| **ວາງຂາຍໃນຕະຫຼາດ** | **ຜູ້ຄ້າ** |

## 1.2. - ລາຍລະອຽດຂອງໄລຍະຕ່າງໆຂອງການຜະລິດເຂົ້າ.



**2 - ການປະເມີນອົງການຈັດຕັ້ງລວມໝູ່ ເພື່ອຮັບຮອງເອົາ ແລະ ອອກໃບຢັ້ງຢືນຜູ້ດຳເນີນງານ.**

ກິດຈະກຳການປະເມີນ ລວມມີ:

- **ການປະເມີນ** ອົງການຈັດຕັ້ງລວມໝູ່ **ເພື່ອສ້າງຄວາມເຂັ້ມແຂງ**
- **ການອອກໃບຢັ້ງຢືນ** ຜູ້ດຳເນີນງານ, ສະມາຊິກຂອງອົງການຈັດຕັ້ງລວມໝູ່

ອົງການຈັດຕັ້ງລວມໝູ່ ແລະ ຜູ້ດຳເນີນງານຕ່າງໆ ຕ້ອງໄດ້ຮັບການສ້າງຄວາມເຂັ້ມແຂງຕາມລຳດັບ ແລະ ໄດ້ຮັບການຢັ້ງຢືນ ໂດຍອົງການກວດກາຄວບຄຸມ ເພື່ອເຂົ້າມາຊ່ວຍເຫຼືອໃນຂະບວນການຜະລິດຕາມຫຼັກການຖິ່ນກຳເນີດ.

> **ການສ້າງຄວາມເຂັ້ມແຂງ** ໃຫ້ແກ່ອົງການຈັດຕັ້ງລວມໝູ່ ເພື່ອການຮັບຮອງ ກໍເພື່ອຢັ້ງຢືນເຖິງຄວາມສາມາດຂອງອົງການຈັດຕັ້ງດັ່ງກ່າວ ວ່າສາມາດປະຕິບັດ ແລະ ຮັກສາຂໍ້ກຳນົດຕ່າງໆ ທີ່ເປັນພື້ນຖານບ່ອນອີງຂອງການອອກໃບຢັ້ງຢືນ.

ການປະເມີນແມ່ນດຳເນີນໄປ ໂດຍນຳໃຊ້ການສະໜັບສະໜູນການກວດສອບສະເພາະ ທີ່ໄດ້ຮັບອະນຸຍາດໃຫ້ມີການກວດກາຈຸດຄວບຄຸມທັງໝົດ, ທີ່ຄວນຈະສະແດງໃຫ້ເຫັນຈາກອົງການຕັ້ງລວມໝູ່ ເຊັ່ນ :

- ໄດ້ສ້າງຕັ້ງຂຶ້ນ ແລະ ຮັບປະກັນວ່າມີການພັດທະນາເປັນ**ອົງການຈັດຕັ້ງ**ຕາມຂໍ້ຮຽກຮ້ອງ ເພື່ອຄວບຄຸມຄຸນນະພາບຂອງ ຜະລິດຕະພັນ ແລະ ອົງການນີ້ມີຊັບພະຍາກອນທີ່ຈຳເປັນໃນການດຳເນີນການກວດກາຄວບຄຸມພາຍໃນ ທີ່ລະບຸໃນແຜນການກວດກາຄວບຄຸມ.
- ສາມາດຕິດຕາມຄຳໝັ້ນສັນຍາ ຂອງຜູ້ດຳເນີນງານທຸກຄົນ ວ່າໄດ້ນຳໃຊ້ ແລະ ປະຕິບັດໃຫ້ສອດຄ່ອງຕາມຂໍ້ກຳນົດຂອງການຢັ້ງຢືນ ທີ່ອອກໃຫ້ໂດຍອົງການກວດກາຄວບຄຸມ.

> ວັດຖຸປະສົງຂອງການ **ຢັ້ງຢືນ ຂອງຜູ້ດຳເນີນງານແຕ່ລະຄົນ,** ທີ່ອົງການກວດກາຄວບຄຸມດຳເນີນ ແມ່ນເພື່ອການຢັ້ງຢືນ:

- **ຄວາມສາມາດຂອງຜູ້ດຳເນີນງານ ວ່າໄດ້ປະຕິບັດຕາມຂໍ້ກຳນົດຂອງ ເອກະສານຄຸນລັກສະນະສະເພາະເຂົ້າໄກ່ນ້ອຍຊຽງຂວາງ**
- **ຄວາມຍຶດໝັ້ນຂອງເຂົາເຈົ້າ ໃນການນຳໃຊ້ລາຍລະອຽດຄຸນລັກສະນະສະເພາະ ແລະ ແຜນຄວບຄຸມທີ່ກ່ຽວຂ້ອງ**

ທັນທີ, ທີ່ອົງການກວດກາຄວບຄຸມໄດ້ຮັບການຂໍການຢັ້ງຢືນ ຈາກຜູ້ດຳເນີນງານ ສົ່ງຜ່ານ ສມຄ, ອົງການກວດກາຄວບຄຸມຈະລິເລີ່ມຂັ້ນຕອນການຢັ້ງຢືນ.

ການກວດສອບເຫຼົ່ານີ້ ເຊິ່ງດຳເນີນໄປ ໂດຍນຳໃຊ້ **ການສະໜັບສະໜູນການກວດສອບສະເພາະ** ສຳລັບຜະລິດຕະພັນ. ດັ່ງນັ້ນ ຈຶ່ງຈະເຮັດໃຫ້ສາມາດສ້າງ**ບົດອະທິບາຍລາຍລະອຽດສະບັບຄົບຖ້ວນ** ກ່ຽວກັບ ພື້ນທີ່ຕົວຈິງ ຂອງຜູ້ດຳເນີນງານທີ່ກ່ຽວຂ້ອງໃນລະບົບຖິ່ນກຳເນີດ.

ເມື່ອການກວດສອບເບື້ອງຕົ້ນ ໄດ້ດຳເນີນໄປແລ້ວ ກໍ່ຈະອອກການຢັ້ງຢືນໃຫ້ທັນທີ ຖ້າທຸກໆການລະເມີດຂໍ້ກຳນົດ ໄດ້ຮັບການແກ້ໄຂ.

ການຕັດສິນໃຈກ່ຽວກັບການອອກໃບຢັ້ງຢືນ ແມ່ນສິ່ງໂດຍອົງການກວດກາຄວບຄຸມ ໃຫ້ແກ່ຜູ້ດຳເນີນງານ ພາຍໃນກຳນົດເວລາ 15 ມື້ ຈາກມື້ທີ່ໄດ້ຮັບຄຳຊີ້ແຈງ ກ່ຽວກັບການລະເມີດໃດໆທີ່ມີ. ອົງການກວດກາຄວບຄຸມ ຈະສື່ສານຂໍ້ມູນນີ້ ອອກມາພ້ອມໆກັນໄປຍັງ ສມດ.

ຂັ້ນຕອນການອອກໃບຢັ້ງຢືນໃໝ່ ຕ້ອງລິເລີ່ມຂຶ້ນໃນກໍລະນີທີ່ມີການດັດປັບເຄື່ອງມືການຜະລິດໃໝ່ຫຼາຍ ຫຼື ມີການຂະຫຍາຍຂອບເຂດພື້ນທີ່ການແຊກແຊງຊ່ວຍເຫຼືອຂອງຜູ້ດຳເນີນງານ, ລວມທັງການນຳໃຊ້ພື້ນທີ່ໃໝ່.

**3 - ຂັ້ນຕອນການປະເມີນ ຜູ້ດຳເນີນງານ ແລະ ສະມາຄົມ.**

**3.1 - ປັດໃຈທົ່ວໄປ.**

ອົງການຈັດຕັ້ງທົ່ວໄປ ສ້າງຕັ້ງຂຶ້ນມາເພື່ອຮັບປະກັນວ່າ ການອອກໃບຢັ້ງຢືນ ແມ່ນອີງໃສ່ 3 ປະເພດການກວດກາຄວບຄຸມ ດັ່ງທີ່ກຳນົດໄວ້ລຸ່ມນີ້.

**3.1.1 - ການຄວບຄຸມຕົນເອງ.**

ການກວດກາຄວບຄຸມຕົນເອງ ແມ່ນການກວດກາຄວບຄຸມ ທີ່ຈັດຕັ້ງຂຶ້ນໂດຍ ຜູ້ດຳເນີນງານ ຕໍ່ກັບກິດຈະກຳຂອງຕົນເອງ. ຜ່ານການກວດກາຄວບຄຸມ ແລະ ການບັນທຶກການດຳເນີນຕົນເອງນີ້, ຜູ້ດຳເນີນງານຕ້ອງກວດກາການປະຕິບັດຂອງຕົນໃຫ້ຄົບຖ້ວນ ທຽບໃສ່ເອກະສານຄຸນລັກສະນະຕາມຖິ່ນກຳເນີດ.

**3.1.2 - ການຄວບຄຸມພາຍໃນ.**

ການກວດກາຄວບຄຸມພາຍໃນ ຊ່ວຍໃຫ້ສະມາຄົມຮັບປະກັນວ່າມີການຕອບສະໜອງໄດ້ຕາມຂໍ້ກຳນົດໃນການອອກໃບຢັ້ງຢືນຜະລິດຕະພັນ, ເຊິ່ງຖືກຈັດຕັ້ງປະຕິບັດ ແລະ ດຳເນີນໄປ ພາຍໃຕ້ຄວາມຮັບຜິດຊອບຂອງ ສມດ..

ເພື່ອຮັບປະກັນ ຄວາມຍຶດໝັ້ນຂອງສະມາຄົມ:

- ມີຊັບພະຍາກອນມະນຸດ ແລະ ຊັບພະຍາກອນທາງດ້ານວິຊາການ ເພື່ອດຳເນີນການກວດກາຄວບຄຸມພາຍໃນ
- ອະທິບາຍສາຍພົວພັນຂອງຕົນ ກັບພະນັກງານຄວບຄຸມພາຍໃນ ຕາມທີ່ວາງອອກລຸ່ມນີ້
- ກຳນົດເອກະສານທີ່ຜູ້ດຳເນີນງານຕ້ອງໄດ້ສ້າງຂຶ້ນ ເພື່ອສະແດງໃຫ້ເຫັນ ການກວດກາຄວບຄຸມຕົນເອງຂອງຜູ້ດຳເນີນງານ ໄດ້ດຳເນີນໄປແລ້ວ
- ຮັບຮູ້ເຖິງ ຈຳນວນຜູ້ດຳເນີນງານ ແລະ ບໍລິມາດຜະລິດຕະພັນ ທີ່ມີໃນຂະແໜງການ
- ອະທິບາຍແບບແຜນ, ວິທີການດຳເນີນການກວດກາຄວບຄຸມພາຍໃນ ແລະ ມາດຕະການແກ້ໄຂຕ່າງໆ
- ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມາດຕະການແກ້ໄຂ ແລະ ແຈ້ງໃຫ້ອົງການກວດກາຄວບຄຸມຮູ້ ໃນກໍລະນີ ມີການລະເມີດ ທີ່ສ່ອນຫຼາຍ ຫຼື ຮ້າຍແຮງ ແລະ ເກີດຂຶ້ນຊໍ້າອີກ.

ການກວດກາຄວບຄຸມພາຍໃນ ແມ່ນບັນທຶກໄວ້ ເພື່ອສະໜອງຫຼັກຖານອ້າງອີງ ກ່ຽວກັບການຈັດຕັ້ງປະຕິບັດທີ່ມີປະສິດທິຜົນຂອງເຂົາເຈົ້າ. ການບັນທຶກເຫຼົ່ານີ້ ລວມເອົາທຸກຈຸດທີ່ຕ້ອງກວດກາ ໂດຍຜູ້ດຳເນີນງານ.

ແບບຟອມການກວດກາສະເພາະ ແມ່ນໄດ້ສ້າງຂຶ້ນ ແລະ ໄດ້ກວດເອົາບັນດາຈຸດທີ່ຈະກວດກາ ໃນແຕ່ລະຂັ້ນຕອນຂອງຜູ້ດຳເນີນງານ.

ຂໍ້ກຳນົດມາດຖານຕ່ຳສຸດ ໃນດ້ານ **ຄວາມສາມາດ** ແລະ **ພາລະບົດບາດ** ຂອງອົງການກວດກາຄວບຄຸມພາຍໃນ ແມ່ນກຳນົດ ແລະ ຢັ້ງຢືນ ພາຍໃນຂອບເຂດ ຂອງການກວດກາຄວບຄຸມພາຍນອກ.

| ຜູ້ດຳເນີນງານການກວດກາຄວບຄຸມ | ຄຸນນະວຸດທິນັກກວດກາຄວບຄຸມພາຍໃນ | ຄວາມຮູ້ທີ່ຮຽກຮ້ອງໃຫ້ມີ |
| --- | --- | --- |
| ຊາວກະສິກອນປູກເຂົ້າ (ຊາວນາ) | ໄດ້ຮັບການຝຶກອົບຮົມ/ການສິດສອນ<br>ມີຄຸນນະວຸດທິການສຶກສາ<br>ມີຄວາມຊຳນິຊຳນານ | ການປູກເຂົ້າ<br>ຮູ້ໄດ້ເງື່ອນໄຂການປູກເຂົ້າໄກ່ນ້ອຍແຕ່ລະຊະນິດ |
| ຜູ້ເກັບມ້ຽນ, ຜູ້ປູກເຂົ້າ, ຜູ້ແປຮູບ, ຜູ້ຄ້າ (ຄົນກາງ) | | ມີໜ້າທີ່ສ່ວນກ່ຽວຂ້ອງກັບ:<br>ອົງການຈັດຕັ້ງທີ່ເປັນສາງເກັບມ້ຽນ,<br>ການປູກເຂົ້າ,<br>ຜູ້ຫຸ້ມຫໍ່ ແລະ ຜູ້ຄ້າ (ຄົນກາງ)<br>ຄວາມຮູ້ກ່ຽວກັບການແປຮູບຜະລິດຕະພັນ |

ການກວດກາຄວບຄຸມພາຍໃນ ຕ້ອງດຳເນີນໄປ ໂດຍອົງການເອກະລາດ ຈາກຜູ້ດຳເນີນງານທີ່ໄດ້ຮັບການກວດກາຄວບຄຸມ ແລະ ຕ້ອງໄດ້ຮັບການ ແຕ່ງຕັ້ງມອບໝາຍພາລະບົດບາດຢ່າງເປັນທາງການ ໂດຍ ສມຄ ເພື່ອໃຫ້ດຳເນີນກິດຈະກຳນີ້.

ລາຍຊື່ຂອງນັກກວດກາຄວບຄຸມພາຍໃນ ແມ່ນຕ້ອງໄດ້ປັບປຸງໃໝ່ເລື້ອຍໆໃຫ້ທັນກັບສະພາບ ໂດຍກຳນົດແຕ່ລະຂົງເຂດຄວາມຊຳນານຂອງເຂົາເຈົ້າ ໃນລາຍລະອຽດ ເຊັ່ນດຽວກັນກັບ ການກວດກາຄວບຄຸມທີ່ໄດ້ມອບໝາຍໃຫ້ເຂົາເຈົ້າປະຕິບັດ.

### 3.1.3 – ການຄວບຄຸມພາຍນອກ.

ການຄວບຄຸມພາຍນອກ ແມ່ນຈັດຕັ້ງປະຕິບັດໂດຍ ອົງການກວດກາຄວບຄຸມ, ເຊິ່ງຊ່ວຍໃຫ້ຮັບປະກັນການປະຕິບັດຕາມຂໍ້ກຳນົດ ທີ່ເຊື່ອມໂຍງ ກັບການອອກໃບຢັ້ງຢືນຖິ່ນກຳເນີດ.

ອົງການຄວບຄຸມ ຈັດຕັ້ງການວາງແຜນຄວບຄຸມ ອີງຕາມຄວາມຖີ່ຂອງການກວດກາຄວບຄຸມສະເພາະ. ການຄວບຄຸມ ແມ່ນບໍ່ໄດ້ດຳເນີນຂຶ້ນ ແບບບໍ່ໄດ້ຄາດຄິດລ່ວງໜ້າ. ການກວດກາຄວບຄຸມແມ່ນດຳເນີນຂຶ້ນ ຜ່ານການສຳພາດ, ການສຶກສາເອກະສານ ແລະ ການກວດກາຕົວຈິງໃນພາກສະໜາມ. ຜູ້ກວດສອບ ຢັ້ງຢືນຢ່າງເປັນລະບົບ ໃນລະຫວ່າງການລົງກວດກາ

ເບິ່ງການດຳເນີນການແກ້ໄຂຕ່າງໆ ທີ່ໄດ້ເຮັດ ຫຼັງຈາກກຳນົດໄດ້ວ່າມີການລະເມີດໃດໜຶ່ງ ໃນລະຫວ່າງທີ່ໄດ້ມີການກວດກາຄວບຄຸມພາຍໃນ ແລະ/ຫຼື ການກວດກາຄວບຄຸມພາຍນອກ ໄດ້ດຳເນີນຂຶ້ນ ແລະ ມີຜົນສັກສິດ.

ໄດ້ມີການຈັດຕັ້ງການສະໜັບສະໜູນການຄວບຄຸມສະເພາະຂຶ້ນ ກວມເອົາທຸກໆຈຸດທີ່ຕ້ອງໄດ້ຮັບການກວດກາ ໃນລະຫວ່າງການລົງຢ້ຽມຢາມຜູ້ດຳເນີນງານແຕ່ລະຄັ້ງ.

### 3.2 - ບົດອະທິບາຍ/ເອກະສານທີ່ສົ່ງ ລະຫວ່າງ ການຄວບຄຸມພາຍໃນ ແລະ ການຄວບຄຸມພາຍນອກ.

ຕາຕະລາງສັງລວມລຸ່ມນີ້ ສະແດງໃຫ້ເຫັນ ສຳລັບຜູ້ດຳເນີນງານແຕ່ລະຄົນ ແລະ ສຳລັບແຕ່ລະໄລຍະທີ່ສຳຄັນ ຂອງລະບົບກຳນົດເວລາຂອງຜະລິດຕະພັນ ເຖິງບົດອະທິບາຍລະຫວ່າງ ການຄວບຄຸມພາຍນອກ ທີ່ດຳເນີນໂດຍ ອົງການຄວບຄຸມ ແລະ ການກວດກາຄວບຄຸມພາຍໃນ ທີ່ດຳເນີນໂດຍສະມາຄົມ ເອກະສານເຫຼົ່ານີ້ລະບຸເຖິງຄວາມຖີ່ຕໍ່າສຸດ ສຳລັບການກວດກາຄວບຄຸມແຕ່ລະປະເພດ.

| *ຜູ້ດຳເນີນງານ* | ຄວາມຖີ່ຕໍ່າສຸດໃນການຄວບຄຸມ | |
|---|---|---|
| | **ການຄວບຄຸມພາຍໃນ** | **ການຄວບຄຸມພາຍນອກ** |
| **ສະມາຄົມ** | / | 1 ຫາ 2 ຄັ້ງ / ປີ |
| **ຊາວກະສິກອນ** | XX % / ປີ | XX % / ປີ |
| **ຫົວໜ່ວຍສາງເກັບມ້ຽນ** | XX % / ປີ | XX % / ປີ |
| **ໂຮງສີ** | XX % / ປີ | XX % / ປີ |
| **ຜູ້ຫຸ້ມຫໍ່** | XX % / ປີ | XX % / ປີ |
| **ຜູ້ຄ້າ (ຄົນກາງ)** | XX % / ປີ | XX % / ປີ |
| **ການວິເຄາະຜະລິດຕະພັນ ທາງດ້ານເຄມີ ແລະ ກາຍະພາບ** | X ເລກລະຫັດງວດ / ປີ | X ເລກລະຫັດງວດ / ປີ |

## 3.3 - ຕາຕະລາງແຜນຄວບຄຸມລະອຽດ.

# ຊ່ວຍໃນການອ່ານແຜນຄວບຄຸມ

ມາດຖານທີ່ກຳນົດ ເຂົ້າໄກ່ນ້ອຍຖິ່ນກຳເນີດ ຕາມເອກະສານຄຸນລັກສະນະສະເພາະ

ອົງປະກອບແຜນຄວບຄຸມ ພາຍໃນ/ພາຍນອກ

**ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ**

ບ່ອນອີງ, ຂັ້ນຕອນ, ຄຳແນະນຳ...

ເອກະສານຈັດທະບຽນ

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ຄ່າສະເລ່ຍທີ່ຄາດໝາຍໄວ້ | ການຄວບຄຸມຕົນເອງ / Self-Control (SC)<br>ການຄວບຄຸມພາຍໃນ / Internal Control (IC)<br>ການຄວບຄຸມພາຍນອກ / External Control (EC) External Control (EC) | ວິທີການ | ການດຳເນີນການແກ້ໄຂ / Correction Action (CA)<br>ການດຳເນີນການປັບປຸງ / Remedial Action (RA) | ປັດໃຈອ້າງອີງ ແລະ ອົງປະກອບທີ່ເປັນຫຼັກຖານຢັ້ງຢືນ |
|---|---|---|---|---|---|---|
| PM6<br>MPC | | | | | | |

**ການດຳເນີນການແກ້ໄຂ (Correction Action – CA) =** ການດຳເນີນການທີ່ເປັນໄປໄດ້ທັນທີ ເພື່ອຈັດການກັບຜະລິດຕະພັນທີ່ບໍ່ປະຕິບັດຕາມມາດຖານ

**ການດຳເນີນການປັບປຸງ (Remedial Action – RA) =** ການດຳເນີນການທີ່ເປັນໄປໄດ້ ທີ່ລົງໃສ່ ລຶບລ້າງສິ່ງຜິດພາດເຫຼົ່ານັ້ນ ແລະ ປ້ອງກັນການເກີດຂຶ້ນໃໝ່ ໂດຍຜ່ານການວິເຄາະສາເຫດຂອງການລະເມີດແລ້ວ

**PM =** ຈຸດທີ່ຕ້ອງໄດ້ກວດກາ

**MPC =** ຈຸດຫຼັກທີ່ຕ້ອງໄດ້ຄວບຄຸມ

- ສິ່ງປະຈັກຕາ (ໃນພາກສະໜາມ)
- ວັດແທກ (ໃນພາກສະໜາມ)
- ບັນທຶກເປັນລາຍລັກອັກສອນ
- ວິເຄາະຢູ່ຫ້ອງທົດລອງ

| | ແຜນຄວບຄຸມ | ເອກະສານອ້າງອີງ:........... |
|---|---|---|
| | ເຂົ້າໄກ່ນ້ອຍຊຽງຂວາງຖິ່ນກຳເນີດ | *18/* 07/ 2023<br>11 / 28 |

## 3.3.1 - ຊາວກະສິກອນປູກເຂົ້າ (ຊາວນາ).

| ລະຫັດ | ຈຸດທີ່ຕ້ອງໄດ້ກອດກາ | ເປົ້າໝາຍກອດກາ | ການຄວບຄຸມຕົນເອງ / Self-Control (SC) ການຄວບຄຸມພາຍໃນ / Internal Control (IC) / ການຄວບຄຸມພາຍນອກ / External Control (EC) | | ວິທີການ | ການດຳເນີນການແກ້ໄຂ - Correction Action (CA) ການດຳເນີນການປັບປຸງ / Remedial Action (RA) | ບ່ອນອີງ ແລະ ອີງປະກອບທີ່ເປັນຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM0 | ການເປັນສະມາຊິກຂອງຊາວກະສິກອນປູກເຂົ້າ ແລະ ເອກະສານທີ່ເຂົາເຈົ້າມີໃນປະຈຸບັນ | - ຊາວກະສິກອນເປັນສະມາຊິກຂອງອົງການຈັດຕັ້ງຊາວກະສິກອນ.<br>- ຊາວກະສິກອນ ສາມາດຮູ້ໄດ້ຂະບວນການຜະລິດຕາມຂໍ້ກຳນົດຕ່າງໆ ຂອງເອກະສານຄຸນລັກສະນະ ແລະ ແຜນຄວບຄຸມເປັນຂໍ້ບັງຄັບໃຊ້ (ຫຼື ມີເອກະສານສະບັບຄັດຈ້ອນ). | SC | - ຜູ້ປູກເຂົ້າ/ຊາວກະສິກອນທີ່ເປັນສະມາຊິກ ຂອງສະມາຄົມ<br>- ຂໍ້ກຳນົດຂອງເອກະສານຖິ່ນກຳເນີດ (ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ) ທີ່ມີຜົນນຳໃຊ້. | | CA:ຂະບວນການຮັບເອົາເຂົ້າເປັນສະມາຊິກ ທີ່ເປັນທາງການ ຫຼື ການປົດອອກຈາກກຸ່ມ.<br>CA: ຄົ້ນຄືນເອກະສານປະຈຸບັນ. | - ເອກະສານບັນທຶກການປະຕິບັດຕາມ ແລະ ຄຳປະຕິຍານຂອງຊາວກະສິກອນປູກເຂົ້າ (ຊາວນາ).<br>-ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມທີ່ມີຜົນບັງຄັບໃຊ້. |
| | | | IC<br>EC | **ການຢັ້ງຢືນວ່າມີເອກະສານໃນປັດຈຸບັນ (ເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ) ໃຫ້ຊາວກະສິກອນປູກເຂົ້າ (ຊາວນາ).** | | | |
| PM1<br>MPC | ການຄັດເລືອກ ແນວພັນທີ່ນຳມາໃຊ້ | ການປະຕິບັດຕາມແນວພັນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ | SC | - ມີລາຍຊື່ແນວພັນເຂົ້າທີ່ອະນຸຍາດໃຫ້ນຳໃຊ້<br>- ການນຳໃຊ້ແນວພັນເຂົ້າ ຈາກລາຍງານທີ່ອະນຸຍາດໃຫ້ໃຊ້ | | CA: ປົດອອກຈາກກຸ່ມ | - ລາຍຊື່ ແລະ ການນຳໃຊ້ແນວພັນ ທີ່ອະນຸຍາດໃຫ້ໃຊ້. |
| | | | IC<br>EC | **ມີລາຍຊື່ແນວພັນເຂົ້າ ທີ່ອະນຸຍາດໃຫ້ໃຊ້ ແລະ ໄດ້ມີການປະຕິບັດຕາມຂໍ້ກຳນົດໃຫ້ນຳໃຊ້ແນວພັນ** | | | |
| PM2<br>MPC | ຈຸດທີ່ຕັ້ງຂອງ ຜືນນາ | ຜືນນາ ຕັ້ງຢູ່ເຂດພູມມີສາດຂອງຖິ່ນກຳເນີດ | SC | ການກຳນົດຜືນນາ ແມ່ນທັນກັບສະພາບ ໃນແຜນທີ່ຈົດທະບຽນທີ່ດິນ | | CA: ການຖອດຖອນຜືນນາ ທີ່ຢູ່ນອກເຂດອອກ | - ແຜນທີ່ຈົດທະບຽນທີ່ດິນ<br>- ແບບຟອມການເປັນສະມາຊິກ ແລະ ແບບຟອມມອບໝາຍ ຜືນນາ ? |
| | | | IC<br>EC | **ການຢັ້ງຢືນ ການປະຕິບັດຕາມ ພື້ນທີ່ທາງພູມສາດ ຂອງ ຖິ່ນກຳເນີດ** | | | |
| PM3<br>MPC | ລະດັບຄວາມສູງ ຂອງຜືນນາຈາກລະດັບໜ້ານ້ຳທະເລ | ຜືນນາ ຕັ້ງຢູ່ໃນລະດັບຄວາມສູງເໜືອລະດັບນ້ຳທະເລ 600 ຫາ 1200 ແມັດ | SC | ການແຈ້ງລະດັບຄວາມສູງຂອງຜືນນາ ແມ່ນເປັນຂໍ້ມູນໃໝ່ທັນກັບສະພາບປັດຈຸບັນທີ່ລະບຸໃນແຜນທີ່ຈົດທະບຽນທີ່ດິນ | | CA: ການຖອດຖອນຜືນນາ ທີ່ມີຄວາມສູງຕ່ຳກວ່າລະດັບຄວາມສູງຕ່ຳສຸດທີ່ກຳນົດໃຫ້ | - ແຜນທີ່ຈົດທະບຽນທີ່ດິນ<br>- ແມັດວັດແທກລະດັບຄວາມສູງ<br>- ແບບຟອມການເປັນສະມາຊິກ ຫຼື ແບບຟອມ ມອບໝາຍ ຜືນນາ? |
| | | | IC<br>EC | **ການຢັ້ງຢືນ ການປະຕິບັດຕາມລະດັບຄວາມສູງຕ່ຳສຸດ** (≤700ມ) | | | |

| | ແຜນຄວບຄຸມ | ເອກະສານອ້າງອີງ:........... |
|---|---|---|
| | *ເຂົ້າໄກ່ນ້ອຍຊຽງຂວາງຖິ່ນກຳເນີດ* | *18/* 07/ 2023<br>12 / 28 |

| | | | | | | | |
|---|---|---|---|---|---|---|---|
| PM4 | ການຄັດເລືອກ ແນວພັນ | ບໍ່ໃຊ້ແນວພັນທີ່ຊື້-ຂາຍກັນທົ່ວໄປ | SC | ການຄັດເລືອກແນວພັນ ໂດຍຊາວກະສິກອນປູກເຂົ້າ (ຊາວນາ) ທີ່ຄັດເລືອກມາຈາກຮວງເຂົ້າທີ່ແຂງແຮງ | | CA: ການຖອດຖອນ ຊຸດແນວພັນອອກ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ຕາຕະລາງສະໜອງແນວພັນ |
| | | | IC EC | **ການຢັ້ງຢືນຂະບວນການຄັດເລືອກແນວພັນ** | | | |
| PM5 | **ໄລຍະການກະກຽມການຕົກກ້າ** | ໄດ້ກະກຽມຕົກກ້າ ລະຫວ່າງທ້າຍເດືອນເມສາ ຫາ ທ້າຍເດືອນພຶດສະພາ | SC | ປະຕິບັດຕາມໄລຍະເວລາການກະກຽມໜານກ້າ | | CA: ການຖອດຖອນ ຜົນນາ ທີ່ບໍ່ໄປຕາມກຳນົດເວລາ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC EC | **ການຢັ້ງຢືນໄລຍະເວລາກະກຽມການຕົກກ້າ** | | | |
| PM6 | **ການກະກຽມ**ແນວພັນ | ການໝ່າແນວພັນ 2 ຫາ 3 ມື້ ແລະ ສະເດັດນ້ຳໄວ້ 2 ຫາ 3 ມື້ | SC | ປະຕິບັດຕາມຂະບວນການໝ່າແນວພັນ ແລະ ການສະເດັດນ້ຳ | | CA: ການຖອດຖອນ ໜານກ້າທີ່ບໍ່ໄດ້ ຕາມກຳນົດ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ. | - ບັນທຶກກ່ຽວກັບພືດ |
| | | | IC EC | **ການຢັ້ງຢືນການປະຕິບັດຕາມ ຂະບວນການໝ່າແນວພັນ ແລະ ການສະເດັດນ້ຳ** | | | |
| PM7 | **ການກະກຽມຕາກ້າ** | ການໄຖຕາກ້າ ແລ້ວປະໄວ້ 1 ຫາ 2 ອາທິດ ກ່ອນຕົກກ້າ | SC | ປະຕິບັດຕາມການກຽມດິນດ້ວຍການໄຖ ການປະດິນທີ່ໄຖແລ້ວໄວ້ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC EC | **ການຢັ້ງຢືນ ການປະດິນທີ່ໄຖແລ້ວໄວ້ຕາມໄລຍະທີ່ແນະນຳ** | | | |
| PM8 | **ການກະກຽມດິນ** | ການໄຖຕາກ້າ ນຳໃຊ້ຄວາຍ ຫຼື ລົດໄຖນາເດີນຕາມ | SC | ປະຕິບັດຕາມຄຳແນະນຳໃຫ້ນຳໃຊ້ເຄື່ອງມືການໄຖ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ<br>- KKN good practices document |
| | | | IC EC | **ຢັ້ງຢືນການປະຕິບັດຕາມ ຕາມຄຳແນະນຳໃຫ້ນຳໃຊ້ເຄື່ອງມືການໄຖ** | | | |
| PM9 | **ການຫວ່ານ**ກ້າ | ການຫວ່ານກ້າ ດ້ວຍຄວາມຖີ່ 10 ຫາ 15 ກິໂລກຼາມ ສຳລັບການປັກດຳທີ່ຈະນຳໃຊ້ກ້າກິບດຽວ ແລະ 40 ຫາ 80 ກິໂລກຼາມ ຕໍ່ເຮັກຕາ ສຳລັບການປັກດຳທີ່ຈະນຳໃຊ້ຕົ້ນກ້າ 2-4 ຕົ້ນຕໍ່ສຸມ ຂອງເນື້ອທີ່ແປງນາ | SC | ປະຕິບັດຕາມຄຳແນະນຳດ້ານຄວາມຖີ່ຂອງການຫວ່ານແນວພັນ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| | | | IC EC | **ຢັ້ງຢືນການ ປະຕິບັດຕາມຄຳແນະນຳດ້ານຄວາມຖີ່ຂອງການຫວ່ານແນວພັນ** | | | |
| PM10 | **ການໃສ່ຝຸ່ນບຳລຸງດິນ** | ການໃສ່ຝຸ່ນບຳລຸງດິນ ດ້ວຍຝຸ່ນຊີວະພາບ (ຝຸ່ນຄອກ, ຝຸ່ນຂຽວ, ຝຸ່ນບົ່ມ, ນ້ຳໝັກຊີວະພາບ). ຫ້າມໃຊ້ ປຸຍເຄມີ ພາຍຫຼັງໄລຍະຕົກກ້າ. | SC | ຂະບວນການໃສ່ຝຸ່ນ ຕາມການແນະນຳ ໃນເອກະສານຈົດທະບຽນພືດ | | CA: ຖອດຖອນຜົນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ການຢັ້ງຢືນການປະຕິບັດຕາມວິທີການໃສ່ຝຸ່ນບຳລຸງດິນທີ່ແນະນຳໃຫ້ໃຊ້** | | | |

| | | |
|---|---|---|
| | # ແຜນຄວບຄຸມ | ເອກະສານອ້າງອີງ:……….. |
| | *ເຂົ້າໄກ່ນ້ອຍຊຽງຂວາງຖິ່ນກຳເນີດ* | *18/* 07/ 2023 |
| | |  |

| | | | | | | | |
|---|---|---|---|---|---|---|---|
| PM11 | **ການ**ກະກຽມຕາກ້າ | ການໄຖຮຸດນາ ປະໄວ້ 1 ຫາ 2 ອາທິດ ແລະ ໄຖໂຄ້ນຄັ້ງທີສອງ ກ່ອນດຳນາ | SC | ປະຕິບັດຕາມການກຽມດິນດ້ວຍການໄຖ ການປະດິນທີ່ໄຖແລ້ວໄວ້ | 👁 📄 | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ປະຕິທິນການປູກພືດ |
| PM12 | **ອາຍຸຂອງກ້າ ສຳລັບການປັກດຳ** | ຕົ້ນກ້າມີອາຍຸ 15 ຫາ 40 ມື້ ສຳລັບການປັກດ | SC | ປະຕິບັດຕາມອາຍຸກ້າ ກ່ອນປັກດຳ | 👁 📄 | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| PM13 | **ຂະບວນການປັກດຳ** | ສຳເລັດການປັກດຳນາດ້ວຍມື ໂດຍໃສ່ 1 ຫາ 8 ຕົ້ນ ຕໍ່ສຸມ ທີ່ມີໄລຍະຫ່າງກັນ 20 ຫາ 40 ຊມ | SC | ປະຕິບັດຕາມຂະບວນການປັກດຳກ້າ | 👁 📄 | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ ຫຼືກສຸມກ້າທີ່ບໍ່ຖືກຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງຮອມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ການຢັ້ງຢືນ ຂະບວນການປັກດຳກ້າ** | 👁 📄 | | |
| PM14 | **ການບໍລະບັດຮັກສາທົ່ງນາເຂົ້າ** | ມີການຮັກສາລະດັບນໍ້າໃຫ້ພຽງພໍ ຈົນຮອດມື້ກ່ຽວເຂົ້າ | SC | ປະຕິບັດຕາມວິທີການບໍລະບັດຮັກສາທົ່ງນາ | 👁 📄 | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ຢັ້ງຢືນ ວິທີການບໍລະບັດຮັກສາທົ່ງນາ** | 👁 📄 | | |
| PM15 | ການຫຼີກຫຍ້າ ອອກຈາກທົ່ງນາເຂົ້າ | ຫຼີກຫຍ້າດ້ວຍມື ແລະ/ຫຼື ເຄື່ອງຈັກ.<br>ຫ້າມນຳໃຊ້ຢາເຄມີປາບສັດຕູພືດ ຫຼື ຢາຂ້າຫຍ້າ | SC | ປະຕິບັດຕາມວິທີການຫຼີກຫຍ້າ ແລະ ຂໍ້ຫ້າມການນຳໃຊ້ຢາຂ້າແມງໄມ້/ຢາຂ້າຫຍ້າ | 👁 📄 | CA: ຖອດຖອນຜືນນາທີ່ບໍ່ໄດ້ຕາມຂໍ້ກຳນົດ<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ຢັ້ງຢືນການ ປະຕິບັດຕາມວິທີການຫຼີກຫຍ້າ ແລະ ຂໍ້ຫ້າມການນຳໃຊ້ຢາປາບ ສັດຕູພືດ/ຢາຂ້າຫຍ້າ** | 👁 📄 | | |
| PM16 | **ໄລຍະເວລາກ່ຽວ**ເຂົ້າ | ເລີ່ມກ່ຽວເຂົ້າເມື່ອຮອດ 120 ຫາ 180 ວັນ ນັບຈາກໄລຍະຫວ່ານກ້າ | SC | ປະຕິບັດຕາມກຳນົດເວລາສຳລັບການເກັບກ່ຽວ | 👁 📄 | CA: ການປິດບ່ອນທີ່ບໍ່ປະຕິບັດຕາມ ກຳນົດຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ຢັ້ງຢືນການ ປະຕິບັດຕາມກຳນົດເວລາສຳລັບການເກັບກ່ຽວ** | 👁 📄 | | |
| PM17 | **ກ່ຽວ**ເຂົ້າ**ດ້ວຍມື** ຫຼື ເຄື່ອງຈັກ | ກ່ຽວເຂົ້າດ້ວຍມືເທົ່ານັ້ນ | SC | ປະຕິບັດຕາມຄຳແນະນຳໃຫ້ເກັບກ່ຽວດ້ວຍມື | 👁 📄 | CA: ການປິດບ່ອນທີ່ບໍ່ປະຕິບັດຕາມ ກຳນົດຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ຢັ້ງຢືນການ ປະຕິບັດຕາມຄຳແນະນຳໃຫ້ເກັບກ່ຽວດ້ວຍມື** | 👁 📄 | | |
| PM18 | **ຕາກ**ເຂົ້າ | ຕາກຝ່ອນເຂົ້າໃສ່ແດດເປັນເວລາ 3 ຫາ 5 ວັນ | SC | ປະຕິບັດຕາມຂະບວນການຕາກ ແລະ ການປະໄວ້ໃຫ້ແຫ້ງ | 👁 📄 | CA: ການປິດບ່ອນທີ່ບໍ່ປະຕິບັດຕາມ ກຳນົດຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກກ່ຽວກັບພືດ<br>- ບັນທຶກການຕາກ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |
| | | | IC EC | **ຢັ້ງຢືນການ ປະຕິບັດຕາມຂະບວນການຕາກ ແລະ ການປະໄວ້ໃຫ້ແຫ້ງ** | 👁 📄 | | |
| PM19 | **ຟາດເຂົ້າ** | ຟາດເຂົ້າດ້ວຍມື ຫຼື ເຄື່ອງຈັກ | SC | ປະຕິບັດຕາມຄຳແນະນຳຂະບວນການຟາດ | 👁 📄 | CA: ການປິດບ່ອນທີ່ບໍ່ປະຕິບັດຕາມ ກຳນົດຂໍ້ | - ບັນທຶກກ່ຽວກັບພືດ |

| | | | | | | | |
|---|---|---|---|---|---|---|---|
| | | ຟາດເຂົ້າ | IC<br>EC | **ຢັ້ງຢືນການ ປະຕິບັດຕາມຄຳແນະນຳຂະບວນການຟາດ** | 👁 📄 | ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບັນທຶກການຟາດເຂົ້າ<br>- ຕາຕະລາງ<br>- ເອກະສານກ່ຽວກັບວິທີປະຕິບັດທີ່ດີ ກ່ຽວກັບ ເຂົ້າໄກ່ນ້ອຍ |

## 3.3.2 – ຫ້ອງໜ່ວຍສາງເກັບມ້ຽນ.

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | | ວິທີການ | ການດຳເນີນການແກ້ໄຂ (Correction Action – CA)<br>ການດຳເນີນການປິ່ວແປງ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM20 | **ສະພາບເງື່ອນໄຂການເກັບມ້ຽນໃນສາງ** | ເກັບມ້ຽນໃນເລົ້າທີ່ສະອາດ ຫຼື ເປົາທີ່ສະອາດບໍ່ເຄີຍບັນຈຸຫຍັງມາກ່ອນ, ຫ້າມນຳໃຊ້ກະສອບປຸ໋ຍ ຫຼື ຖົງທີ່ໄດ້ນຳໃຊ້ບັນຈຸແນວອື່ນມາແລ້ວ ແລະ ເກັບມ້ຽນແຍກອອກຈາກເຂົ້າຊະນິດອື່ນ | SC | - ການຕິດຕາມກວດກາ ແລະ ປະຕິບັດຕາມ ເງື່ອນໄຂການເກັບມ້ຽນ | 👁 📄 | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆກ່ຽວກັບໂຄງລ່າງພື້ນຖານຂອງສາງເກັບມ້ຽນ. | - ແຜນກໍ່ສ້າງ<br>- ເອກະສານການບົວລະບັດຮັກສາ |
| | | | IC<br>EC | **-ຢັ້ງຢືນສະພາບເງື່ອນໄຂການເກັບມ້ຽນ** | 👁 📄 | | |
| PM21 | **ໄລຍະເວລາການເກັບມ້ຽນໃນສາງ** | ເຂົ້າທີ່ເກັບມ້ຽນໄວ້ບໍ່ເກີນ 12 ເດືອນ ນັບແຕ່ມື້ເກັບກ່ຽວກ່ອນມື້ສີເຂົ້າ | SC | - ຮັກສາບັນທຶກການເກັບມ້ຽນ ແລະ ຕາຕະລາງການເກັບມ້ຽນ | 👁 📄 | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆກ່ຽວກັບໂຄງລ່າງພື້ນຖານຂອງສາງເກັບມ້ຽນ. | - ບັນທຶກການເກັບມ້ຽນ<br>- ຕາຕະລາງການເກັບມ້ຽນ |
| | | | IC<br>EC | **- ການຢັ້ງຢືນໄລຍະເວລາການເກັບມ້ຽນ**<br>**- ການຢັ້ງຢືນບັນທຶກການເກັບມ້ຽນ ແລະ ຕາຕະລາງການເກັບມ້ຽນ** | 👁 📄 | | |

## 3.3.3 - ໂຮງສີ.

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | | ວິທີການ | ການດຳເນີນການແກ້ໄຂ (Correction Action – CA)<br>ການດຳເນີນການປິ່ວແປງ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM20 | **ໄລຍະເວລາ ການ** | ບໍ່ສາມາດເກັບມ້ຽນເຂົ້າໄວ້ ດົນ | SC | - ການຮັກສາບັນທຶກການເກັບມ້ຽນ ແລະ ຕາຕະລາງການເກັບມ້ຽນ | 👁 📄 | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດ | - ບັນທຶກການເກັບມ້ຽນ |

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | ວິທີການ | ການດໍາເນີນການແກ້ໄຂ (Correction Action – CA)<br>ການດໍາເນີນການປ້ອງກັນ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| | **ເກັບມ້ຽນ** | ກວ່າ 12 ເດືອນ ພາຍຫຼັງມື້ເກັບກ່ຽວ ຮອດ ມື້ສີ | IC<br>EC | **- ການຢັ້ງຢືນໄລຍະເວລາການເກັບມ້ຽນ**<br>**- ການຢັ້ງຢືນບັນທຶກການເກັບມ້ຽນ ແລະ ຕາຕະລາງການເກັບມ້ຽນ** | | ຕາມຂໍ້ກໍານົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນໍາຕ່າງໆກ່ຽວກັບໂຄງລ່າງພື້ນຖານຂອງສາງເກັບມ້ຽນ. | - ຕາຕະລາງການເກັບມ້ຽນ |
| PM21 | **ສະພາບເງື່ອນໄຂການເກັບມ້ຽນພາຍຫຼັງສີເຂົ້າ** | ເຂົ້າທີ່ເກັບມ້ຽນໄວ້ບໍ່ເກີນ 12 ເດືອນ ນັບແຕ່ມື້ເກັບກ່ຽວ ກ່ອນມື້ສີເຂົ້າ | SC | -ປະຕິບັດຕາມການສີດ້ວຍເຄື່ອງຈັກ | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກໍານົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນໍາຕ່າງໆ | - ບັນທຶກການສີ<br>- ຕາຕະລາງ |
| | | | IC<br>EC | **-ການຢັ້ງຢືນຂະບວນການສີ** | | | |
| PM22 | **ຂະບວນການສີ** | ສີເຂົ້າດ້ວຍໂຮງສີ ແລະ ຕໍາດ້ວຍຄົກມອງ (ມອງນໍ້າ ຫຼື ມອງຕໍາດ້ວຍແຮງງານຄົນ) ເທົ່ານັ້ນ. | SC | - ການຮັກສາບັນທຶກການເກັບຊື້, ປັດໃຈນໍາເຂົ້າ-ອອກ ແລະ ບັນທຶກການຂາຍ. | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກໍານົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນໍາຕ່າງໆ | - ບັນທຶກການສີເຂົ້າ<br>- ບັນທຶກການເຮັດວຽກແຕ່ລະຄັ້ງ<br>- ບັນທຶກການສ້ອມແປງ ແລະ ບໍາລຸງ |
| | | | IC<br>EC | **- ການຢັ້ງຢືນຂະບວນການສີ**<br>**- ການຢັ້ງຢືນບັນທຶກການສ້ອມແປງ ແລະ ບໍາລຸງຮັກສາໂຮງສີ.** | | | |

## 3.3.4 - ຜູ້ຫຸ້ມຫໍ່.

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | ວິທີການ | ການດໍາເນີນການແກ້ໄຂ (Correction Action – CA)<br>ການດໍາເນີນການປ້ອງກັນ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM23 | **ການຫຸ້ມຫໍ່** | ເຂົ້າມາຈາກໂຮງສີທີ່ໄດ້ຮັບການກວດກາ ແລະ ຢັ້ງຢືນຖິ່ນກໍາເນີດ | SC | - ການຮັກສາບັນທຶກການເກັບຊື້, ປັດໃຈນໍາເຂົ້າ-ອອກ ແລະ ບັນທຶກການຂາຍ. | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກໍານົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນໍາຕ່າງໆ | - ໃບຮຽກເກັບເງິນ ແລະ ໃບບິນ<br>- ໃບນໍາສົ່ງ<br>- ບັນທຶກການຊື້ ແລະ ຂາຍ |
| | | | IC<br>EC | **- ກວດກາເລກງວດຂອງເຂົ້າທີ່ຊື້ມາແຕ່ຕົ້ນທາງ ແລະ ຜູ້ສະໜອງ.**<br>**- ກວດກາຄວາມສອດຄ່ອງຂອງຕົວເລກເຂົ້າ ລະຫວ່າງ ການຊື້ ແລະ ການຂາຍ.**<br>**- ກວດຂໍ້ມູນທີ່ລົງບັນຊີໄວ້ ແລະ ສາມາດກວດກາຍ້ອນກັບເຖິງທີ່ມາຂອງເຂົ້າ.** | | | |

| | ແຜນຄວບຄຸມ | ເອກະສານອ້າງອີງ:........... |
|---|---|---|
| | *ເຂົ້າໄກ່ນ້ອຍຊຽງຂວາງຖິ່ນກຳເນີດ* | *18/* 07*/* 2023<br>16 / 28 |

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | | ວິທີການ | ການດຳເນີນການແກ້ໄຂ (Correction Action – CA)<br>ການດຳເນີນການປ້ອງກັນ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM24 | ໄດ້ປະຕິບັດ**ຕາມ**ຄຸນ **ລັກສະນະທາງກາຍ ຍະພາບ**ຂອງເມັດ ເຂົ້າສານ | ນ້ຳໜັກຂອງເມັດເຂົ້າສານ 1,000 ເມັດ = 17.8 ຫາ 23.42 ກຼາມ<br>ຄວາມຍາວ = 4.16 ມມ ຫາ 5.83 ມມ<br>ຄວາມກວ້າງ = 2,62 to 3.2 ມມ<br>ຄວາມໜາ = 1,67 to 2.05 ມມ | SC | - ປະຕິບັດໄດ້ຕາມຂະໜາດວັດແທກ (90% ຕ້ອງໄດ້ຕາມກຳນົດ) | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບົດລາຍງານການທົດສອບ ຫຼື ການວິໃຈ<br>- ການຕອບການທົດສອບຕົວຈິງທາງກາຍະພາບ |
| | | | IC<br>EC | **- ການຢັ້ງຢືນຕາມຂະໜາດວັດແທກ (90% ຕ້ອງໄດ້ຕາມກຳນົດ)**<br>**- ປະຕິບັດໄດ້ຕາມຂະໜາດວັດແທກ ໃນຕົວຢ່າງການທົດສອບ** | | | |
| PM25 | ລະດັບຄວາມຊຸ່ມ | ລະດັບຄວາມຊຸ່ມ (ຕາກໃຫ້ແຫ້ງ) ບໍ່ເກີນ 14% | SC | - ປະຕິບັດໄດ້ຕາມຂະໜາດວັດແທກ | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບົດລາຍງານການທົດສອບ ຫຼື ການວິໃຈ<br>- ການຕອບການທົດສອບຕົວຈິງທາງກາຍະພາບ |
| | | | IC<br>EC | **-ການຢັ້ງຢືນ ຜົນການວິໃຈການປະຕິບັດໄດ້ຕາມ**<br>**- ປະຕິບັດໄດ້ ຈາກຜົນຂອງການວິໃຈ** | | | |
| | | | IC<br>EC | **- ການຢັ້ງຢືນ ຜົນການວິໃຈການປະຕິບັດໄດ້ຕາມ**<br>**- ປະຕິບັດໄດ້ ຈາກຜົນຂອງການວິໃຈ** | | | |
| PM26 | **ອັດຕາສ່ວນເມັດເຂົ້າຫັກ** | ເມັດເຂົ້າຫັກຢ່າງໜ້ອຍເຫຼືອ 80% ຂອງຂະໜາດເມັດ | SC | -- ປະຕິບັດໄດ້ຕາມຂະໜາດວັດແທກ | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງລວມຂໍ້ແນະນຳຕ່າງໆ | - ບົດລາຍງານການທົດສອບ ຫຼື ການວິໃຈ<br>- ການຕອບການທົດສອບຕົວຈິງທາງກາຍະພາບ<br>- ຕາຕະລາງບັນທຶກເມັດເຂົ້າຫັກ |
| | | | IC<br>EC | **- ການຢັ້ງຢືນ ຜົນການວິໃຈການປະຕິບັດໄດ້ຕາມ**<br>**- ປະຕິບັດໄດ້ ຈາກຜົນຂອງການວິໃຈ** | | | |

## 3.3.5 ຜູ້ຄ້າ (ເປັນກິດຈະກຳທີ່ເຄັ່ງຄັດ).

| ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ເປົ້າໝາຍກວດກາ | ການຄວບຄຸມຕົນເອງ (Self-Control (SC)<br>ການຄວບຄຸມພາຍໃນ (Internal Control (IC))/ ການຄວບຄຸມພາຍນອກ (External Control (EC)) | | ວິທີການ | ການດຳເນີນການແກ້ໄຂ (Correction Action – CA)<br>ການດຳເນີນການປົວແປງ Remedial Action (RA) | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|---|---|
| PM27 | ການໃສ່ກາໝາຍ | **ເງື່ອນໄຂການນຳໃຊ້ເຄື່ອງໝາຍ**<br>*- ຂຽນເປັນພາສາລາວ ເຂົ້າໄກ່ນ້ອຍ; ພາສາລາຕົນ (Small Sicken Rice) ແລະ ພາສາຝະລັ່ງ (Riz petit poussin)*<br>- ອາດຈະເພີ່ມຊື່ແນວພັນເຂົ້າສະເພາະອີກ<br>- ອະທິບາຍເຂດພູມມີສາດຂອງແຫຼ່ງທີ່ມາ :ຈາກແຂວງຊຽງຂວາງ ໃສ່ເບື້ອງໜ້າ ຫຼື ຫຼັງຂອງພາສະນະການຫຸ້ມຫໍ່<br>- ຊື່ຂອງຜູ້ຂາຍ<br>- ຕິດກາໝາຍເຂົ້າໄກ່ນ້ອຍຖິ່ນກຳເນີດ<br>- ຕິດການໝາຍຖິ່ນກຳເນີດແຫ່ງຊາດ | SC | ປະຕິບັດໃຫ້ສອດຄ່ອງກັບເງື່ອນໄຂການຫຸ້ມຫໍ່ ແລະ ການນຳໃຊ້ກາໝາຍ | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງຮວມຂໍ້ແນະນຳຕ່າງໆ ສິ່ງທີ່ຈະຕ້ອງໃຫ້ສອດຄ່ອງໃນການຈັດພິມ | - ສິ່ງທີ່ສາມາດພິສູດໄດ້<br>- ສາງເກັບສິ່ງຫຸ້ມຫໍ່ ແລະ ສະຫຼາກ |
| | | | IC<br>EC | **- ການຢັ້ງຢືນ ປະຕິບັດໃຫ້ສອດຄ່ອງກັບການຫຸ້ມຫໍ່ ແລະ ກາໝາຍ**<br>**- ມີເຄື່ອງມືການບັນທຶກ** | | | |
| PM28 | ການກວດກາຢ້ອນກັບ | ການຢັ້ງຢືນການກວດກາຢ້ອນກັບ ແລະ ເຄື່ອງມືການບັນທຶກ | SC | - ບັນທຶກການຊື້, ປັດໃຈນຳເຂົ້າທີ່ເປັນວັດສະດຸ, ຜົນຜະລິດ ແລະ ການຂາຍ | | CA: ເພີກຖອນເຂົ້າງວດດັ່ງກ່າວທີ່ບໍ່ປະຕິບັດຕາມຂໍ້ກຳນົດ ອອກ.<br>RA: ສະຫຼຸບສັງຮວມຂໍ້ແນະນຳຕ່າງໆ | -ໃບຮຽກເກັບເງິນ<br>-ເອກະສານນຳສົ່ງ<br>-ບັນທຶກການຊື້ ແລະ ການຂາຍ |
| | | | IC<br>EC | **- ກວດຄວາມກົມກຽວ ລະຫວ່າງ ການຊື້ ແລະ ການຂາຍ** | | | |
| | | | IC<br>EC | **- ການຢັ້ງຢືນ ຜົນການວິໄຈການປະຕິບັດໄດ້ຕາມ**<br>**- ປະຕິບັດໄດ້ ຈາກຜົນຂອງການວິໄຈ** | | | |

## 3.3.6 - ອົງການຈັດຕັ້ງລວມໝູ່ (ສະມາຄົມ).

| ຫົວຂໍ້ | ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ການຄວບຄຸມພາຍນອກ (External Control (EC)) | ວິທີການ | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|
| ການຈັດການທົ່ວໄປ ແລະ ການຈັດແຈງທາງ ດ້ານເອກະສານ | PM29 | ການປະຕິບັດຕາມ ຂັ້ນຕອນ ການກຳນົດຖິ່ນກຳເນີດ (ຄຳ ປະຕິຍານຂອງຜູ້ດຳ ເນີນງານ, ການປະເມີນ ສະມາຊິກໃໝ່, ອື່ນໆ). | **ການຢັ້ງຢືນການປະຕິບັດຕາມຂັ້ນຕອນ GI**<br>**- ການຈັດຕັ້ງ ແລະ ການຄົງຕົວ**<br>**- ສະຖານະພາບ ແລະ ລະບຽບພາຍໃນ**<br>**- ສັນຍາຂອງອົງການຄວບຄຸມ**<br>**- ສັນຍາການເປັນສະມາຊິກ**<br>**- ເອກະສານຄຸນລັກສະນະສະເພາະຖິ່ນກຳເນີດ** | | - ການຈັດຕັ້ງ ແລະ ການຄົງຕົວ ຂອງ ອົງການຈັດຕັ້ງລວມໝູ່<br>- ສະຖານະພາບ ແລະ ລະບຽບພາຍໃນຂອງອົງການຈັດຕັ້ງລວມໝູ່<br>- ສັນຍາຂອງອົງການຄວບຄຸມ<br>- ສັນຍາການເປັນສະມາຊິກ<br>- ເອກະສານຄຸນລັກສະນະສະເພາະຖິ່ນກຳເນີດ) |
| | PM30 | ການຄຸ້ມຄອງ ບັນທຶກເປັນ ເອກະສານ | **- ຄວບຄຸມ ແລະ ຕິດຕາມເອກະສານທາງການ, ເອກະສານຄວບຄຸມຄຸນນະພາບ.**<br>**- ຂັ້ນຕອນສຳລັບການຄວບຄຸມການບັນທຶກເປັນເອກະສານ ແລະ ການແຈກຢາຍ ເອກະສານ.**<br>**- ການຢັ້ງຢືນ ການດັດປັບລາຍຊື່ຜູ້ດຳເນີນງານທີ່ໄດ້ຮັບອະນຸຍາດ ແລະ ລາຍຊື່ແນວ ພັນ ທີ່ສາມາດນຳໃຊ້ໄດ້ສຳລັບເຂົ້າໄກ່ນ້ອຍ.** | | -?? |
| | PM31 | ການຄຸ້ມຄອງບັນຊີສາງ | **ການກວດກາເບິ່ງຄວາມສະເໝີຕົ້ນສະເໝີປາຍລະຫວ່າງ ປະລິມານທີ່ຜະລິດ ແລະ ປະລິມານທີ່ຂາຍ.** | | -?? |
| | PM32 | ການຄຸ້ມຄອງການສົ່ງເສີມ | **ຄວບຄຸມປັດໃຈການສົ່ງເສີມທີ່ນຳໃຊ້** | | -?? |
| ການຝຶກອົບຮົມ ແລະ ຂໍ້ມູນສຳລັບ ຜູ້ດຳເນີນ ງານ | PM33 | ການແຈກຢາຍ ເອກະສານ ດ້ານ ຄຸນນະພາບ ໃຫ້ແກ່ຜູ້ດຳເນີນງານ | **ການຢັ້ງຢືນການແຈກຢາຍຂໍ້ມູນ ແລະ ເອກະສານດ້ານ ຄວາມສາມາດກວດກາຍ້ອນ ກັບໄດ້ ໃຫ້ແກ່ສະມາຊິກ** | | -?? |
| ການຝຶກອົບຮົມ ແລະ ຂໍ້ມູນ ສຳລັບ ຜູ້ດຳເນີນ ງານ | PM34 | ກອງປະຊຸມວິຊາການ | **ການຄວບຄຸມບັນທຶກກອງປະຊຸມ** | | -?? |

| ຫົວຂໍ້ | ລະຫັດ | ຈຸດທີ່ຕ້ອງໄດ້ກວດກາ | ການຄວບຄຸມພາຍນອກ (External Control (EC)) | ວິທີການ | ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ |
|---|---|---|---|---|---|
| ການຝຶກອົບຮົມ | PM35 | ກອງປະຊຸມວິຊາການ | - ຕິດຕາມການປະຕິບັດຕາມແຜນຝຶກອົບຮົມທີ່ສ້າງໄວ້.<br>- ການຢັ້ງຢືນ ບັນທຶກການລົງທະບຽນຝຶກອົບຮົມທີ່ໄດ້ດຳເນີນແລ້ວ. | | -?? |
| ການຕິດຕາມ ຜູ້ດຳເນີນງານ | PM36 | ສມຄ | ທົບທວນ :<br>- ຂັ້ນຕອນສຳລັບຄຸ້ມຄອງການຄວບຄຸມພາຍໃນ ແລະ ການມອບໝາຍໃຫ້ຮັບເໝົາຕໍ່.<br>- ສັນຍາຂອງອົງການຄວບຄຸມພາຍໃນ ກັບອົງການຈັດຕັ້ງລວມໝູ່.<br>- ຄວາມສາມາດຂອງອົງການຄວບຄຸມພາຍໃນ. | | -?? |
| ການຕິດຕາມ ຜູ້ດຳເນີນງານ | PM37 | ການຕິດຕາມການຄວບຄຸມພາຍນອກ | ການຕິດຕາມການປະຕິບັດຕາມ:<br>- ການຄຸ້ມຄອງການຄວບຄຸມພາຍໃນ (ຄວາມຖີ່, ການຄວບຄຸມ ແລະ ການທົດສອບ).<br>- ຂັ້ນຕອນສຳລັບຈັດການກັບການລະເມີດກົດໝາຍ ທາງພາຍໃນ ແລະ/ຫຼື ພາຍນອກ.<br>ການທົບທວນ ແລະ ຕິດຕາມ:<br>- ບົດລາຍງານການຄວບຄຸມພາຍໃນ: ການສະໜັບສະໜູນການຄວບຄຸມ, ແບບຟອມລາຍງານການລະເມີດ.<br>- ການອີໃຈ ທີ່ໄດ້ດຳເນີນຂຶ້ນ (ສານຕົກຄ້າງຈາກຢາຂ້າແມງໄມ້).<br>- ການຕິດຕາມການອີໃຈແບບປຽບທຽບ (ຊາວນາ, ຫົວໜ່ວຍສາງເກັບມ້ຽນ, ໂຮງສີ...).<br>- ບັນທຶກການຄຸ້ມຄອງການລະເມີດ.<br>- ແຟ້ມເອກະສານບັນທຶກການລົງໂທດ. | | -?? |
| ການຕິດຕາມ ຜູ້ດຳເນີນງານ | PM38 | ການຕິດຕາມຊຸກຍູ້ ການດຳເນີນການແກ້ໄຂ ຜູ້ດຳເນີນງານ | ການຢັ້ງຢືນ:<br>- ບັນທຶກມາດຕະການດຳເນີນແກ້ໄຂ<br>- ການຕິດຕາມມາດຕະການດຳເນີນການແກ້ໄຂ.<br>- ການຖ່າຍທອດຂໍ້ມູນ ໄປຍັງ ອົງການຄວບຄຸມ. | | -?? |

| | | |
|---|---|---|
| | **ແຜນຄວບຄຸມ** | ເອກະສານອ້າງອີງ:........... |
| | *ເຂົ້າໄກ່ນ້ອຍຊຽງຂວາງຖິ່ນກຳເນີດ* | *18/* 07/ 2023<br>20 / 28 |

| **ຫົວຂໍ້** | **ລະຫັດ** | **ຈຸດທີ່ຕ້ອງໄດ້ກວດກາ** | **ການຄວບຄຸມພາຍນອກ (External Control (EC))** | **ວິທີການ** | **ປັດໃຈອ້າງອີງ ແລະ ຫຼັກຖານຢັ້ງຢືນ** |
|---|---|---|---|---|---|
| ການຕິດຕາມ ຜູ້ດຳເນີນງານ | PM39 | ການຄຸ້ມຄອງ ການປະຕິບັດຕາມ<br>(ຜູ້ບໍລິໂພກ, ລູກຄ້າ...) | **- ກວດກາການປະຕິບັດຕາມ ຂັ້ນຕອນການຄຸ້ມຄອງ ແລະ ບັນທຶກການຮ້ອງຮຽນ.<br>- ການຢັ້ງຢືນ ວິທີທາງທີ່ຈັດຕັ້ງປະຕິບັດເພື່ອຮັບປະກັນວ່າມີການຖ່າຍທອດຄຳຮ້ອງຮຽນ ຂອງລູກຄ້າ ໄປຍັງອົງການຄວບຄຸມ.<br>- ການກວດກາ ແລະ ຕິດຕາມ ການຈັດການກັບຄຳຮ້ອງຮຽນຂອງລູກຄ້າ.** | | -?? |

## 4 - ການແກ້ໄຂການລະເມີດຂໍ້ກຳນົດ.

### 4.1 - ອີງປະກອບລວມ.

**ການທີ່ບໍ່ສາມາດປະຕິບັດຕາມ** ຂໍ້ກຳນົດຂອງເອກະສານຄຸນລັກສະນະສະເພາະ ແລະ/ຫຼື ລະບົບການກວດກາ ແມ່ນຈະຕ້ອງໄດ້ດຳເນີນການ **ປັບປຸງ ແລະ ແກ້ໄຂ ຢ່າງເປັນລະບົບ ໂດຍຜູ້ດຳເນີນການ** ແລະ/ຫຼື ສະມາຄົມ ຊຶ່ງຂຶ້ນກັບລະດັບການລະເມີດ.

ການລະເມີດແມ່ນ ສາມາດຈັດເປັນປະເພດຕ່າງໆ ອີງຕາມ 3 ລະດັບ:

ການລະເມີດ **ເລັກນ້ອຍ**: ບໍ່ປະຕິບັດຕາມຂໍ້ກຳນົດຂອງເອກະສານຄຸນລັກສະນະສະເພາະ **ມີຜົນກະທົບຕ່ຳ ຕໍ່ຄຸນລັກສະນະຂອງຜະລິດຕະພັນ** ຫຼື **ສິ່ງຜົນໃຫ້ມີການສູນເສຍລັກສະນະສະເພາະໂຕ ຫຼື ຄວາມສາມາດໃນການກວດກາຍ້ອນກັບ ມີຜົນກະທົບທີ່ຕ່ຳ**.

ການລະເມີດ **ສ່ວນຫຼາຍ**: ການບໍ່ປະຕິບັດຕາມ ຂໍ້ກຳນົດໃດໜຶ່ງຂອງເອກະສານຄຸນລັກສະນະສະເພາະ ທີ່ສົ່ງຜົນສະທ້ອນເຖິງຄຸນລັກສະນະຂອງຜະລິດຕະພັນ ຫຼື ວິທີທາງເກັບກຳເອົາຜະລິດຕະພັນມາ ຫຼື ນຳໄປສູ່ການສູນເສຍເອກະລັກສ່ວນໂຕ ຫຼື ຄວາມສາມາດ**ໃນການກວດກາຍ້ອນກັບ** ມີຜົນກະທົບທີ່ ຮ້າຍແຮງ ນອກເໜືອຈາກຄຸນລັກສະນະພື້ນຖານ ທີ່ຮຽກຮ້ອງໃຫ້ປະຕິບັດຕາມຫຼັກການຖິ່ນກຳເນີດ.

ການລະເມີດ **ທີ່ຮ້າຍແຮງ**: ການບໍ່ປະຕິບັດຕາມ ຂໍ້ກຳນົດຂອງເອກະສານຄຸນລັກສະນະສະເພາະ ທີ່ກ່ຽວຂ້ອງກັບ **ຄຸນລັກສະນະພື້ນຖານຂອງຖິ່ນກຳເນີດ** ຫຼື **ການປະຕິເສດການຄວບຄຸມ**.

### 4.2 - ການປະເມີນ ແລະ ການຕິດຕາມການລະເມີດ.

ຄວາມບົກພ່ອງທີ່ພົບເຫັນໃນລະຫວ່າງການລົງກວດກາຢູ່ພາກສະໜາມ ຫຼື ການວິເຄາະຜະລິດຕະພັນ ແມ່ນຈະຖືກປະເມີນອີງຕາມຂໍ້ຂອງການລະເມີດ ແລະ ການລົງໂທດ.

#### 4.2.1 - ການຈັດການກັບການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາພາຍໃນ.

ໃນ **ກໍລະນີເກີດການລະເມີດ** ໃນລະຫວ່າງດຳເນີນການກວດກາພາຍໃນ, ນັກກວດກາພາຍໃນ ເຮັດບົດລາຍງານການກວດກາ. ຈາກນັ້ນ ບົດລາຍງານການກວດກາດັ່ງກ່າວ ຈະຖືກສົ່ງໄປຫາຜູ້ດຳເນີນການ ພ້ອມກັບບົດບັນທຶກ ການປະຕິບັດຕາມຂໍ້ກຳນົດ ແລະ ຄຳສະເໜີໃຫ້ມີການຊີ້ແຈງ.

ຜູ້ດຳເນີນການສົ່ງຄຳຊີ້ແຈງທີ່ຄົບຖ້ວນ ເພື່ອໃຫ້ນັກກວດກາພາຍໃນກວດສອບ ຊຶ່ງຈະເປັນຜູ້ຢັ້ງຢືນກ່ຽວກັບ ຄວາມຖືກຕ້ອງ ແລະ ຄວາມມີປະສິດທິຜົນຂອງການປົຕິບັດມາດຕະການປັບປຸງ ແລະ ແກ້ໄຂ ທີ່ໄດ້ແຈ້ງໃຫ້ຊາບ.

ໃນກໍລະນີທີ່ເກີດ **ການບໍ່ປະຕິບັດຕາມຂໍ້ກຳນົດຂັ້ນຮ້າຍແຮງຊ້ຳຊ້ອນ**, ນັກກວດກາພາຍໃນ ຕ້ອງໄດ້ແຈ້ງຫາ **ສະມາຄົມ ຫຼື ພາກສ່ວນໃຫ້ການຢັ້ງຢືນພາຍໃນເວລາ 48 ຊົ່ວໂມງ** ພາຍຫຼັງການກວດກາ. ພາກສ່ວນໃຫ້ການຢັ້ງຢືນ ຈະເປັນຜູ້ດຳເນີນການຕໍ່ການລະເມີດລັກສະນະນີ້.

**4.2.2 - ການແກ້ໄຂການລະເມີດ ທີ່ພົບເຫັນໃນລະຫວ່າງການກວດກາຈາກພາຍນອກ.**
ພາກນີ້ ເວົ້າເຖິງການແກ້ໄຂການລະເມີດຂໍ້ກຳນົດ ທີ່ພົບເຫັນໃນລະຫວ່າງ ການກວດກາຈາກພາຍນອກ ຫຼື ການວິໄຈໃນຫ້ອງທົດລອງ.

✓ **ການຕິດຕາມ ການລະເມີດຂໍ້ກຳນົດ.**

ໃນກໍລະນີມີການລະເມີດໃດໜຶ່ງເກີດຂຶ້ນ ພາກສ່ວນໃຫ້ການຢັ້ງຢືນຈະແຈ້ງການລະເລີດດັ່ງກ່າວ ຜ່ານທາງແບບຟອມບັນທຶກການລະເມີດ.

ຜູ້ດຳເນີນງານ ມີເວລາ 3 ອາທິດ ນັບຈາກວັນທີ່ໄດ້ຮັບແຈ້ງການ ເພື່ອສະເໜີວິທີສຳລັບການປັບປຸງ.

ກົມຊັບສິນທາງປັນຍາ ເປັນຜູ້ດຳເນີນການລົງໂທດ ໃນກໍລະນີ**ມີການລະເມີດຮ້າຍແຮງ ແລະ/ຫຼື ຊ້ຳຊ້ອນ ຊຶ່ງຈະສົ່ງຜົນກະທົບຕໍ່ລັກສະນະສະເພາະຂອງສິນຄ້າ ຫຼື ວິທີການຜະລິດ** ແລະ/ຫຼື ພາໃຫ້ເກີດບັນຫາທີ່ກ່ຽວຂ້ອງກັບ ສຸຂະອານາໄມ, ຄວາມປອດໄພຂອງສິນຄ້າ, ອື່ນໆ. ພາກສ່ວນໃຫ້ການຢັ້ງຢືນ ເປັນຜູ້ຕັດສິນໃຈກ່ຽວກັບ **ການດຳເນີນການໃນທັນທີ** ໂດຍມີການສື່ສານກັບສະມາຄົມ ແລະ/ຫຼື ຜູ້ດຳເນີນການທີ່ກ່ຽວຂ້ອງ ໄວເທົ່າທີ່ເປັນໄປໄດ້. ໃນທາງກັບກັນ ຜູ້ດຳເນີນການຕ້ອງໄດ້ແຈ້ງພາກສ່ວນໃຫ້ການຢັ້ງຢືນ ກ່ຽວກັບ ການປະຕິບັດມາດຕະການປັບປຸງ ພາຍໃນເວລາ **15 ວັນ.**

ການຕັດສິນໃຈໃດໜຶ່ງຂອງພາກສ່ວນໃຫ້ການຢັ້ງຢືນ ຈະຖືກແຈ້ງຫາສະມາຄົມ/ຜູ້ດຳເນີນການພາຍໃນເວລາ 07 ວັນ, ໂດຍມີການລະບຸເຫດຜົນ ແລະ ມາດຕະການທີ່ຕ້ອງໄດ້ປະຕິບັດ.

**ການຢັ້ງຢືນ** ກ່ຽວກັບ ມາດຕະການປັບປຸງ ທີ່ສະເໜີໂດຍຜູ້ດຳເນີນການ ຈະເຮັດໃນຮູບແບບການສຶກສາເອກະສານ ຫຼື ໃນລະຫວ່າງການຕິດຕາມຈາກພາຍນອກ ຫຼື ໃນໄລຍະທີ່ມີການກວດກາສະເພາະເພີ່ມເຕີມ. ຕາງໜ້າຂອງພາກສ່ວນໃຫ້ການຢັ້ງຢືນ ເປັນຜູ້ຢັ້ງຢືນວ່າ ມາດຕະການປັບປຸງ ທີ່ຜູ້ດຳເນີນການປະຕິບັດນັ້ນ ມີປະສິດທິຜົນ ແລະ ລວມມີຂໍ້ມູນເພີ່ມເຕີມໃດໜຶ່ງ ທີ່ມີການຮ້ອງຂໍ.

✓ **ການລົງໂທດ.**
ການລົງໂທດແມ່ນກຳນົດ ແລະ ແຈ້ງໃຫ້ຊາບໂດຍພາກສ່ວນໃຫ້ການຢັ້ງຢືນ. ການລົງໂທດ ຈະຖືກແຈ້ງໃຫ້ຊາບ ອີງຕາມຕາຕະລາງໃນພາກ 4.3 - ການປະເມີນການລະເມີດຂໍ້ກຳນົດ ແລະ ການລົງໂທດ ໂດຍພາກສ່ວນໃຫ້ການຢັ້ງຢືນ. ລະດັບການປະເມີນຈະບໍ່ກວມລວມທັງໝົດ ແລະ ຈະຖືກນຳໃຊ້ເປັນພື້ນຖານ ສຳລັບເປັນບ່ອນອີງ ແລະ ເປັນທິດທາງສຳລັບການຕັດສິນໃຈ. ໝາຍຄວາມວ່າ ແຕ່ລະການລະເມີດທີ່ພົບເຫັນ ແມ່ນຈະມີການລົງໂທດທີ່ແຕກຕ່າງກັນໄປ.

ການຕັດສິນໃຈກ່ຽວກັບການລົງໂທດ ຈະຖືກດຳເນີນການໃນຂັ້ນສຸດທ້າຍໂດຍພາກສ່ວນໃຫ້ການຢັ້ງຢືນເທົ່ານັ້ນ ໂດຍມີການພິຈາລະນາສະພາບແວດລ້ອມ (ປະຫວັດ, ຄວາມຕື່ນຕົວຂອງຜູ້ດຳເນີນການ....) ແລະ ການປະເມີນຂອງພາກສ່ວນໃຫ້ການຢັ້ງຢືນ.

ການລົງໂທດໃດໜຶ່ງ ອາດເປັນຫົວຂໍ້ຂອງ**ການອຸທອນ**ຂອງຜູ້ດຳເນີນການຕໍ່ ສ່ວນໃຫ້ການຢັ້ງຢືນ.

ພາກສ່ວນໃຫ້ການຢັ້ງຢືນ ແຈ້ງໃຫ້ກົມຊັບສິນທາງປັນຍາຮັບຊາບ ກ່ຽວກັບ ການລົງໂທດໃດໜຶ່ງ ທີ່ເປັນສາເຫດເຮັດໃຫ້ຜູ້ດໍາເນີນການເສຍສິດນໍາໃຊ້ຖິ່ນກໍາເນີດ ພາຍໃນໄລຍະເວລາ 07 ວັນ ຫຼັງຈາກມື້ທີ່ດໍາເນີນການຕັດສິນໃຈ.

## 4.3 - ການປະເມີນການລະເມີດຂໍ້ກຳນົດ ແລະ ການລົງໂທດ ໂດຍອີງການຄວບຄຸມ.

### 4.3.1 - ການປະເມີນກ່ຽວກັບການລະເມີດຂໍ້ກຳນົດ ໃນລະດັບຜູ້ດຳເນີນງານ.

| ລະຫັດ | ຈຸດທີ່ຕ້ອງກວດກາ | ຂໍ້ລະເມີດ | ຈຸດທີ່ໄດ້ຄວບຄຸມ | ການປັບປຸງແກ້ໄຂຄັ້ງທີໜຶ່ງ | ວິທີການຢັ້ງຢືນເຖິງຄວາມສອດຄ່ອງ | ການປັບປຸງແກ້ໄຂຄັ້ງທີສອງ ແລະ ການຢັ້ງຢືນເຖິງຄວາມສອດຄ່ອງ | ການປັບປຸງແກ້ໄຂຄັ້ງທີສາມ ແລະ ການຢັ້ງຢືນເຖິງຄວາມສອດຄ່ອງ |
|---|---|---|---|---|---|---|---|
| PM0 | - ຊາວກະສິກອນເປັນສະມາຊິກຂອງອົງການຈັດຕັ້ງຊາວກະສິກອນ.<br>- ຊາວກະສິກອນ ສາມາດຮູ້ໄດ້ຂະບວນການຜະລິດຕາມຂໍ້ກຳນົດຕ່າງໆ ຂອງເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ ທີ່ເປັນຂໍ້ບັງຄັບໃຊ້ (ຫຼື ມີເອກະສານສະບັບຄັດຈ້ອນ). | ບໍ່ມີເອກະສານສະໜອງໃຫ້ ແລະ ບໍ່ມີເອກະສານທີ່ກ່ຽວຂ້ອງ | ປັບປຸງ | ການປະຕິເສດໃນການຂໍການຢັ້ງຢືນຊົ່ວຄາວ | ການກວດກາເອກະສານ ຕື່ມອີກ | ການປະຕິເສດໃນການຂໍການຢັ້ງຢືນ | / |
| PM0 | - ຊາວກະສິກອນເປັນສະມາຊິກຂອງອົງການຈັດຕັ້ງຊາວກະສິກອນ.<br>- ຊາວກະສິກອນ ສາມາດຮູ້ໄດ້ຂະບວນການຜະລິດຕາມຂໍ້ກຳນົດຕ່າງໆ ຂອງເອກະສານຄຸນລັກສະນະ ແລະ ແຜນຄວບຄຸມ ທີ່ເປັນຂໍ້ບັງຄັບໃຊ້ (ຫຼື ມີເອກະສານສະບັບຄັດຈ້ອນ). | ບໍ່ມີເອກະສານສະໜອງໃຫ້ ແລະ ບໍ່ມີເອກະສານທີ່ກ່ຽວຂ້ອງ | ຕິດຕາມ | ແຈ້ງເຕືອນ | ການຕິດຕາມພາຍໃນ ຫຼື ພາຍນອກຄັ້ງຕໍ່ໄປ ຫຼື ການກວດກາເອກະສານ ຕື່ມອີກ | ການກວດກາພາກສະໜາມເພີ່ມເຕີມ (ຢູ່ໃນລະຫວ່າງການກວດກາ) | ການຂະຫຍາຍຂໍການຢັ້ງຢືນອອກໄປອີກ (ການກວດກາເພີ່ມເຕີມ) |
| PM1 | ການປະຕິບັດຕາມແນວພັນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ | ນຳໃຊ້ແນວພັນທີ່ບໍ່ໄດ້ຮັບອະນຸຍາດ | ປັບປຸງ | ການປະຕິເສດຂໍການຢັ້ງຢືນຊົ່ວຄາວ | ການກວດກາເອກະສານເພີ່ມເຕີມ | ການປະຕິເສດການຂໍການຢັ້ງຢືນ | / |
| PM1 | ການປະຕິບັດຕາມແນວພັນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ | ນຳໃຊ້ແນວພັນທີ່ບໍ່ໄດ້ຮັບອະນຸຍາດ | ຕິດຕາມ | ການຖອດຖອນປ້າຍຖິ່ນກຳເນີດ | ການກວດກາເອກະສານ ຕື່ມອີກ | ການຖອດຖອນປ້າຍຖິ່ນກຳເນີດ (ການກວດກາເພີ່ມເຕີມ) | ການຂະຫຍາຍຂໍການຢັ້ງຢືນອອກໄປອີກ (ການກວດກາເພີ່ມເຕີມ) |
| PM2 | ຜືນນາ ຕັ້ງຢູ່ເຂດພູມມີສາດຂອງຖິ່ນກຳເນີດ | ຜືນນາຢູ່ນອກພື້ນທີ່ຈີໄອ | ປັບປຸງ | ການປະຕິເສດຂໍການຢັ້ງຢືນ | / | / | / |
| PM2 | ຜືນນາ ຕັ້ງຢູ່ເຂດພູມມີສາດຂອງຖິ່ນກຳເນີດ | ຜືນນາຢູ່ນອກພື້ນທີ່ຈີໄອ | ຕິດຕາມ | ການຖອດຖອນປ້າຍຖິ່ນກຳເນີດ | ການກວດກາພາກສະໜາມ ຕື່ມອີກ | ການຖອດຖອນຂໍການຢັ້ງຢືນ | / |

| | | | | | | | |
|---|---|---|---|---|---|---|---|
| PM3 | ຜືນນາ ຕັ້ງຢູ່ໃນລະດັບຄວາມສູງເໜືອ ລະດັບນ້ຳທະເລ 600 ຫາ 1200 ແມັດ | ຜືນນາຢູ່ຕ່ຳກວ່າລະດັບຄວາມສູງຈາກໜ້າ ນ້ຳທະເລທີ່ກຳນົດໄວ້ | ປັບປຸງ | ການປະຕິເສດຂໍການຢັ້ງຢືນ | / | / | / |
| PM3 | ຜືນນາ ຕັ້ງຢູ່ໃນລະດັບຄວາມສູງເໜືອ ລະດັບນ້ຳທະເລ 600 ຫາ 1200 ແມັດ | ຜືນນາຢູ່ຕ່ຳກວ່າລະດັບຄວາມສູງຈາກໜ້າ ນ້ຳທະເລທີ່ກຳນົດໄວ້ | ຕິດຕາມ | ການຖອດຖອນປ້າຍຖິ່ນກຳເນີດ | ການກວດກາພາກສະໜາມ ຕື່ມອີກ | ການຖອດຖອນຂໍການຢັ້ງຢືນ | / |
| PM4 | ບໍ່ໃຊ້ແນວພັນທີ່ຊື້-ຂາຍກັນທົ່ວໄປ | ນຳໃຊ້ແນວພັນທີ່ມີສານເຄມີ | ປັບປຸງ | ການປະຕິເສດຂໍການຢັ້ງຢືນຊົ່ວຄາວ | ການກວດກາພາກສະໜາມ ຕື່ມອີກ | ການປະຕິເສດການຂໍການຢັ້ງຢືນ | / |
